# ການພິຈາລະນາຕາມຂໍ້ລົບລ້າງຄະດີແພ່ງ ຢູ່ສານປະຊາຊົນພາກກາງ

# The Cessations of Civil Case Consideration In Central People's Court

ໂດຍ: ທ້າວ ສິງເພັດ ວັລຈີວ

ວິທະຍານິພົນປະລິນຍາໂທ
ຫຼັກສູດປະລິນຍາໂທນິຕິສາດ
ມະຫາວິທະຍາໄລແຫ່ງຊາດ

2017

# ການພິຈາລະນາການຂໍລົບລ້າງຄະດີແພ່ງ
# ຢູ່ສານປະຊາຊົນພາກກາງ
# The Cessations of Civil Case Consideration In Central People's Court

ວິທະຍານິພົນນີ້ດຳເນີນຕາມຫຼັກສູດການສຶກສາປະລິນຍາໂທນິຕິສາດ
ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ,
ໄດ້ຜ່ານການປ້ອງກັນຄັ້ງວັນທີ 09 ກັນຍາ 2017

ໂດຍ: ທ້າວ ສິງເພັດ ວໍລະຈິດ
**Mr. Singphet Vorachit**
ລະຫັດນັກສຶກສາ: **MFLA 0051/14**

ວິທະຍານິພົນນີ້ເປັນສ່ວນໜຶ່ງຕາມຫຼັກສູດການສຶກສາປະລິນຍາໂທນິຕິສາດ
ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
2017

ວິທະຍານິພົນນີ້ຮັບຮອງໂດຍ:

ທ່ານ ສຈ. ດາວອນ ທວ່າງວິຈິດ, ອາຈານທີ່ປຶກສາ:........................................

ທ່ານ ປທ. ບຸນຄົງ ເພັດດາວຮຸ່ງ, ຜູ້ຊ່ວຍ........................................

ຄະນະກຳມະການປ້ອງກັນບົດ:

ທ່ານ ສຈ. ເກດ ກຸງດຕິສັກ ປະທານ........................................

ທ່ານ ຮສ. ບຸນທ່ຽງ ພິມມະຈັນ ຮອງປະທານ........................................

ທ່ານ ຮສ. ໄພມະນີ ໄຊວົງສາ ກຳມະການ........................................

ທ່ານ ປອ. ສົມເດດ ແກ້ວວົງສັກ ກຳມະການ........................................

ທ່ານ ປທ. ວິໄຊ ສີທາປັນຍາ ກຳມະການ........................................

ຄະນະບໍດີ

ວັນທີ...0 4 JUN 2018...........................

ລາຍເຊັນ........................................

ຮສ. ວຽງວິໄລ ທັ່ງຈັນໄຊ

# ຄຳຂອບໃຈ

ວິທະຍານິພົນເຫຼັ້ມນີ້ຜູ້ຂຽນໄດ້ຮັບຄວາມເມດຕາກະລຸນາ ແລະ ໃຫ້ຄວາມຊ່ວຍເຫຼືອອັນເປັນປະໂຫຍດ ແລະ ມີຄຸນຄ່າອັນໃຫຍ່ຫຼວງຈາກບັນດາທ່ານທີ່ໃຫ້ຂໍ້ມູນ ແລະຄຳຄິດເຫັນໃນການສຶກສາຄົ້ນຄວ້າ ແລະ ເກັບກຳຂໍ້ມູນຕ່າງໆນັບແຕ່ເລີ່ມຕົ້ນດ້ວຍດີຕະຫຼອດມາ ໂດຍສະເພາະແມ່ນໄດ້ຮັບຄວາມຊ່ວຍເຫຼືອແນະນຳຈາກບັນດາຄູອາຈານ ເປັນຕົ້ນແມ່ນບັນດາອາຈານຄະນະຕິນິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ.

ກ່ອນອື່ນໝົດ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນມາຍັງທ່ານ ສຈ. ດາວອນ ຫວ່າງວິຈິດ ແລະ ທ່ານ ປທ. ບຸນຄົງ ເພັດດາວຮຸ່ງ ທີ່ໄດ້ຮັບເປັນອາຈານທີ່ປຶກສາໃຫ້ຂ້າພະເຈົ້າພ້ອມທັງໃຫ້ທິດເຍືອງທາງ ແລະ ກວດແກ້ບົດຢ່າງເອົາໃຈໃສ່ຫຼາຍຄັ້ງ, ຈົນຂ້າພະເຈົ້າຂຽນບົດວິທະຍານິພົນສະບັບນີ້ສຳເລັດດ້ວຍດີ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງທ່ານ ສຈ. ເກດ ກຽດຕິສັກ, ທ່ານ ຣສ. ບຸນທ່ຽງ ພົມມະຈັນ, ທ່ານ ຣສ. ໄພມະນີ ໄຊວົງສາ, ທ່ານ ປທ. ວິໄຊ ສີຫາປັນຍາ ແລະ ທ່ານ ປອ. ສົມເດດ ແກ້ວວົງສັກ ຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໃຫ້ຄຳເຫັນອັນເປັນປະໂຫຍດໃນການປັບປຸງວິທະຍານິພົນໃຫ້ມີຄວາມສົມບູນທາງດ້ານເນື້ອໃນ ແລະ ຮູບແບບກໍ່ຄືຄຸນນະພາບຂອງວິທະຍານິພົນຢ່າງຫຼວງຫຼາຍ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄະນະນິຕິສາດ ແລະ ລັດຖະສາດທີ່ໃຫ້ໂອກາດແກ່ຂ້າພະເຈົ້າໄດ້ເຂົ້າມາສຶກສາຮ່ຳຮຽນໃນສະຖາບັນການສຶກສາແຫ່ງນີ້.

ຂໍຂອບໃຈມາຍັງທຸກໆທ່ານທີ່ໃຫ້ຂໍ້ມູນໃນການຂຽນບົດໃນຄັ້ງນີ້ ຄື: ພະນັກງານຂອງສານປະຊາຊົນພາກກາງທຸກທ່ານ. ສິ່ງສຳຄັນໃນການສຶກສາຄັ້ງນີ້ແມ່ນຄອບຄົວຂອງຂ້າພະເຈົ້າທີ່ໃຫ້ກຳລັງໃຈ ແລະ ກຳລັງແຮງທາງດ້ານຊັບສິນໃນການສຶກສາຄົ້ນຄວ້າຈົນໄດ້ຮັບຜົນສຳເລັດ. ດັ່ງນັ້ນ ຜູ້ຂຽນຈຶ່ງຂໍສະແດງຄວາມຮັບຮູ້ບຸນຄຸນຢ່າງສູງມານະໂອກາດນີ້ດ້ວຍ.

ຂ້າພະເຈົ້າບໍ່ມີສິ່ງໃດຈະຕອບບຸນແທນຄຸນ, ມີແຕ່ຄຳອວຍພອນໃຫ້ບັນດາທ່ານທີ່ໄດ້ກ່າວນາມ ແລະ ບໍ່ໄດ້ກ່າວນາມທຸກທ່ານຂ້າງເທິງ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ກ້າວໜ້າເລື້ອຍໆໄປ.

**ຂໍຂອບໃຈ**

**ທ້າວ ສິງເພັດ ວໍລະຈິດ**

**ນັກສຶກສາປະລິນຍາໂທ ນິຕິສາດ ຮຸ່ນທີ 6**

# ບົດຄັດຫຍໍ້

ການສຶກສາວິທະຍານິພົນປະລິນຍາໂທນິຕິສາດ ຫົວຂໍ້: **ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ** ມີຈຸດປະສົງສຶກສາຂອບເຂດ ແລະ ຂັ້ນຕອນໃນການພິຈາລະນາການຂໍລົບລ້າງຄະດີແພ່ງຢູ່ສານປະຊາຊົນພາກກາງ; ສຶກສາບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ, ຊອກວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ. ການສຶກສານີ້ ແມ່ນການສຶກສາແບບປະລິມານ ແລະ ຄຸນນະພາບ ໂດຍດຳເນີນການເກັບກຳຂໍ້ມູນຢູ່ສານປະຊາຊົນພາກກາງ ແລະ ມີຂະໜາດຕົວຢ່າງ 57 ຄົນ. ການວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມ ແມ່ນການຊອກຫາຈຳນວນ ແລະ ສ່ວນຮ້ອຍ, ສ່ວນຂໍ້ມູນທີ່ໄດ້ຈາກການສຳພາດ ໄດ້ວິເຄາະດ້ວຍການສັງລວມເປັນໝວດຄຳເຫັນ.

ຜົນການສຶກສາພົບວ່າ, ຂັ້ນຕອນການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ ປະກອບດ້ວຍຂັ້ນຕອນການຮັບຄຳຮ້ອງມາພິຈາລະນາ, ການຄົ້ນຄວ້າສຳນວນຄະດີ ແລະ ການສົ່ງສຳນວນຄະດີໄປໃຫ້ອົງການໄອຍະການປະຊາຊົນພາກກາງ ຕິດຕາມກວດກາຕາມພາລະບົດບາດ, ຜູ້ຕອບແບບສອບຖາມຈຳນວນ 38.6% ເຫັນວ່າ ຜ່ານມາສາເຫດຕົ້ນຕໍຂອງການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ແມ່ນການພິຈາລະນາກ່ຽວກັບການນຳໃຊ້ມາດຕາກົດໝາຍ ຕໍ່ເນື້ອໃນ ຫຼື ເຫດການຂອງຄະດີ, ຜູ້ຕອບແບບສອບຖາມຈຳນວນ 36.84% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານປະຊາຊົນຂັ້ນຕົ້ນ ຫຼື ຂັ້ນອຸທອນ ໄດ້ລະເມີດລະບຽບການດຳເນີນຄະດີ ມີໜ້ອຍ, ຈຳນວນ 29.82% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານປະຊາຊົນຂັ້ນຕົ້ນ ຫຼື ຂັ້ນອຸທອນ ໄດ້ນຳໃຊ້ກົດໝາຍບໍ່ຊັດເຈນ ມີໜ້ອຍ.

ຜູ້ຕອບແບບສອບຖາມ ຈຳນວນ 45.61% ເຫັນວ່າການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບຫຼາຍຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາ, ຈຳນວນ 43.86% ເຫັນວ່າ ຜ່ານມາບັນຫາການຂໍລົບລ້າງເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບຫຼາຍທີ່ສຸດ, ຈຳນວນ 35.09% ເຫັນວ່າການທີ່ໂຈດຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງ ຢູ່ໃນລະດັບຫຼາຍທີ່ສຸດ.

ຜູ້ໃຫ້ສຳພາດ ມີທັດສະນະວ່າ ບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ ຍັງມີຫຼາຍພໍສົມຄວນ ເປັນຕົ້ນ ການຂໍລົບລ້າງໂດຍຄູ່ຄວາມ ຊຶ່ງສ່ວນຫຼາຍແມ່ນບັນຫາທີ່ກ່ຽວຂ້ອງກັບເນື້ອຄະດີ ຫຼື ຍັງບໍ່ແມ່ນບັນຫາທາງດ້ານກົດໝາຍ. ຄະດີແພ່ງຂັ້ນລົບລ້າງ ສ່ວນຫຼາຍແມ່ນສັນຍາກູ້ຢືມ, ຄະດີຄອບຄົວແມ່ນການຂໍຢ່າຮ້າງ ແລະ ຄະດີແຮງງານ ແມ່ນການທວງເອົາເງິນອຸດໜູນ. ການຂໍລົບລ້າງບາງຄັ້ງກໍບໍ່ໄດ້ມີການຂໍໃຫ້ສານປະຊາຊົນຂັ້ນລົບລ້າງ ພິຈາລະນາບັນຫາໃໝ່ ພຽງແຕ່ເປັນການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ແກ່ຍາວເວລາໃນການໃຊ້ແທນໜີ້ສິນເທົ່ານັ້ນ.

ເພື່ອເຮັດໃຫ້ການພິຈາລະນາຄະດີແພ່ງຂອງສານປະຊາຊົນພາກກາງ ມີປະສິດທິພາບ ຈຶ່ງສະເໜີວ່າ ສານປະຊາຊົນຂັ້ນອຸທອນ ຕ້ອງແນະນຳຢ່າງລະອຽດໃນກໍລະນີທີ່ມີການຂໍຈອງລົບລ້າງຄະດີໃຫ້ແກ່ໂຈດ ຫຼື ຈຳເລີຍ ທີ່ຕ້ອງການຂໍລົບລ້າງ, ຜູ້ຂໍລົບລ້າງ ຕ້ອງສຶກສາຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນຢ່າງລະອຽດ ເພື່ອໃຫ້ເຫັນປະເດັນທາງດ້ານກົດໝາຍໃນການຂໍລົບລ້າງຕໍ່ສານ; ການຂໍລົບລ້າງ ແຕ່ບໍ່ໄດ້ນຳບັນຫາໃໝ່ ມາໃຫ້ສານປະຊາຊົນຂັ້ນລົບລ້າງພິຈາລະນາ ຄວນຖືວ່າເປັນການກະທຳຜິດທາງອາຍາ ເພາະເປັນການບໍ່ປະຕິບັດຄຳຕັດສິນຂອງສານ; ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ພະນັກງານວິຊາການກົດໝາຍຂອງສານປະຊາຊົນພາກກາງ ຄວນເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງຕົນໃຫ້ສູງຂຶ້ນກວ່າເກົ່າ ເພາະວ່າເປັນສານປະຊາຊົນພາກທີ່ມີຈຳນວນຄະດີຂໍລົບລ້າງນັບມື້ຫຼາຍຂຶ້ນ.

# Abstract

The objectives of the master of law thesis on the topic: The Consideration of Civil Cassation of the Central Regional Court is to study the procedure, causes and scope of the cassation consideration of the central regional court, to study the issues and obstacles of the cassation consideration of the central regional court and to find the resolution method for the consideration of the cassation consideration of the central regional court. This thesis is mixed between qualitative and quantitative methods, data was collected in central regional court and which has 57 sample sizes. Data from questionnaire was analyzed by calculation into amount and percent; data from interview was grouped of comments.

The result of the study found that, the procedure of the consideration of civil cassation in the central regional court are including the receiving of the case for consideration, the consideration of the case and sending the case to central regional office for monitoring and inspection as its role. The amount 38.6% of informants agree that in the past many proposal of the civil case to the central regional court is related to applying the law’s article to content of the case, and situation of the case. The 36.84% of the correspondence agree that is very few number of the case that the parties proposed to cassation in a case of lower court violates the regulation of case procedure rule. Amount 29.82% of the representative agrees that is very case in related to the lower court uses irrelevance article to the case. The scope of the consideration of civil case of the central regional court includes cassation of the civil case, family case and labor case.

The amount of 45.61% of informant agree that increasing of the civil case in the cassation level in the central regional court will lead to be issue in a high level especially to consideration of the case as timely, amount 43.86% of respondent agree that many case in the past requested for cassation in order to suspension of the judgment enforcement it means that the proposal of the related person do not explain the purpose in it, and it bring the issue in the higher level, amount 35.09% of the representative agree that in case of defendant, plaintiff or third party or head of public prosecutor office that proposed the request for cassation or proposed the opposition but do not provide clearly reasons that bring the issue to consideration of the central regional court at the highest level.

Interviewees agree that issues and obstacles relevance to civil cassation in the central regional court are many issues such as request of the parties are relevance to the content of the case of is not legal issue. The interviewees also state that the cassation of the civil case in central regional court is loan contract, family cases are asking for divorce and labor cases are asking for the supporting money. The request for cassation in some case did not propose new issue to the central regional court, but such proposal is only for the suspension of the judgment enforcement or delay for debt compensation as well.

To ensure the civil consideration of the cassation of the central regional court, it proposes that appearance court should recommend in detail in case of request for proposal was applied, proposal for request person should study the judgment of the appearance court in detail to understand the legal issue that can cause to propose for cassation, the propose for the cassation but did not bring any new issue to court for consideration, requester should have criminal responsibility because it meaning of

judgment following, judges, judge's assistance and legal officers of the central regional people's court should increase liability to their responsibilities as much as present time, because this is the court which has a large cases of cassation rapidly.

# ສາລະບານ


ໜ້າ

ຄຳຂອບໃຈ i

ບົດຄັດຫຍໍ້ພາສາລາວ ii

ບົດຄັດຫຍໍ້ພາສາອັງກິດ iv

ສາລະບານ vi

ພາກທີ I ພາກສະເໜີ 1

1. ຄວາມເປັນມາຂອງບັນຫາ 1
2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ 2
3. ຈຸດປະສົງຂອງການຄົ້ນຄວ້າ 4
4. ຄຳຖາມຄົ້ນຄວ້າ 4
5. ສົມມຸດຕິຖານຂອງການຄົ້ນຄວ້າ 5
6. ຄາດຄະເນຜົນຈະໄດ້ຮັບຈາກການຄົ້ນຄວ້າ 5
7. ນິຍາມຄຳສັບທີ່ໃຊ້ໃນການຄົ້ນຄວ້າ 5

ພາກທີ II ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ 7

1. ທົບທວນທິດສະດີທີ່ກ່ຽວຂ້ອງ 7
   - 1.1 ແນວທາງຂອງພັກປະຊາຊົນປະຕິວັດລາວຕໍ່ສານປະຊາຊົນ 7
   - 1.2 ນະໂຍບາຍຂອງລັດກ່ຽວກັບສານປະຊາຊົນ 8
   - 1.3 ນະໂຍບາຍຂອງລັດກ່ຽວກັບການດຳເນີນຄະດີແພ່ງ 11
   - 1.4 ພາລະບົດບາດຂອງສານປະຊາຊົນ ຕາມລັດຖະທຳມະນູນ 12
   - 1.5 ສານປະຊາຊົນ ແລະ ການດຳເນີນຄະດີ 13
   - 1.6 ຜູ້ຮັບຜິດຊອບໃນການດຳເນີນຄະດີແພ່ງ 15
   - 1.7 ຫຼັກການພື້ນຖານຂອງການດຳເນີນຄະດີຢູ່ສານ 17
2. ສານປະຊາຊົນພາກກາງ ແລະການພິຈາລະນາການຂໍລົບລ້າງຄະດີແພ່ງ 22
   - 2.1 ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນພາກກາງ 22
   - 2.2 ການພິຈາລະນາການຂໍລົບລ້າງຄະດີແພ່ງຢູ່ສານປະຊາຊົນພາກກາງ 25
   - 2.3 ຂອບເຂດການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ 31
   - 2.4 ຂັ້ນຕອນການພິຈາລະນາການຂໍລົບລ້າງຄະດີແພ່ງຢູ່ສານປະຊາຊົນພາກກາງ 34

3. ບົດຄົ້ນຄວ້າທີ່ກ່ຽວຂ້ອງ 35
ພາກທີ III ວິທີການສຶກສາ 36
1. ວິທີການສຶກສາ 36
2. ຂອບເຂດດ້ານສະຖານທີ່ ແລະ ເວລາ 36
3. ປະຊາກອນ ແລະ ກຸ່ມຕົວຢ່າງ 36
4. ເຄື່ອງມືເກັບກຳຂໍ້ມູນ 37
5. ວິທີວິເຄາະຂໍ້ມູນ ແລະ ແປຜົນ 38
ພາກທີ IV ຜົນການສຶກສາ 39
1. ຜົນການສຶກສາ 39
1.1 ຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ 39
1.2 ທັດສະນະຜູ້ຕອບແບບສອບຖາມ ກ່ຽວກັບການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ 41
1.2.1 ຂັ້ນຕອນ, ສາເຫດ ແລະ ຂອບເຂດຂອງການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ 41
1.2.2 ບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ 51
1.3 ຜົນການສຳພາດ 55
2. ວິເຄາະຜົນການສຶກສາ 59
ພາກທີ V ສະຫຼຸບ ແລະ ຂໍ້ສະເໜີ 63
1. ສະຫຼຸບ 63
2. ຂໍ້ສະເໜີ 65

ເອກະສານອ້າງອີງ
ເອກະສານຊ້ອນທ້າຍ
ປະຫວັດຫຍໍ້ຜູ້ສຶກສາ

# ພາກທີ I
# ພາກສະເໜີ

## 1. ຄວາມເປັນມາຂອງບັນຫາ

ສານປະຊາຊົນພາກ ມີສິດ ແລະ ໜ້າທີ່ໃນການພິຈາລະນາເປັນຂັ້ນລົບລ້າງຄໍາສັ່ງ, ຄໍາຊີ້ຂາດ ແລະ ຄະດີທີ່ສານປະຊາຊົນແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ.[1] ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ ກ່ຽວພັນໂດຍກົງກັບການກໍານົດເຫດການໃນຄະດີ ຊຶ່ງສານຂັ້ນອຸທອນ ໄດ້ກໍານົດບໍ່ຖືກຕ້ອງ ຫຼື ສານຂັ້ນອຸທອນ ບໍ່ນໍາເອົາບັນຫາໃດໜຶ່ງທີ່ຂໍອຸທອນມາພິຈາລະນາ ຫຼື ສານຂັ້ນຕົ້ນ ໄດ້ລະເມີດລະບຽບການດໍາເນີນຄະດີ ແຕ່ສານຂັ້ນອຸທອນໄດ້ພິພາກສາຢັ້ງຢືນຕາມ, ສານຂັ້ນອຸທອນ ນໍາໃຊ້ກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງໃນຄະດີບໍ່ຖືກຕ້ອງ ແລະ ບັນຫາອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ຈຶ່ງເປັນສາເຫດເຮັດໃຫ້ຄະດີຂັ້ນລົບລ້າງນັບມື້ ເພີ່ມຂຶ້ນ ເຊັ່ນ ໃນປີ 2011 ມີການຂໍລົບລ້າງຈໍານວນ 15 ຄະດີ ແກ້ໄຂໄດ້ 14 ຄະດີ, ປີ 2012 ມີ 17 ຄະດີ ເຂົ້າໃໝ່ 16 ຄະດີ ຄ້າງມາ 1 ຄະດີ ແກ້ໄຂໄດ້ 17 ຄະດີ, ປີ 2013 ມີ 17 ຄະດີ, ປີ 2014 ມີ 19 ຄະດີ ແກ້ໄຂໄດ້ 17 ຄະດີ, ປີ 2015 ມີ 18 ຄະດີ ຄ້າງມາ 2 ຄະດີ ແກ້ໄຂໄດ້ 17 ຄະດີ ແລະ ປີ 2016 ມີຈໍານວນ 21 ຄະດີ ຄ້າງມາ 1 ຄະດີ ແລະ ແກ້ໄຂໄດ້ 19 ຄະດີ ຍັງຄ້າງ 2 ຄະດີ.[2]

ການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ຕາມທີ່ໄດ້ສຶກສາບັນດາເອກະສານເບື້ອງຕົ້ນ ເຫັນວ່າເປັນບັນຫາທາງດ້ານກໍານົດເວລາທີ່ກົດໝາຍວາງອອກ ເພື່ອໃຫ້ພິຈາລະນາຄະດີສໍາເລັດ ແຕ່ຄະດີມີຈໍານວນເພີ່ມຂຶ້ນ, ການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ ແມ່ນຄະດີທີ່ຫຍຸ້ງຍາກສັບສົນ, ມີຫຼາຍຄະດີທີ່ຄູ່ຄວາມ ຮ້ອງຂໍໃຫ້ສານປະຊາຊົນພາກກາງດໍາເນີນການພິຈາລະນາເນື້ອຄະດີ ຊຶ່ງເຫັນວ່າບໍ່ຢູ່ໃນຂອບເຂດສິດອໍານາດຂອງສານປະຊາຊົນພາກກາງ ໝາຍຄວາມວ່າ ການເພີ່ມຂຶ້ນຂອງຈໍານວນຄະດີແພ່ງໃນຂັ້ນລົບລ້າງ ເປັນສິ່ງທ້າທາຍໜຶ່ງຂອງການພິຈາລະນາຄະດີຢູ່ສານປະຊາຊົນພາກກາງ ເພາະວ່າກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ໄດ້ກໍານົດໄລຍະເວລາການພິຈາລະນາຢູ່ສານຂັ້ນລົບລ້າງ ໃຫ້ສໍາເລັດພາຍໃນ ສາມເດືອນ, ໃນກໍລະນີທີ່ບໍ່ສາມາດພິຈາລະນາຕັດສິນ ໃຫ້ສໍາເລັດ

---

[1] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2009, ມາດຕາ 23.

[2] ຄະນະສານແພ່ງ, ສານປະຊາຊົນພາກກາງ, ສັງລວມຄະດີແພ່ງຂັ້ນລົບລ້າງ ແຕ່ປີ 2011-2016, ປີ 2017, ໜ້າ 1.

ຕາມກຳນົດເວລານັ້ນ ຜູ້ພິພາກສາ ທີ່ຮັບຜິດຊອບຄະດີດັ່ງກ່າວ ຕ້ອງສະເໜີຕໍ່ປະທານສານປະຊາຊົນບ່ອນກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງຕໍ່ກຳນົດເວລາຄົ້ນຄວ້າ ແລະ ຕັດສິນ ແຕ່ການຕໍ່ເວລານັ້ນ ແມ່ນບໍ່ໃຫ້ກາຍສາມເດືອນ ຍົກເວັ້ນຄະດີທີ່ມີຄວາມຫຍຸ້ງຍາກສັບສົນຕາມການຕົກລົງຂອງຄະນະປະທານສານ.[3] ສະຫຼຸບແລ້ວຄະດີທີ່ຫຍຸ້ງຍາກສັບສົນ ຈະມີໄລຍະເວລາບໍ່ເກີນ ຫົກເດືອນ ແຕ່ຈາກການເພີ່ມຂຶ້ນຂອງຄະດີ ແລະ ໄລຍະເວລາທີ່ຈຳກັດ ເປັນສິ່ງທ້າທາຍ ແລະ ບັນຫາບໍ່ໜ້ອຍ ໃຫ້ແກ່ສານປະຊາຊົນພາກກາງໃນການພິຈາລະນາຄະດີເປັນຂັ້ນລົບລ້າງ.

ຄະດີທີ່ຄູ່ຄວາມ ຫຼື ໄອຍະການປະຊາຊົນ ຄັດຄ້ານ ລ້ວນແຕ່ເປັນຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ແລະ ກໍເປັນຄະດີທີ່ຕ້ອງພິພາກສາໃຫ້ກາຍເປັນປະເພນີສານ ຫຼື ແບບຢ່າງຂອງຄຳຕັດສິນ ຊຶ່ງທັງໝົດຍັງກາຍເປັນບັນຫາວ່າການພິຈາລະນາຄະດີແພ່ງຢູ່ສານປະຊາຊົນພາກກາງ ສຳເລັດຕາມໄລຍະເວລາໄດ້ ຫຼື ບໍ່, ການພິຈາລະນາເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ໄດ້ກາຍເປັນບັນທັດຖານທາງດ້ານກົດໝາຍ ແລະ ປະເພນີສານໃຫ້ແກ່ສານຂັ້ນລຸ່ມໄດ້ ຫຼື ບໍ່. ພ້ອມດຽວກັນນັ້ນ, ຄູ່ຄວາມ ກໍຍັງຂໍໃຫ້ສານປະຊາຊົນພາກກາງ ພິຈາລະນາເນື້ອຄະດີທີ່ສານປະຊາຊົນຂັ້ນອຸທອນ ໄດ້ພິພາກສາໄປແລ້ວ ຊຶ່ງຖືວ່າເປັນການບໍ່ປະຕິບັດຕາມກົດໝາຍ ແລະ ເມື່ອສານປະຊາຊົນພາກກາງ ບໍ່ພິຈາລະນາຕາມການຮ້ອງຂໍ ກໍເກີດຫາງສຽງຈົ່ມວ່າໃນທາງທີ່ບໍ່ດີ ແລະ ມີຈຳນວນຄະດີແພ່ງບໍ່ໜ້ອຍ ທີ່ຂໍລົບລ້າງ ໂດຍບໍ່ມີຂໍ້ມູນໃໝ່ ແຕ່ຂໍລົບລ້າງ ເພື່ອໃຫ້ໂຈະການປະຕິບັດຄຳຕັດສິນຂອງສານຂັ້ນອຸທອນ ກໍເປັນໄປໄດ້.

ທັງໝົດທີ່ກ່າວມານັ້ນ ເປັນບັນຫາ ທີ່ຕ້ອງການຄຳຕອບຢ່າງມີວິທະຍາສາດ ເພື່ອຊອກໃຫ້ເຫັນວ່າ ສານປະຊາຊົນພາກກາງ ສາມາດພິຈາລະນາຄະດີເປັນຂັ້ນລົບລ້າງໄດ້ຕາມກຳນົດເວລາລະດັບໃດ, ການເພີ່ມຂຶ້ນຂອງຄະດີແພ່ງ ເປັນສາເຫດເຮັດໃຫ້ການດຳເນີນຄະດີເປັນຂັ້ນລົບລ້າງຊັກຊ້າແທ້ບໍ່ ແລະ ຜ່ານມາການຂໍລົບລ້າງ ມີເຫດຜົນທາງດ້ານກົດໝາຍຢ່າງດຽວ ຫຼື ບໍ່ ລວມເຖິງບັນຫາ ແລະ ອຸປະສັກທີ່ເກີດຂຶ້ນໃນການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ ມີແນວໃດ ແລະ ຈະແກ້ໄຂບັນຫາຄືແນວໃດ.

## 2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ

ການສຶກສາກ່ຽວກັບການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ມີສອງເຫດຜົນ ອັນໄດ້ແກ່ບົດບາດການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ເພາະວ່າເປັນການພິຈາລະນາຄະດີ ກ່ຽວກັບຂໍ້ຂັດແຍ່ງກຳມະສິດ ແລະ ມູນມໍຣະດົກ, ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງແພ່ງ, ຂໍ້ຂັດແຍ່ງ ກ່ຽວກັບການທວງ

[3] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 30.

ເອົາການໃຊ້ແທນຄ່າເສັຍຫາຍ ແລະ ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ ຊຶ່ງບັນດາຂໍ້ຂັດແຍ່ງທາງແພ່ງທີ່ກ່າວມານັ້ນລ້ວນແລ້ວແຕ່ເປັນຂໍ້ຂັດແຍ່ງທີ່ເກີດຂຶ້ນຫຼາຍໃນສັງຄົມ ເຊັ່ນ: ຂໍ້ຂັດແຍ່ງກ່ຽວກັບກຳມະສິດທີ່ດິນ ທີ່ຕິດພັນກັບມູນມໍຣະດົກ ແລະ ສິນສົມສ້າງ ຊຶ່ງການພິຈາລະນາຂອງສານປະຊາຊົນພາກກາງ ຈະຕ້ອງໄດ້ຄຳນຶງສະເໝີວ່າຄະດີດັ່ງກ່າວແມ່ນຂັ້ນຕອນຂອງກາງຂໍລົບລ້າງ ຫຼື ມີຄວາມໝາຍວ່າ ຄູ່ຄວາມທີ່ຂໍລົບລ້າງຄະດີ ສ່ວນຫຼາຍຕ້ອງການໃຫ້ຄຳພິພາກສາແຕກຕ່າງໄປຈາກຄຳຕັດສິນຂອງສານຂັ້ນຕົ້ນ ແລະ ຂັ້ນອຸທອນ ໂດຍຄູ່ຄວາມພະຍາຍາມໃຊ້ທຸກເອກະສານທາງດ້ານວັດຖຸ, ບຸກຄົນ, ນິຕິວິທະຍາສາດ ແລະ ອື່ນໆ ເພື່ອໃຫ້ຕົນຊະນະຄະດີ ແລະ ໄດ້ມາຊຶ່ງຈຸດປະສົງຂອງຕົນເອງ ແຕ່ບໍ່ແມ່ນເນື້ອຄະດີທີ່ສານປະຊາຊົນຂັ້ນອຸທອນ ໄດ້ພິພາກສາແລ້ວ ເຊັ່ນ ການຂໍໃຫ້ສານປະຊາຊົນພາກກາງລົບລ້າງລາຍເຊັນຂອງ ບຸກຄົນທີ່ກ່ຽວຂ້ອງໃນຄະດີ ແຕ່ໃນຄວາມເປັນຈິງແລ້ວຄູ່ຄວາມໄດ້ຂໍໃຫ້ສານຂັ້ນອຸທອນພິຈາລະນາບັນຫາດັ່ງກ່າວແລ້ວ ໝາຍຄວາມວ່າ ບັນຫາທີ່ຂໍລົບລ້າງ ແມ່ນບັນຫາເກົ່າທີ່ຄຳພິພາກສາຂອງສານຂັ້ນອຸທອນໄດ້ຄອບຄຸມເອົາໄວ້ແລ້ວ.[4]

ເຫດຜົນອັນທີສອງ ຕ້ອງການສຶກສາເຖິງຄວາມຫຍຸ້ງຍາກໃນການພິຈາລະນາຄະດີເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ເພາະວ່າໃນບາງຄະດີ, ຄູ່ຄວາມໃດໜຶ່ງ ກໍບໍ່ໄດ້ຈອງຂໍລົບລ້າງຄະດີ ແຕ່ເມື່ອຄູ່ຄວາມອີກຝ່າຍໜຶ່ງ ຈອງຂໍລົບລ້າງ ແລະ ໃນເວລາຢູ່ໃນຂັ້ນຕອນຂອງການດຳເນີນຄະດີ ຜູ້ທີ່ບໍ່ຈອງຂໍລົບລ້າງ ຊ້ຳພັດມີການຮ້ອງຂໍບັນຫາໃໝ່ຂຶ້ນມາ ຊຶ່ງການຮ້ອງຂໍຂອງຜູ້ກ່ຽວຈະຖືກນຳມາພິຈາລະນາ ຫຼື ບໍ່ນັ້ນ ຍັງກາຍເປັນບັນຫາທີ່ບໍ່ມີຄຳຕອບຢ່າງຊັດເຈນ. ບາງຄະດີຄູ່ຄວາມມີການຈອງຂໍລົບລ້າງ ແຕ່ບໍ່ຂຽນຄຳຮ້ອງ ເພື່ອແຈ້ງຈຸດປະສົງໃຫ້ສານພິຈາລະນາບັນຫາໃໝ່ແນວໃດ ແລະ ມີຈັກບັນຫາ. ບາງຄະດີ ຄູ່ຄວາມອ້າງເຫດຜົນ ເພື່ອໃຫ້ສານປະຊາຊົນພາກກາງ ພິຈາລະນາຄະດີໃຫ້ຕົນເອງ ແຕ່ບໍ່ໄດ້ນຳຫຼັກຖານໃໝ່ໃດໆ ມາຢືນຢັນຄຳຮ້ອງຂໍລົບລ້າງດັ່ງກ່າວ.[5] ແຕ່ເຖິງແນວໃດກໍຕາມ, ສານປະຊາຊົນພາກກາງ ກໍຍັງໄດ້ພິຈາລະນາບັນຫາທາງກົດໝາຍ ທີ່ສານປະຊາຊົນຂັ້ນຕົ້ນ ແລະ ຂັ້ນອຸທອນໄດ້ຕັດສິນ ແລະ ພິພາກສາມາແລ້ວ ແຕ່ຍັງບໍ່ທັນຖືກຕ້ອງ ແລະ ສອດຄ່ອງກັບຂໍ້ກຳນົດຂອງກົດໝາຍເທົ່າທີ່ຄວນ ເຊັ່ນ ສານປະຊາຊົນຂັ້ນຕົ້ນ ແລະ ຂັ້ນອຸທອນ ໄດ້ມີຄຳຕັດສິນ ແລະ ພິພາກສາ ໃຫ້ຈຳເລີຍ ໃຊ້ແທນຄ່າເສຍຫາຍແກ່ໂຈດ ໂດຍຖືເອົາອັດຕາແລກປ່ຽນໃນປັດຈຸບັນມາພິຈາລະນາ ຊຶ່ງເຫັນວ່າຍັງບໍ່ຖືກຕ້ອງເທົ່າທີ່ຄວນ ເພາວ່າຂໍ້ຂັດແຍ່ງເກີດຂຶ້ນແຕ່ເດືອນ ມິຖຸນາ ປີ 2015 ແຕ່ສານພິຈາລະນາ ໂດຍຖືເອົາອັດຕາແລກປ່ຽນ ໃນວັນທີ 12 ກຸມພາ 2016

---

[4] ຄະນະສານແພ່ງຂັ້ນລົບລ້າງ, ສານປະຊາຊົນພາກກາງ, ຄຳຕັດສິນເລກທີ 70/ລລ.ພ, ລົງວັນທີ 20 ທັນວາ 2016, ໜ້າ 8.

[5] ຄະນະສານແພ່ງຂັ້ນລົບລ້າງ, ສານປະຊາຊົນພາກກາງ, ຄຳຕັດສິນເລກທີ 34/ລລ.ພ, ລົງວັນທີ 28 ມິຖຸນາ 2016, ໜ້າ 3.

ຈຶ່ງຖືວ່າບໍ່ສອດຄ່ອງກັບເງື່ອນໄຂຂອງຂໍ້ຂັດແຍ່ງຕົວຈິງ, ສານປະຊາຊົນພາກກາງ ຈຶ່ງພິພາກສາໃຫ້ໃຊ້ຕາມອັດຕາແລກປ່ຽນໃນເວລາຂໍ້ຂັດແຍ່ງເກີດຂຶ້ນ ແລະ ບັນຫາອື່ນ ກ່ຽວຂ້ອງກັບຂໍ້ຂັດແຍ່ງທາງແພ່ງ, ຄອບຄົວ, ແຮງງານ ຊຶ່ງນັບວັນຈຳນວນຄະດີຈະມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ.[6]

ຈາກເຫດຜົນທີ່ກ່າວມາຂ້າງເທິງນັ້ນ, ການສຶກສານີ້ ຈຶ່ງເປັນການຊອກໃຫ້ເຫັນບັນດາສາເຫດ, ຂອບເຂດ ແລະ ຂັ້ນຕອນການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ. ນອກຈາກນັ້ນ, ຍັງຈະຊອກໃຫ້ເຫັນບັນຫາ ທີ່ປິ່ນອ້ອມກັບການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ ໂດຍປຽບທຽບການພິຈາລະນາຄະດີຕົວຈິງໃສ່ກັບໄລຍະເວລາທີ່ກົດໝາຍກຳນົດໃຫ້, ປຽບທຽບໃສ່ກັບຈຳນວນຜູ້ພິພາກສາ ລວມເຖິງບັນຫາຕ່າງໆທີ່ເກີດຂຶ້ນຈາກການພິຈາລະນາຄະດີແພ່ງຂັ້ນລົບລ້າງ ຂອງສານປະຊາຊົນພາກກາງ. ການສຶກສານີ້ ມີຄວາມສຳຄັນ ແລະ ຈຳເປັນຫຼາຍ ເພາະວ່າໃນໄລຍະຜ່ານມາ ຍັງບໍ່ທັນມີການສຶກສາຄົ້ນຄວ້າໃດໆ ກ່ຽວກັບການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ. ດ້ວຍເຫດນັ້ນ, ຜົນຂອງການສຶກສານີ້ ຈະຖືກນຳສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ນຳໄປໝູນໃຊ້ໃນການແກ້ໄຂບັນຫາ ທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ຕົວຈິງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

## 3. ຈຸດປະສົງຂອງການຄົ້ນຄວ້າ

- ສຶກສາຂອບເຂດ ແລະ ຂັ້ນຕອນ ຂອງການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ;
- ສຶກສາບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ;
- ຊອກວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກ.

## 4. ຄຳຖາມຄົ້ນຄວ້າ

1). ຂອບເຂດ ແລະ ຂັ້ນຕອນຂອງການພິຈາລະນາການຂໍລົບລ້າງຄະດີແພ່ງ ເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກ ມີຄືແນວໃດ?

2). ບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ມີສາເຫດມາຈາກໃສ?

[6] ຄະນະສານແພ່ງຂັ້ນລົບລ້າງ, ສານປະຊາຊົນພາກກາງ, ຄຳຕັດສິນເລກທີ 34/ລລ.ພ, ລົງວັນທີ 28 ມິຖຸນາ 2016, ໜ້າ 4.

3). ວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກ ທີ່ມີປະສິດທິພາບ ຈະດຳເນີນໄປຄືແນວໃດ?

## 5. ສົມມຸດຕິຖານຂອງການຄົ້ນຄວ້າ

ການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ ສ່ວນຫຼາຍແມ່ນເນື້ອຄະດີຫຼາຍກວ່າບັນຫາທາງກົດໝາຍ.

## 6. ຄາດຄະເນຜົນໄດ້ຮັບຈາກການຄົ້ນຄວ້າ

- ຈະໄດ້ຮູ້ຂອບເຂດ ແລະ ຂັ້ນຕອນຂອງການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກ,
- ຈະໄດ້ຮູ້ບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ,
- ຈະໄດ້ຮູ້ວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ.

## 7. ນິຍາມຄຳສັບເພື່ອການຄົ້ນຄວ້າ

ຄຳສັບຕ່າງໆ ທີ່ໃຊ້ໃນວິທະຍານິພົນນີ້ ໃຫ້ມີຄວາມໝາຍຕໍ່ໄປນີ້:

**ການພິຈາລະນາຄະດີແພ່ງ** ໝາຍເຖິງ ການພິຈາລະນາຂໍ້ຂັດແຍ່ງ ກ່ຽວກັບກຳມະສິດ ແລະ ມູນມໍຣະດົກ, ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງແພ່ງ, ຂໍ້ຂັດແຍ່ງ ກ່ຽວກັບການທວງເອົາການໃຊ້ແທນຄ່າເສັຍຫາຍ ແລະ ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ, ຂໍ້ຂັດແຍ່ງທາງດ້ານແຮງງານ ແລະ ຂໍ້ຂັດແຍ່ງກ່ຽວກັບຄອບຄົວ.

**ການພິຈາລະນາຄະດີເປັນຂັ້ນລົບລ້າງ** ໝາຍເຖິງ ການພິຈາລະນາຄະດີເປັນຂັ້ນສຸດທ້າຍທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ.

**ຄະນະສານທີ່ພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ** ໝາຍເຖິງ ຄະນະສານແພ່ງ, ຄະນະສານແຮງງານ ແລະ ຄະນະສານຄອບຄົວ ຊຶ່ງບໍ່ລວມເອົາຄະນະສານການຄ້າ ເພາະວ່າສານປະຊາຊົນພາກ ພິຈາລະນາຄະດີການຄ້າເປັນຂັ້ນອຸທອນ ແລະ ຄະນະສານເດັກ ເພາະສ່ວນຫຼາຍຄະດີເດັກກ່ຽວຂ້ອງກັບການກະທຳຜິດທາງອາຍາຫຼາຍກວ່າຄະດີແພ່ງ.

**ສານປະຊາຊົນພາກກາງ** ໝາຍເຖິງ ສານປະຊາຊົນພາກແຫ່ງໜຶ່ງ ທີ່ມີສຳນັກງານຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ພິພາກສາເປັນຂັ້ນລົບລ້າງໃນຄະດີທີ່ສານປະຊາຊົນເຂດໄດ້ຕັດສິນເປັນຂັ້ນຕົ້ນ ແລະ ສານປະຊາຊົນ ຂອງແຂວງ ຊຽງຂວາງ, ໄຊສົມບູນ, ວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ ແລະ ຄຳມ່ວນ ໄດ້ພິພາກສາເປັນຂັ້ນອຸທອນ.

# ພາກທີ II
# ທົບທວນທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

## 1. ທົບທວນທິດສະດີທີ່ກ່ຽວຂ້ອງ

### 1.1 ພາລະບົດບາດຂອງສານປະຊາຊົນ ຕາມລັດຖະທຳມະນູນ

ລັດຖະທຳມະນູນແຫ່ງ ສປປ ລາວ ກຳນົດວ່າ: ສານປະຊາຊົນ ແມ່ນອົງການຕຸລາການ, ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນ, ພິພາກສາຄະດີ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສານປະຊາຊົນ ຕັດສິນຄະດີເປັນຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ. ສານປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ ສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ໃນກໍລະນີຈຳເປັນອາດສ້າງຕັ້ງສານສະເພາະຕາມຂະແໜງການຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ. ສານປະຊາຊົນສູງສຸດ ແມ່ນອົງການພິພາກສາສູງສຸດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສານປະຊາຊົນສູງສຸດ ກວດກາຄຳຕັດສິນ ແລະ ຄຳພິພາກສາຂອງສານປະຊາຊົນ ແລະ ສານທະຫານ. ຮອງປະທານສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍຄະນະປະຈຳສະພາແຫ່ງຊາດ. ສານປະຊາຊົນ ພິຈາລະນາຕັດສິນເປັນໝູ່ຄະນະ. ໃນເວລາພິຈາລະນາຕັດສິນ ຜູ້ພິພາກສາຕ້ອງເປັນເອກະລາດ ແລະ ປະຕິບັດຕາມກົດໝາຍ ເທົ່ານັ້ນ.ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.[7]

### 1.2 ແນວທາງຂອງພັກປະຊາຊົນປະຕິວັດລາວຕໍ່ສານປະຊາຊົນ

ອີງຕາມມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ໄດ້ວາງແນວທາງນະໂຍບາຍຕໍ່ສານປະຊາຊົນ ຊຶ່ງມີເນື້ອໃນວ່າ: ສານປະຊາຊົນ, ເອົາໃຈໃສ່ປະຕິບັດພາລະບົດບາດ, ໜ້າທີ່ໃນການປະຕິບັດກົດໝາຍ ເຮັດໃຫ້ສັງຄົມມີຄວາມຍຸຕິທຳຫຼາຍຂຶ້ນ ເອົາໃຈໃສ່ປັບປຸງການຈັດຕັ້ງ, ກໍ່ສ້າງພະນັກງານ ແລະ ຍົກລະດັບຄຸນນະພາບຖັນແຖວບຸກຄະລາກອນໃນຂົງເຂດດັ່ງກ່າວຢ່າງຕັ້ງໜ້າເຮັດໃຫ້ການພິຈາລະນາແກ້ໄຂຄະດີຕ່າງໆມີຄວາມວ່ອງ

---

[7] ລັດຖະທຳມະນູນແຫ່ງ ສປປ ລາວ, (ສະບັບປັບປຸງ), ປີ 2015, ມາດຕາ 95.

ໄວ, ພາວະວິໄສ, ຖືກຕ້ອງ ແລະ ເປັນທຳຫຼາຍຂຶ້ນກວ່າເກົ່າ.[8] ນອກຈາກນັ້ນ, ໃນມະຕິດັ່ງກ່າວຍັງໄດ້ກຳນົດທິດທາງ, ໜ້າທີ່ລວມ ໃນການຍົກສູງປະສິດທິພາບຂອງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ແຕ່ນີ້ຮອດປີ 2020 ໂດຍສຸມໃສ່ ສ້າງຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕ ປະຊາຊົນ ທີ່ປົກປ້ອງດ້ວຍກົດໝາຍ, ເພີ່ມນິຕິທຳໃນການປົກຄອງ ແລະ ປະສິດທິພາບໃນການບໍລິຫານລັດ, ເອົາໃຈໃສ່ປັບປຸງຂະແໜງຍຸຕິທຳ ໃຫ້ມີການຫັນໄປສູ່ຄຸນນະພາບ ແລະ ປະສິດທິຜົນສູງ ໂດຍເຮັດໃຫ້ຂົງເຂດຍຸຕິທຳມີກົງຈັກທີ່ເຂັ້ມແຂງ ແລະ ມີບຸກຄະລາກອນທີ່ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ສ້າງຖັນແຖວພະນັກງານຍຸຕິທຳ, ນັກວິຊາການ, ນັກກົດໝາຍໃຫ້ເປັນມືອາຊີບ, ເປັນຜູ່ຊຳນານງານ ແລະ ຊ່ຽວຊານ, ທັງມີຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດໜັກແໜ້ນ. ສືບຕໍ່ປັບປຸງສານປະຊາຊົນແລະ ອົງການໄອຍະການປະຊາຊົນໃຫ້ໜັກແໜ້ນເຂັ້ມແຂງ ເພື່ອແກ້ໄຂຄະດີໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ ເອົາໃຈໃສ່ເປັນພິເສດຕໍ່ການພັດທະນາບຸກຄະລາກອນຂອງສານປະຊາຊົນ ທາງດ້ານຈຳນວນ ແລະ ຄຸນນະພາບ, ສ້າງໃຫ້ມີພື້ນຖານທາງດ້ານວັດຖຸເຕັກນິກທີ່ທັນສະໄໝ, ສາມາດປະຕິບັດພາລະບົດບາດ, ໜ້າທີ່ໃນການປະຕິບັດກົດໝາຍໃຫ້ມີຄວາມສັກສິດ, ເຂັ້ມງວດ, ຍຸຕິທຳ. ປັບປຸງບູລະນະລະບົບການຈັດຕັ້ງຂອງສານ ແລະ ອົງການໄອຍະການປະຊາຊົນ ໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງ, ໜັກແໜ້ນສົມຄູ່ກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ສາມາດເຊື່ອມໂຍງພາກພື້ນ ແລະ ສາກົນໄດ້ຢ່າງເປັນເຈົ້າການ, ຮັບປະກັນການດຳເນີນຄະດີອາຍາໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ທັງຮັບປະກັນໄດ້ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຂອງຊາດ ລວມເຖິງການສ້າງລັດໃຫ້ກາຍເປັນລັດທີ່ຄຸ້ມຄອງດ້ວຍລະບຽບກົດໝາຍເທື່ອລະກ້າວ.[9] ທັງໝົດນັ້ນ, ແມ່ນແນວທາງທີ່ເປັນເອກະສານສຳຄັນຕົ້ນຕໍ ໃນການຈັດຕັ້ງປະຕິບັດວຽກງານຂອງສານປະຊາຊົນ ເພື່ອໃຫ້ສານປະຊາຊົນ ປະຕິບັດໜ້າທີ່ຂອງຕົນຢ່າງມີຄວາມບໍລິສຸດ, ໂປ່ງໃສ, ຮັບປະກັນໄດ້ຄວາມຍຸຕິທຳຄວາມສະຫງົບ ກໍຄືຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ເປັນການເພີ່ມທະວີນິຕິທຳອີກດ້ວຍ.

### 1.3 ນະໂຍບາຍຂອງລັດກ່ຽວກັບສານປະຊາຊົນ

ໃນແຜນແມ່ບົດການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ ໄດ້ກຳນົດການສ້າງຄວາມເຂັ້ມແຂງໃຫ້ແກ່ສານປະຊາຊົນ ໂດຍມີເນື້ອໃນວ່າ: ສັງລວມພາລະບົດບາດຂອງສານປະຊາຊົນສູງສຸດ ເຂົ້າໃນການຮັບຜິດຊອບ ພິຈາລະນາຄະດີເປັນຂັ້ນລົບລ້າງ, ກຳນົດປະ

[8] ເອກະສານເຊື່ອມຊຶມມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ປີ 2016, ໜ້າ 41.

[9] ທາກຳອ້າງ, ໜ້າ 47-48

ເພນີສານ, ໃຫ້ຄຳແນະນຳແກ່ສານປະຊາຊົນທ້ອງຖິ່ນ ໃນການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງບໍລິຫານ ສານປະຊາຊົນໃຫ້ເປັນເອກະພາບ ແລະ ສາມາດເຄື່ອນໄຫວວຽກງານໄດ້ຢ່າງມີປະສິດທິຜົນ. ຄົ້ນຄວ້າຄວາມອາດສາມາດ ໃຫ້ແກ່ການພິຈາລະນາຄະດີແບບເລັ່ງລັດ ເພື່ອໃຫ້ສານມີສິດອຳນາດໃນການແກ້ໄຂຂໍ້ຂັດແຍ່ງໄດ້ໂດຍໄວ, ປັບປຸງລະບຽບກ່ຽວກັບການບັນຈຸ ຊັບຊ້ອນພະນັກງານສານ, ແຕ່ງຕັ້ງຜູ້ພິພາກສາ ແລະ ເພີ່ມອາຍຸ ແລະ ຄຸນວຸດທິຂອງຜູ້ພິພາກສາ ເພື່ອຮັບປະກັນຫຼັກການຄວາມເປັນເອກະລາດ ແລະ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ, ຄົ້ນຄວ້າ ແລະ ກຳນົດຈັນຍາທຳຂອງຜູ້ພິພາກສາໃຫ້ຈະແຈ້ງ, ຄົ້ນຄວ້າຄວາມອາດສາມາດໃນການສ້າງຕັ້ງຄະນະສານສະເພາະ ຕາມຄວາມຈຳເປັນ ໃຫ້ຄົບຖ້ວນຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ຕາມເງື່ອນໄຂທີ່ເອື້ອອຳນວຍຄວາມສະດວກ. ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສານທ້ອງຖິ່ນທາງດ້ານການຈັດຕັ້ງ ເພື່ອຮັບປະກັນການຕິດຕາມກວດກາ, ການຊີ້ນຳທາງດ້ານວິຊາການ ແລະ ການຄຸ້ມຄອງຄຸນນະພາບຂອງການດຳເນີນຄະດີ ຊຶ່ງເປັນພື້ນຖານໃນການຕີລາຄາປະເມີນຜົນ, ການຊັບຊ້ອນບຸກຄະລາກອນ, ເລື່ອນຊັ້ນຜູ້ພິພາກສາ ແລະ ພະນັກງານຂອງສານ ເພື່ອເຮັດໃຫ້ການຄຸ້ມຄອງພະນັກງານຂອງສານດີຂຶ້ນ.[10]

ເພື່ອພັດທະນາອົງການຈັດຕັ້ງປະຕິບັດກົດໝາຍໃຫ້ເປັນລະບົບຄົບຖ້ວນ, ມີປະສິດທິຜົນ ແລະ ໂປ່ງໃສ, ລັດຖະບານຈຶ່ງໄດ້ສ້າງແຜນແມ່ບົດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ ແຕ່ນີ້ຮອດປີ 2020, ສະນັ້ນ ໃນແຜນແມ່ບົດຈຶ່ງໄດ້ກຳນົດວັດຖຸປະສົງ, ຄວາມຮຽກຮ້ອງຕ້ອງການອັນຈຳເປັນ ແລະ ຍຸດທະສາດກ່ຽວກັບການພັດທະນາອົງການຈັດຕັ້ງປະຕິບັດກົດໝາຍ ໂດຍສະເພາະການສ້າງຄວາມເຂັ້ມແຂງໃຫ້ແກ່ສານປະຊາຊົນແຕ່ນີ້ຮອດປີ 2020 ຄື:

1). ວິເຄາະກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ເພື່ອພັດທະ ນາລະບົບສານປະຊາຊົນໃຫ້ໄປຕາມທິດຕໍ່ໄປນີ້:

- ສັງລວມພາລະບົດບາດຂອງສານປະຊາຊົນສູງສຸດ ເຂົ້າໃນການຮັບຜິດຊອບ: ພິຈາລະນາຄະດີເປັນຂັ້ນລົບລ້າງ, ກຳນົດປະເພນີສານ, ໃຫ້ຄຳແນະນຳແກ່ສານປະຊາຊົນທ້ອງຖິ່ນ ໃນການນຳໃຊ້ກົດໝາຍ ແລະ ການຄຸ້ມຄອງບໍລິຫານສານປະຊາຊົນໃຫ້ເປັນເອກະພາບ ແລະ ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ,

[10] ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນຄວາມສະຫງົບ, ແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ ແຕ່ນີ້ ຮອດປີ 2020, ປີ 2009, ໜ້າ 65.

- ຄົ້ນຄວ້າຄວາມອາດສາມາດໃຫ້ແກ່ການພິຈາລະນາຄະດີແບບເລັ່ງລັດເພື່ອໃຫ້ສານມີສິດອຳນາດໃນການແກ້ໄຂບາງຂໍ້ຂັດແຍ່ງໄດ້ໂດຍໄວ ໂດຍປາສະຈາກຂັ້ນຕອນຕ່າງໆທີ່ເປັນລະບົບຄົບຊຸດ,

- ປັບປຸງລະບຽບການກ່ຽວກັບການບັນຈຸຊັບຊ້ອນພະນັກງານສານ, ແຕ່ງຕັ້ງຜູ້ພິພາກສາ ແລະ ເພີ່ມອາຍຸການ ແລະ ຄຸນວຸດທິຂອງຜູ້ພິພາກສາ ເພື່ອຮັບປະກັນຫຼັກການຄວາມເປັນເອກະລາດ ແລະ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ,

- ຄົ້ນຄວ້າ ແລະ ກຳນົດຈັນຍາທຳຂອງຜູ້ພິພາກສາໃຫ້ຈະແຈ້ງ,

- ຄົ້ນຄວ້າຄວາມອາດສາມາດໃນການສ້າງຕັ້ງຄະນະສານສະເພາະ ຕາມຄວາມຈຳເປັນໃຫ້ຄົບຖ້ວນ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ຕາມເງື່ອນໄຂທີ່ເອື້ອອຳນວຍເຊັ່ນ: ສ້າງຄະນະສານປົກຄອງ, ຄະນະສານເດັກ, ແມ່ຍິງ ແລະ ຊາວໜຸ່ມ.

2). ໃຫ້ຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສານທ້ອງຖິ່ນທາງດ້ານການຈັດຕັ້ງ ເພື່ອຮັບປະກັນການຕິດຕາມກວດກາ, ການຊີ້ນຳທາງດ້ານວິຊາການ ແລະ ການຄຸ້ມຄອງຄຸນນະພາບຂອງການດຳເນີນຄະດີ ຊຶ່ງເປັນພື້ນຖານໃນການຕີລາຄາປະເມີນຜົນ, ການຊັບຊ້ອນບຸກຄະລາກອນ, ເລື່ອນຊັ້ນຜູ້ພິພາກສາ ແລະ ພະນັກງານຂອງສານ ເພື່ອເຮັດໃຫ້ການຄຸ້ມຄອງພະນັກງານຂອງສານດີຂຶ້ນ.

3). ສ້າງພື້ນຖານທາງດ້ານວັດຖຸເຕັກນິກ ແລະ ທາງດ້ານງົບປະມານ ເພື່ອພິມເຜີຍແຜ່ທຸກຄຳຕັດສີນ ແລະ ຄຳພິພາກສາຂອງສານໄດ້ຢ່າງງ່າຍດາຍ.

4). ທົບທວນຄືນສິດອຳນາດຂອງສານປະຊາຊົນແຕ່ລະຂັ້ນ ໃຫ້ສອດຄ່ອງກັບພາລະບົດບາດຂອງໃຜລາວ ທັງນີ້ກໍເພື່ອກຳນົດຄືນຂອບເຂດຄວາມຮັບຜິດຊອບຂອງສານປະຊາຊົນແຕ່ລະຂັ້ນຕ່າງໆຢ່າງຖືກຕ້ອງ ເພື່ອເປັນການເພີ່ມທະວີຄວາມຮັບຜິດຊອບຂອງຜູ້ພິພາກສາຕ້ອງໄດ້ເອົາໃຈໃສ່ປັບປຸງລະບອບເງິນເດືອນ ລະບອບນະໂຍບາຍອື່ນໆ ຕະຫຼອດຮອດລະບຽບການກ່ຽວກັບການປະຕິບັດວິໄນຕໍ່ຜູ້ພິພາກສາ.

5). ຍົກສູງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສານ, ຮັບປະກັນໃຫ້ການພິຈາລະນາໄຕ່ສວນ ແລະ ຕັດສີນຄະດີຢູ່ໃນສານຂັ້ນຕ່າງໆ ດຳເນີນດ້ວຍຄວາມເປັນເອກະລາດ ແລະ ມີແຕ່ຢູ່ພາຍໃຕ້ກົດໝາຍເທົ່ານັ້ນ, ບັນດາອົງການຈັດຕັ້ງອື່ນໆຕະຫຼອດຮອດພະນັກງານລັດຖະກອນ ແລະ ບຸກຄົນທີ່ບໍ່ມີສ່ວນກ່ຽວຂ້ອງບໍ່ມີສິດແຊກແຊງເຂົ້າໃນວຽກງານຂອງສານ ຫຼື ສ້າງຄວາມກົດດັນຕໍ່ສານ ໂດຍການໃຊ້ອຳນາດ ແລະ ອິດທິພົນທີ່ບໍ່ຖືກຕ້ອງຕາມກົດໝາຍ.

6). ທົບທວນຄືນກ່ຽວກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອຮັບປະກັນຫຼັກການປະຊາທິປະໄຕໃນການຕໍ່ສູ້ຄະດີ ເຮັດໃຫ້ການດຳເນີນຄະດີທຸກຂັ້ນຕອນສອດຄ່ອງກັບຫຼັກການນິຕິທຳ, ມະນຸດສະທຳ ແລະ ເປັນທຳ, ເພີ່ມ

ທະວີເງື່ອນໄຂທາງດ້ານກົດໝາຍ ເພື່ອໃຫ້ທະນາຍຄວາມໄດ້ເຂົ້າຮ່ວມຊ່ວຍເຫຼືອລູກຄວາມໃນທຸກຂັ້ນຕອນຂອງການດຳເນີນຄະດີພ້ອມທັງຮັບປະກັນການປົກປ້ອງສິດ ແລະຜົນປະໂຫຍດຂອງພະຍານເຮັດໃຫ້ການປະກອບຫຼັກຖານໃນຄະດີຄົບຖ້ວນຮອບດ້ານ ແລະ ພາວະວິໄສ ບົນພື້ນຖານຂອງກົດໝາຍ.[11]

ເພື່ອຈັດຕັ້ງປະຕິບັດແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍ ຂອງ ສປປ ລາວ ແຕ່ນີ້ຮອດປີ 2020 ໃຫ້ໄດ້ຮັບໝາກຜົນເປັນຢ່າງດີນັ້ນ ສານປະຊາຊົນສູງສຸດຈຶ່ງໄດ້ສ້າງ 6 ແຜນງານ ແລະ 18 ໂຄງການຂຶ້ນໃນການພັດທະນາລະບົບສານປະຊາຊົນ ຊຶ່ງມີເນື້ອໃນດັ່ງນີ້:

ກ. ແຜນງານທີ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງລະບົບສານປະຊາຊົນແຫ່ງ ສປປ ລາວ, ໃນແຜນງານນີ້ປະກອບມີ 3 ໂຄງການຄື: ໂຄງການປັບປຸງກໍ່ສ້າງກົງຈັກການຈັດຕັ້ງຂອງສານປະຊາຊົນໃຫ້ມີຄວາມເຂັ້ມແຂງ, ໂຄງການສ້າງຕັ້ງຄະນະສານສະເພາະຕາມແຕ່ລະຂະແໜງການ ແລະ ໂຄງການສືບຕໍ່ສ້າງຕັ້ງສານເດັກຂຶ້ນໃຫ້ເປັນລະບົບສານຄົບຖ້ວນ,

ຂ. ແຜນງານທີ 2: ປັບປຸງແບບແຜນ, ກົນໄກໃນການຄົ້ນຄວ້າ ພິຈາລະນາຕັດສິນຄະດີ, ແຜນງານນີ້ມີ 2 ໂຄງການຄື: ໂຄງການພັດທະນາຄຸນນະພາບ ແລະ ປະສິດທິຜົນໃນການຄົ້ນຄວ້າພິຈາລະນາຄະດີ ແລະ ໂຄງການຮັບປະກັນການແກ້ໄຂຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ,

ຄ. ແຜນງານທີ 3: ພັດທະນາບຸກຄະລາກອນ ໃຫ້ສານປະຊາຊົນໃຫ້ມີຄຸນນະພາບ, ແຜນງານນີ້ມີ 5 ໂຄງການຄື: ໂຄງການປັບປຸງສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ, ໂຄງການສ້າງ ແລະ ພັດທະນາກົນໄກ, ແບບແຜນວິທີການກໍ່ສ້າງນັກກົດໝາຍ ກ່ອນເຂົ້າເປັນພະນັກງານ ແລະ ຜູ້ພິພາກສາຂອງສານປະຊາຊົນ ໂຄງການຍົກລະດັບຄວາມຮູ້ທາງດ້ານກົດໝາຍ ແລະ ທັກສະໃນການເຮັດວຽກໃຫ້ຕໍ່ເນື່ອງ, ໂຄງການພັດທະນາຄຸນທາດການເມືອງ ແລະ ຈັນຍາທຳຂອງພະນັກງານສານ ແລະ ໂຄງການພັດທະນາພະນັກງານສານປະຊາຊົນທາງດ້ານສຸຂະພາບ, ຮ່າງກາຍ ແລະ ຈິດໃຈ.

ງ. ແຜນງານທີ 4: ສ້າງ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບການປະຕິບັດໜ້າທີ່ວຽກງານຂອງສານ, ໃນແຜນງານນີ້ມີ 2 ໂຄງການຄື: ໂຄງການທົບທວນຄືນກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານແຕ່ລະຂັ້ນ, ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍ,

---

[11] ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນຄວາມສະຫງົບ ແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍ ຂອງ ສປປ ລາວ ແຕ່ນີ້ຮອດ ປີ 2020, ໜ້າ 58-60.

ຈ. ແຜນງານທີ 5: ປັບປຸງພື້ນຖານໂຄງລ່າງ ແລະ ລະບົບຂໍ້ມູນຂ່າວສານຂອງສານປະຊາຊົນ ໃຫ້ທັນສະໄໝ, ແຜນງານນີ້ມີ 3 ໂຄງການຄື: ໂຄງການພັດທະນາພື້ນຖານໂຄງລ່າງ, ປະກອບພາຫະນະ, ອຸປະກອນທີ່ຈຳເປັນ ແລະ ເໝາະສົມໃຫ້ແກ່ສານປະຊາຊົນ, ໂຄງການພັດທະນາລະບົບຂໍ້ມູນ ແລະ ເຄືອຂ່າຍຄອມພິວເຕີ ແລະ ໂຄງການສ້າງເງື່ອນໄຂໃຫ້ແກ່ປະຊາຊົນຮັບຮູ້ ແລະ ເຂົ້າໃຈວຽກງານຂອງສານ,

ສ. ແຜນງານທີ 6: ພັດທະນາຄວາມອາດສາມາດ ເຊື່ອມໂຍງກັບອົງການຍຸຕິທຳໃນພາກພື້ນ ແລະ ສາກົນ, ແຜນງານນີ້ມີ 3 ໂຄງການຄື: ໂຄງການສືບຕໍ່ພົວພັນຮ່ວມມືທາງດ້ານຍຸຕິທຳ ແລະ ກົດໝາຍກັບປະເທດເພື່ອນມິດຍຸດທະສາດ ເຊັ່ນ: ສສ ຫວຽດນາມ, ສປ ຈີນ, ບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້, ອາຊີປາຊີຟິກ ແລະ ສາກົນ, ໂຄງການສືບຕໍ່ພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ ເພື່ອພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນທາງດ້ານຍຸຕິທຳ ແລະ ກົດໝາຍ ແລະ ໂຄງການເພີ່ມທະວີຍົກສູງຄວາມຮູ້ຄວາມສາມາດຂອງຜູ້ພິ ພາກສາໃຫ້ໄດ້ມາດຕະຖານສາມາດເຮັດວຽກກັບອົງການຍຸຕິທຳໃນພາກພື້ນ ແລະ ສາກົນ.[12]

### 1.4 ນະໂຍບາຍຂອງລັດກ່ຽວກັບການດຳເນີນຄະດີແພ່ງ

ການດຳເນີນຄະດີແພ່ງ ແມ່ນການເຄື່ອນໄຫວຂອງສານ ແລະ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອພິຈາລະນາແກ້ໄຂການຮ້ອງຟ້ອງ ແລະ ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຂໍ້ຂັດແຍ່ງອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍນັ້ນ, ລັດ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວດຳເນີນຄະດີແພ່ງ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ເຂົ້າໃນການດຳເນີນຄະດີ ເພື່ອເຮັດໃຫ້ການພິຈາລະນາຕັດສິນຄະດີ ມີຄວາມຖືກຕ້ອງ ແລະ ເປັນທຳ. ລັດ ສົ່ງເສີມການໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ສ້າງເງື່ອນໄຂ ໃຫ້ປະຊາຊົນເຂົ້າເຖິງຂະບວນການຍຸຕິທຳ ແລະ ຮັບປະກັນໃຫ້ຄູ່ຄວາມໄດ້ນຳໃຊ້ສິດ ແລະ ປະຕິບັດພັນທະຂອງຕົນ ໃນການດຳເນີນຄະດີ ຢ່າງຖືກຕ້ອງ. ພ້ອມດຽວກັນນັ້ນ, ລັດ ຍັງມີນະໂຍບາຍປົກປ້ອງ ຜູ້ພິພາກສາ, ພະນັກງານອື່ນຂອງສານ ລວມທັງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຕ້ອງໄດ້ ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ ຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ ແລະ ໃນການດຳເນີນຄະດີແພ່ງ, ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການດຳເນີນຄະດີແພ່ງ ດ້ວຍການແລກ

---

[12] ປື້ມ 30 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສານປະຊາຊົນແຫ່ງ ສປປ ລາວ ປີ 1982-2012, ໜ້າ 44-48.

ປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ຜູ້ພິພາກສາ ໂດຍສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ[13] ທັງໝົດນັ້ນ, ເປັນການສ່ອງແສງໃຫ້ເຫັນເຖິງແນວທາງຂອງພັກ ຕໍ່ການດຳເນີນຄະດີແພ່ງ ເພື່ອເຮັດໃຫ້ການດຳເນີນຄະດີດຳເນີນໄປດ້ວຍຄວາມຮອບດ້ານ, ຖືກຕ້ອງ, ພາວະວິໄສ ແລະ ຮັບປະກັນໄດ້ຄວາມຍຸຕິທຳ ກໍຄືຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ທັງໝົດນັ້ນ, ເປັນການສ່ອງແສງໃຫ້ເຫັນເຖິງນະໂຍບາຍຂອງລັດ ສປປ ລາວ ໃນການດຳເນີນຄະດີແພ່ງ ເພື່ອເຮັດໃຫ້ການດຳເນີນຄະດີດັ່ງກ່າວນັ້ນດຳເນີນໄປດ້ວຍຄວາມຍຸຕິທຳ ປະກອບສ່ວນໃນການສ້າງສັງຄົມ ໃຫ້ມີຄວາມສະຫງົບ ແລະ ສ້າງສະຕິກົດໝາຍຂອງພົນລະເມືອງໃຫ້ນັບມື້ສູງຂຶ້ນ.

### 1.5 ສານປະຊາຊົນ ແລະ ການດຳເນີນຄະດີ

ກົດໝາຍວ່າດ້ວຍ ສານປະຊາຊົນ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ, ກວດກາຂອງສານປະຊາຊົນ ແນໃສ່ຮັບປະກັນ ການປະຕິບັດໜ້າທີ່ຂອງສານ ໃຫ້ມີຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ເຮັດໃຫ້ການດຳເນີນຄະ ດີ ເປັນຕົ້ນ ການພິຈາລະນາຕັດສິນ ແລະ ພິພາກສາຄະດີ ໃຫ້ພາວະວິໄສ, ມີຄວາມຖືກຕ້ອງ, ໂປ່ງໄສ, ຍຸຕິທຳ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ສານປະຊາຊົນ ແມ່ນອົງການຕຸລາການ ທີ່ເຮັດໜ້າທີ່ພິຈາລະນາຕັດສິນຄະດີ. ຢູ່ ສປປ ລາວ ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີ ບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.[14] ສານປະຊາຊົນ ແມ່ນອົງການຕຸລາການ, ມີພາລະບົດບາດດຳເນີນການພິຈາລະນາຕັດສິນຄະດີ ແນໃສ່ສຶກສາອົບຮົມພົນລະເມືອງ ໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ປົກປັກຮັກສາ ແລະ ເສີມຂະຫຍາຍ ໝາກຜົນຂອງການປະຕິວັດ ລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ, ປົກປັກຮັກສາສິດ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມຍຸຕິທຳ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເພີ່ມທະວີນິຕິທຳ, ກຳຈັດ ແລະ ສະກັດກັ້ນການລະເມີດກົດໝາຍ.

[13] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 7.

[14] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2009, ມາດຕາ 1 ແລະ 2.

ສານປະຊາຊົນ ມີສິດ ແລະ ໜ້າທີ່ໃນການສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມ, ພິຈາລະນາຕັດສິນຄະດີ, ໂຄສະນາ, ເຜີຍແຜ່ລະບຽບກົດໝາຍ, ຊອກຫາ, ກໍາຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ມີການກະທໍາຜິດ, ຍົກລະດັບຄວາມຮູ້ທາງດ້ານການເມືອງ, ສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍ ຂອງພົນລະເມືອງໃຫ້ສູງຂຶ້ນ, ປະສານສົມທົບກັບອົງການຕ່າງໆທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທໍາ ແລະ ກົດໝາຍ, ສະຫຼຸບລາຍງານການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ ຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ.

ສານປະຊາຊົນຕັດສິນ ມີສາມຂັ້ນ ຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ຊຶ່ງຄະດີທີ່ຄູ່ຄວາມຮັບຮູ້ນໍາກັນແລ້ວ, ຄະດີທີ່ມີລັກສະນະເບົາ ຫຼື ມີມູນຄ່າບໍ່ສູງຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ຈະໄດ້ຮັບການພິຈາລະນາ ເປັນຂັ້ນຕົ້ນ ແລະ ຂັ້ນອຸທອນ ເທົ່ານັ້ນ ໂດຍບໍ່ໃຫ້ສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານ ເວັ້ນເສຍແຕ່ໄດ້ຮັບການຕົກລົງຂອງຄະນະປະທານສານຂັ້ນອຸທອນ ໃນກໍລະນີມີການລະເມີດກົດໝາຍ ເຊັ່ນ ການປະກອບຄະນະສານ, ສານບໍ່ມີສິດອໍານາດ ຫຼື ສານຕັດສິນ ເກີນສິດອໍານາດ, ການລະເມີດຫຼັກການຂອງການໄຕ່ສວນຄະດີ, ການຕີຄວາມໝາຍຂອງເຫດການ ຫຼື ການນໍາໃຊ້ກົດໝາຍບໍ່ຖືກຕ້ອງ.

ກົດໝາຍກໍານົດວ່າ ສານປະຊາຊົນເຂດ ຕັດສິນເປັນຂັ້ນຕົ້ນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ. ສານປະຊາຊົນແຂວງ, ນະຄອນຫຼວງ ຕັດສິນຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ ເປັນ 2 ຂັ້ນ ຄື: ພິຈາລະນາເປັນຂັ້ນຕົ້ນ ຄະດີທີ່ບໍ່ຢູ່ໃນສິດອໍານາດຂອງສານປະຊາຊົນເຂດ ແລະ ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເຂດ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ.

ສ່ວນສານປະຊາຊົນພາກ ພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍຄະດີທີ່ສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ, ພິຈາລະນາເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ. ສານປະຊາຊົນສູງສຸດ ພິພາກສາເປັນຂັ້ນລົບລ້າງທາງດ້ານກົດໝາຍຄະດີທີ່ສານປະຊາຊົນພາກໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ.[15] ໝາຍຄວາມວ່າ ສານປະຊາຊົນພາກ ດໍາເນີນຄະດີເປັນທັງຂັ້ນອຸທອນໃນຄະດີ

[15] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2008, ມາດຕາ 5.

ທີ່ສານປະຊາຊົນແຂວງ ແລະ ນະຄອນຫຼວງ ພິຈາລະນາເປັນຂັ້ນຕົ້ນ ແລະ ພ້ອມດຽວກັນນັ້ນ ສານປະຊາຊົນພາກ ກໍດໍາເນີນຄະດີເປັນຂັ້ນລົບລ້າງໃນຄະດີທີ່ສານປະຊາຊົນເຂດ.

### 1.6 ຜູ້ຮັບຜິດຊອບໃນການດໍາເນີນຄະດີແພ່ງ

ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ບັນຍັດກ່ຽວກັບຜູ້ຮັບຜິດຊອບ ໃນການດໍາເນີນຄະດີແພ່ງ ທີ່ປະກອບດ້ວຍປະທານ, ບັນດາຮອງປະທານສານ, ຫົວໜ້າຄະນະສານ, ຮອງຫົວໜ້າຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານວິຊາການ. ໃນການດໍາເນີນຄະດີ ປະທານ ແລະ ບັນດາຮອງປະທານສານ ມີສິດ ແລະ ໜ້າທີ່ ໃນການຊຸກຍູ້ຕິດຕາມການປະຕິບັດແຜນການດໍາເນີນຄະດີ ຂອງແຕ່ລະຄະນະສານ ແລະ ປະຕິບັດ ສິດ, ໜ້າທີ່ອື່ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ສານປະຊາຊົນ. ປະທານ ແລະ ບັນດາຮອງປະທານສານ ມີສິດນັ່ງເປັນປະທານ ໃນທຸກຄະນະສານຕັດສິນຂອງສານປະຊາຊົນຂັ້ນຂອງຕົນ. ຫົວໜ້າຄະນະສານ ມີສິດ ແລະ ໜ້າທີ່ ໃນການດໍາເນີນຄະດີ ໃນການກວດກາ ແລະ ແຈກຢາຍສໍານວນຄະດີ ໃຫ້ຜູ້ພິພາກສາຄົ້ນຄວ້າ, ຕິດຕາມ, ກວດກາ ແລະ ຊຸກຍູ້ການດໍາເນີນຄະດີ ໃຫ້ມີຄວາມວ່ອງໄວ. ຮອງຫົວໜ້າຄະນະສານ ມີໜ້າທີ່ຊ່ວຍຫົວໜ້າຄະນະສານ ໃນການປະຕິບັດໜ້າທີ່ວຽກງານ ແລະ ອາດຈະໄດ້ຮັບໜ້າທີ່ໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າຄະນະສານ. ໃນກໍລະນີ ທີ່ຫົວໜ້າຄະນະສານບໍ່ຢູ່ ຫຼື ຕິດຂັດ ແມ່ນຮອງຫົວໜ້າຄະນະສານ ຜູ້ໄດ້ຮັບມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ.[16]

ຜູ້ພິພາກສາ ມີສິດ ແລະ ໜ້າທີ່ ໃນການດໍາເນີນຄະດີ ຄືກໍານົດແຜນການຄົ້ນຄວ້າຄະດີ ທີ່ຕົນຮັບຜິດຊອບ, ຄົ້ນຄວ້າສໍານວນຄະດີ ທີ່ໄດ້ຮັບມອບໝາຍ, ມອບສໍານວນຄະດີ ໃຫ້ຜູ້ຊ່ວຍຜູ້ພິພາກສາ ທໍາການຄົ້ນຄວ້າ, ເອົາຄໍາໃຫ້ການຂອງໂຈດ, ຈໍາເລີຍ ແລະ ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການດໍາເນີນຄະດີ, ຮັບຟັງ, ຄົ້ນຄວ້າຄໍາສະເໜີ ຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີ, ເກັບກໍາຂໍ້ມູນຫຼັກຖານ ກ່ຽວກັບຄະດີ ເປັນຕົ້ນລົງເກັບກໍາຂໍ້ມູນ, ກວດກາບັນຫາທີ່ ຂັດແຍ່ງໃນຄະດີ, ຄົ້ນຄວ້າການອອກຄໍາສັ່ງ, ຄໍາຊີ້ຂາດ ຫຼື ການນໍາໃຊ້ມາດຕະການໃດໜຶ່ງ, ຄົ້ນຄວ້າການຕົກລົງໂຈະການດໍາເນີນຄະດີ, ໄກ່ເກ່ຍ ຫຼື ທໍາການຊ້ອງໜ້າຄູ່ຄວາມໃນຄະດີ, ນັ່ງເປັນຄະນະສານຕັດສິນຄະດີ, ຕົກລົງໃຫ້ຈ່າສານ ອອກໝາຍຮຽກຄູ່ຄວາມ ຫຼື ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ອື່ນ ເຂົ້າມາໃຫ້ການ, ຊີ້ແຈງກ່ຽວກັບຄະດີ, ຂຽນຄໍາຕັດສິນ ຫຼື ຄໍາພິພາກສາໃນຄະດີທີ່ຕົນຮັບຜິດຊອບ, ໄດ້ຮັບການບໍາລຸງ, ຍົກລະດັບ ກ່ຽວກັບວຽກງານດໍາເນີນຄະດີ, ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດສັກ

---

[16] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 56.

ສຽງ ແລະ ຊັບສິນສ່ວນຕົວ ຫຼື ຄອບຄົວ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ. ຜູ້ຊ່ວຍຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ຄື: ຊ່ວຍຜູ້ພິພາກສາ ໃນການຄົ້ນຄວ້າສຳນວນຄະດີ, ຊ່ວຍຜູ້ພິພາກສາ ໃນການເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ຊ່ວຍຜູ້ພິພາກສາ ໃນການເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ ເປັນຕົ້ນ ລົງເກັບກຳຂໍ້ມູນ, ກວດກາບັນຫາທີ່ຂັດແຍ່ງ ໃນຄະດີ, ເຂົ້າຮ່ວມໃນການໄກ່ເກ່ຍ ຫຼື ທຳການຊ້ອງໜ້າຄູ່ຄວາມ ໃນຄະດີ, ສະຫຼຸບລາຍງານ ຄະດີທີ່ຕົນຮັບຜິດຊອບຄົ້ນຄວ້າ ຕໍ່ຜູ້ພິພາກສາ, ຊ່ວຍຜູ້ພິພາກສາ ໃນການຂຽນຄຳຕັດສິນ ແລະ ຄຳພິພາກສາຂອງສານ, ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານດຳເນີນຄະດີ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ, ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ, ຊື່ສຽງ ແລະ ຊັບສິນສ່ວນຕົວ ຫຼື ຄອບຄົວ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.[17]

ພ້ອມດຽວກັນນັ້ນ, ຍັງມີຈ່າສານ ຊຶ່ງສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ຄື: ຮັບ ແລະ ກວດກາ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບຄະດີ, ປະກອບສຳນວນ, ຂຶ້ນຟ້ອງ, ເຮັດບັນຊີຄະດີ, ຈັດລຽງເອກະສານ ໃນສຳນວນຄະດີ, ອອກໝາຍຮຽກ, ໝາຍເຊີນ ຕາມການຕົກລົງຂອງຜູ້ພິພາກສາ, ເຂົ້າຮ່ວມ ບັນທຶກການເອົາຄຳໃຫ້ການ, ການໄກ່ເກ່ຍ ແລະ ການໄຕ່ສວນ, ກະກຽມການປະຊຸມສານ, ກວດກາຜູ້ເຂົ້າຮ່ວມ, ປະກາດລະບຽບປະຊຸມສານ ໃຫ້ ຜູ້ເຂົ້າຮ່ວມໃນການດຳເນີນຄະດີຊາບ ແລະ ປະຕິບັດ, ອະທິບາຍ, ຊີ້ແຈງເຫດຜົນ ໃຫ້ຄູ່ຄວາມໃນຄະດີເຂົ້າໃຈ ກ່ຽວກັບຜົນຂອງການຕັດສິນ ຫຼື ພິພາກສາຄະດີຂອງສານ ພ້ອມທັງແຈ້ງສິດ ໃນການຂໍອຸທອນ ຫຼື ຂໍລົບລ້າງ, ເຊັນຢັ້ງຢືນສຳເນົາ ຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມລະບຽບກົດໝາຍ, ເຮັດບັນຊີ, ເກັບມ້ຽນຂອງກາງຄະດີ, ເກັບ, ຄຸ້ມຄອງເງິນຄ່າທຳນຽມສານ ແລະ ເງິນວາງສານຕາມລະບຽບກົດໝາຍ, ສະຫຼຸບສະຖິຕິຄະດີ, ສົ່ງຄຳຕັດສິນ, ຄຳພິ ພາກສາ ຫຼື ເອກະສານອື່ນຂອງສານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ, ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານກົດໝາຍ ແລະ ວຽກງານອື່ນ ທີ່ຕົນ ຮັບຜິດຊອບ, ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ ຊື່ສຽງ ແລະ ຊັບສິນສ່ວນຕົວ ຫຼື ຄອບຄົວ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ. ນອກຈາກນັ້ນ, ຍັງມີພະນັກງານວິຊາການຂອງຄະນະສານ ໃນການເຄື່ອນໄຫວວຽກງານປິ່ນອ້ອມການຄົ້ນຄວ້າ ແລະ ພິຈາລະນາເປັນຂັ້ນລົບລ້າງຂອງສານປະຊາຊົນພາກ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ເປັນໄປຕາມກົດໝາຍ ແລະ ລະບຽບການ.

---

[17] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 58.

ນອກຈາກນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຍັງກຳນົດຜູ້ຮັບຜິດຊອບໃນການດຳເນີນຄະດີແພ່ງຂອງອົງການໄອຍະການປະຊາຊົນ ຊຶ່ງປະກອບດ້ວຍຫົວໜ້າອົງການໄອຍະການປະຊາຊົນ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ເພາະວ່າອົງການໄອຍະການປະຊາຊົນ ແມ່ນ ອົງການລັດ ທີ່ເຮັດໜ້າທີ່ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ ແລະ ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໃຫ້ດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງ ຕາມຂັ້ນຕອນ ເພື່ອໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຖືກຕ້ອງ ແລະ ຍຸຕິທຳ.[18]

### 1.7 ຫຼັກການພື້ນຖານຂອງການດຳເນີນຄະດີຢູ່ສານ

ສານປະຊາຊົນ ພິຈາລະນາຄະດີອາຍາ, ແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ຄະດີອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ການດຳເນີນຄະດີຢູ່ສານ ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1). ຮັບປະກັນຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ ມີຄວາມໝາຍວ່າ ພົນລະເມືອງລາວທຸກຄົນ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ. ພົນລະເມືອງລາວ ມີສິດຮ້ອງຟ້ອງຕໍ່ສານ ກ່ຽວກັບຂໍ້ຂັດແຍ່ງທາງແພ່ງ ຊຶ່ງກໍຖືວ່າເປັນການປະຕິບັດຕາມເນື້ອໃນຂອງລັດຖະທຳມະນູນ ທີ່ບັນຍັດວ່າ: ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.[19] ຄົນຕ່າງປະເທດ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ ທີ່ຢູ່ໃນດິນແດນແຫ່ງ ສປປ ລາວ ມີສິດເທົ່າທຽມກັນກັບພົນລະເມືອງລາວ ຖ້າວ່າກົດໝາຍຫາກບໍ່ໄດ້ກຳນົດໄວ້ຢ່າງອື່ນ.

2). ຮັບປະກັນສິດຂອງພົນລະເມືອງ ໃນການຕໍ່ສູ້ຄະດີ ມີເນື້ອໃນວ່າ ຜູ້ຖືກຫາໃນຄະດີອາຍາ ແລະ ຄູ່ຄວາມໃນຄະດີແພ່ງ ມີສິດຕໍ່ສູ້ຄະດີດ້ວຍຕົນເອງ ຫຼື ເອົາທະນາຍຄວາມຊ່ວຍເຫຼືອທາງດ້ານກົດໝາຍ, ເອົາຜູ້ປົກປ້ອງອື່ນ ຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ. ລະບຽບການເຂົ້າຮ່ວມຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການດຳເນີນຄະດີ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຊຶ່ງມີເນື້ອໃນ

[18] ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, (ສະບັບປັບປຸງ), ປີ 2009, ມາດຕາ 2.

[19] ລັດຖະທຳມະນູນ ແຫ່ງ ສປປ ລາວ, (ສະບັບປັບປຸງ), ປີ 2015, ມາດຕາ 35.

ວ່າ: ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີສິດ ໃນການປຶກສາຫາລືກັບຄູ່ຄວາມ, ຍື່ນຄໍາຮ້ອງຟ້ອງ, ຄໍາຮ້ອງຂໍ ຫຼື ຄໍາແກ້ຟ້ອງ, ຄໍາຟ້ອງແຍ່ງ ໃນຄະດີ, ຂໍເບິ່ງເອກະສານ ຢູ່ໃນສໍານວນຄະດີ, ອັດສໍາເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ທີ່ຈໍາເປັນອອກຈາກສໍານວນຄະດີ ແຕ່ຕ້ອງຮັກສາຄວາມລັບທາງດ້ານການຄ້າ ຫຼື ຂໍ້ມູນອື່ນ ທີ່ເປັນຄວາມລັບ, ສະເໜີ ແລະ ປະກອບຫຼັກຖານ ທີ່ກ່ຽວຂ້ອງກັບຄະດີຕໍ່ສານ, ເຂົ້າຮ່ວມໃນການໄຕ່ສວນຄະດີ ແລະ ໃຫ້ຄໍາເຫັນໃນທີ່ປະຊຸມສານ, ສະເໜີຄ້ານຕົວຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ, ຮ້ອງທຸກຕໍ່ການກະທໍາ ຫຼື ຄໍາສັ່ງຂອງຜູ້ພິພາກສາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ, ຂໍອຸທອນ, ຂໍລົບລ້າງ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ ຍົກເວັ້ນຄໍາຕົກລົງຂອງສານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້, ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ ຊື່ສຽງ ຫຼື ຊັບສິນ ຍ້ອນການຕໍ່ສູ້ຄະດີໃຫ້ລູກຄວາມຂອງຕົນ, ປະຕິບັດສິດອື່ນ ຕາມລະບຽບກົດໝາຍ. ພ້ອມດຽວກັນນັ້ນ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີພັນທະ ໃນການນໍາໃຊ້ທຸກວິທີການປົກປ້ອງ ທີ່ໄດ້ກໍານົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ຄວາມຜູ້ທີ່ຕົນປົກປ້ອງ, ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍແກ່ຄູ່ຄວາມຜູ້ທີ່ຕົນປົກປ້ອງ, ປະກອບສ່ວນຊອກຫາຫຼັກຖານ ເພື່ອໃຫ້ການດໍາເນີນຄະດີ ຖືກຕ້ອງ ແລະ ຍຸຕິທໍາ ບົນພື້ນຖານການປະຕິບັດຈັນຍາທໍາຂອງຕົນ.[20]

3). ຮັບປະກັນຄວາມເປັນເອກະລາດໃນເວລາດໍາເນີນຄະດີ ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີ, ສານ ມີຄວາມເປັນເອກະລາດ ແລະ ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ ຊຶ່ງໝາຍຄວາມວ່າ ສານຈະຕ້ອງບໍ່ລໍາອຽງເພາະເຫດຜົນ ຫຼື ອໍານາດໃດໆ ມີແຕ່ປະຕິບັດໜ້າທີ່ຂອງຕົນຕາມກົດໝາຍ ແລະ ລະບຽບການກ່ຽວກັບການດໍາເນີນຄະດີທີ່ກ່ຽວຂ້ອງເທົ່ານັ້ນ.

4). ເຄົາລົບ ແລະ ປະຕິບັດກົດໝາຍ ໃນການພິຈາລະນາຄະດີ ມີຄວາມໝາຍວ່າ ໃນການພິຈາລະນາຕັດສິນຄະດີ ສານຕ້ອງອີງໃສ່ຫຼັກຖານ ແລະ ປະຕິບັດຕາມກົດໝາຍແຫ່ງ ສປປ ລາວ. ໃນກໍລະນີທີ່ມີບັນຫາໃດໜຶ່ງ ຫາກບໍ່ໄດ້ກໍານົດໄວ້ໃນກົດໝາຍ ສານຕ້ອງຕັດສິນບັນຫານັ້ນໃຫ້ສອດຄ່ອງກັບຫຼັກການນິຕິທໍາ ແລະປະເພນີສານ. ຄໍາພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງ ໃນຄະດີອາຍາ ຊຶ່ງກົດ ໝາຍກໍານົດໄວ້ບໍ່ຊັດເຈນ, ຄະດີແພ່ງ, ການຄ້າ, ຄອບຄົວ ແລະ ເດັກ ຊຶ່ງກົດໝາຍບໍ່ໄດ້ກໍານົດ ຫຼື ໄດ້ກໍານົດໄວ້ແຕ່ບໍ່ຈະແຈ້ງນັ້ນ ໃຫ້ຖືເປັນປະເພນີສານ ຊຶ່ງສານປະຊາຊົນທຸກຂັ້ນຕ້ອງໄດ້ປະຕິບັດຕາມ ຈົນກວ່າບັນ ຫານັ້ນ ຈະໄດ້ກໍານົດໄວ້ໃນກົດໝາຍ. ສໍາລັບຄໍາພິພາກສາຂອງສານຂັ້ນລົບລ້າງ

---

[20] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 87.

ຂອງສານປະຊາຊົນພາກ ນັ້ນ ຈະເປັນປະເພນີສານໄດ້ ກໍຕໍ່ເມື່ອມີຄຳແນະນຳຂອງສານປະຊາຊົນສູງສຸດ.[21]

5). ຮັບປະກັນ ການພິຈາລະນາຄະດີ ເປັນໝູ່ຄະນະ ໝາຍຄວາມວ່າ ຄະນະສານຕັດສິນຂອງສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເຂດ ແລະ ສານທະຫານ ປະກອບດ້ວຍຜູ້ພິພາກສາ ສາມຄົນ, ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ. ຄຳຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ. ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ ໂດຍທາງປະຕິບັດແລ້ວ, ຄະນະສານຕັດສິນຂອງປະຊາຊົນແຕ່ລະຂັ້ນ ຕ້ອງປະກອບດ້ວຍຜູ້ພິພາກສາຢ່າງໜ້ອຍສາມຄົນ ແລະ ການຕັດສິນ ຕ້ອງຖືເອົາສຽງສອງໃນສາມ ຈຶ່ງຖືວ່າເປັນສຽງສ່ວນຫຼາຍ.

6). ໃຫ້ໃຊ້ພາສາລາວ ໃນການດຳເນີນຄະດີ ໃນການດຳເນີນຄະດີ ໃຫ້ໃຊ້ພາສາລາວເທົ່ານັ້ນ, ກໍລະນີທີ່ຜູ້ເຂົ້າຮ່ວມໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວ ມີສິດໃຊ້ ພາສາຂອງຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ. ຜູ້ແປພາສາໃນການດຳເນີນຄະດີແພ່ງ ມີສິດ ໃນການຮັບຮູ້, ສຶກສາຄົ້ນຄວ້າຂໍ້ມູນກ່ຽວກັບຄະດີ ກ່ອນການແປພາສາ, ໄດ້ຮັບຄ່າຕອບແທນໃນການແປພາສາ ຕາມລະບຽບການ, ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ ຊື່ສຽງ ແລະ ຊັບສິນ ທີ່ກ່ຽວຂ້ອງກັບການແປພາສາ ໃນການດຳເນີນຄະດີ ແລະ ຜູ້ແປພາສາ ມີພັນທະ ໃນການແປພາສາໃຫ້ຖືກຕ້ອງ ຕາມເນື້ອໃນຂອງການເວົ້າ ແລະ ເອກະສານ, ເຂົ້າມາແປພາສາ ຕາມການແຕ່ງຕັ້ງຂອງສານ, ຮັບຜິດຊອບຕໍ່ການແປຂອງຕົນ, ຮັກສາຄວາມລັບກ່ຽວກັບຄະດີ ຕາມຄຳສັ່ງຂອງສານ.[22]

7). ຮັບປະກັນການພິຈາລະນາຄະດີຢູ່ທີ່ປະຊຸມສານ ຢ່າງເປີດເຜີຍ ການພິຈາລະນາຄະດີຢູ່ທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ຄະດີ ຫາກກ່ຽວຂ້ອງກັບຄວາມລັບຂອງລັດ ຫຼື ຂອງສັງຄົມ ແລະ ຄະດີເດັກນັ້ນ ຕ້ອງດຳເນີນຢ່າງປິດລັບ.

8). ເຄົາລົບ ແລະ ຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ຢ່າງເຂັ້ມງວດ ມີຄວາມໝາຍວ່າ ສານ ອອກຄຳຕົກລົງໃນນາມ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ. ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ. ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ມີຜົນບັງຄັບປະຕິບັດ ແລະ ບໍ່ສາມາດປ່ຽນແປງໄດ້ແຕ່

---

[21] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2008, ມາດຕາ 12.

[22] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 85.

ຢ່າງໃດ ເວັ້ນເສັຍແຕ່ກໍລະນີພິເສດເປັນຕົ້ນ ມີຫລັກຖານໃໝ່ ຈິ່ງມີສິດສະເໜີຮື້ຟື້ນ ຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.[23]

ນອກຈາກນັ້ນ, ໃນການດຳເນີນຄະດີແພ່ງ ສານປະຊາຊົນພາກ ຕ້ອງປະຕິບັດຕາມຫຼັກການຂອງການດຳເນີນຄະດີແພ່ງຢ່າງເຂັ້ມງວດ ຊຶ່ງບັນດາຫຼັກການດັ່ງກ່າວນັ້ນປະກອບດ້ວຍເນື້ອໃນລະອຽດຄື:

ຫຼັກການສິດ ແລະ ພັນທະຂອງສານໃນການພິຈາລະນາຕັດສິນຄະດີ ຢູ່ ສປປ ລາວ ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີ ບົນພື້ນຖານການເຄົາລົບກົດໝາຍ ຢ່າງເຂັ້ມງວດ. ເມື່ອມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເຊັ່ນ ມີຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ແກ້ໄຂ ຫຼື ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ, ມີຄຳຮ້ອງຂໍຂອງບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ພິຈາລະນາຮັບຮູ້ບັນຫາໃດໜຶ່ງ, ມີຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ກົດໝາຍອະນຸຍາດໃຫ້ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ, ມີຄຳຮ້ອງຟ້ອງຂອງໄອຍະການປະຊາຊົນ ເພື່ອປົກປ້ອງຜົນປະໂຫຍດຂອງລັດ ຫຼື ສັງຄົມ ສານມີພັນ ທະທຳການໄກ່ເກ່ຍ ຫຼື ພິຈາລະນາຕັດສິນ ພາຍຫຼັງໄດ້ເກັບກຳ, ກວດກາ ຊັ່ງຊາ ແລະ ຕີລາຄາຂໍ້ມູນ ຫຼັກຖານແລ້ວ.

ຫຼັກການໂຕ້ແຍ່ງ ແລະ ການໂຕ້ຖຽງ ມີຄວາມໝາຍວ່າ ໃນການດຳເນີນຄະດີ ສານຕ້ອງຮັບປະກັນ ໃຫ້ຄູ່ຄວາມໄດ້ມີຄຳເຫັນ ຫຼື ຊີ້ແຈງຂໍ້ກ່າວອ້າງຂອງຕົນ ຫຼື ໂຕ້ແຍ່ງ ຕໍ່ ຫຼັກຖານຂອງຝ່າຍກົງກັນຂ້າມ. ໃນການໄຕ່ສວນ ຂອງຄະນະສານ ຕ້ອງຮັບປະກັນໃຫ້ຄູ່ຄວາມໄດ້ນຳສະເໜີຫຼັກຖານ ແລະ ອະທິບາຍ ຊີ້ແຈງຂໍ້ມູນຫຼັກຖານຂອງຕົນ ຫຼື ໂຕ້ຖຽງ ຕໍ່ຫຼັກຖານຂອງຝ່າຍກົງກັນຂ້າມ.[24]

ຫຼັກການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ສານ ຕ້ອງນຳໃຊ້ບັນດາມາດຕະການ ທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອໃຫ້ການເກັບກຳຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີ ໃຫ້ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແນໃສ່ເຮັດໃຫ້ການກຳນົດເຫດການ, ປະເດັນຂັດແຍ່ງໃນຄະດີ ມີຄວາມແຈ້ງຂາວ, ຊັດເຈນ ຮັບປະກັນໃຫ້ການຕັດສິນມີ ຄວາມຖືກຕ້ອງ ແລະ ຍຸຕິທຳ. ສານ ຕ້ອງແຈ້ງສິດ ແລະ ພັນທະຂອງຄູ່ຄວາມ ໃນການຕໍ່ສູ້ຄະດີ ແລະ ປະກອບຫຼັກຖານຕໍ່ສານ, ແນະນຳໃຫ້ຄູ່ຄວາມປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຫຼັກການໄກ່ເກ່ຍ, ສານ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການໄກ່ເກ່ຍຄູ່ຄວາມໂດຍການຊອກທຸກ ເງື່ອນໄຂ ແລະ ວິທີການ ເພື່ອໃຫ້ຄູ່ຄວາມສາມາດຕົກລົງກັນດ້ວຍດີ ຢູ່

---

[23] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2008, ມາດຕາ 16.

[24] ຄະນະຄົ້ນຄວ້າກົດໝາຍດຳເນີນຄະດີແພ່ງ, ປຶ້ມຄູ່ມືການດຳເນີນຄະດີແພ່ງເປັນຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ, ປີ 2014, ໜ້າ 15.

ໃນທຸກຂັ້ນຕອນຂອງການດຳເນີນຄະດີ ແລະ ສານທຸກຂັ້ນ. ການໄກ່ເກ່ຍຢູ່ສານປະຊາຊົນແມ່ນມີຄວາມສຳຄັນໃນການດຳເນີນຄະດີ ແລະ ສາມາດກຳນົດການໄກ່ເກ່ຍ 2 ວິທີ ຄື:

- ການໄກ່ເກ່ຍໃນການຄົ້ນຄວ້າຄະດີ,
- ການໄກ່ເກ່ຍໃນເວລາພິຈາລະນາຄະດີໃນທີ່ປະຊຸມສານ.[25]

ການໄກ່ເກ່ຍໃນການຄົ້ນຄວ້າຄະດີ, ຖ້າວ່າ ຄຳຮ້ອງຟ້ອງ ແລະ ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງຂອງຄູ່ຄວາມທີ່ຍື່ນຕໍ່ສານນັ້ນຫາກປະຕິບັດຖືກຕ້ອງຕາມລະບຽບກົດໝາຍແລ້ວສານຕ້ອງປະກອບເປັນສຳນວນຄະດີ ແລະ ຂຶ້ນຟ້ອງຄະດີຕາມລະບຽບການ.[26] ແຕ່ກ່ອນຈະນຳເອົາຄະດີຂຶ້ນມາພິຈາລະນານັ້ນ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກຳນົດໄວ້ນັ້ນຈະຕ້ອງນຳເອົາຄະດີດັ່ງກ່າວມາໄກ່ເກ່ຍເສຍກ່ອນ. ຜູ້ທີ່ຮັບຜິດຊອບໃນການໄກ່ເກ່ຍນັ້ນໄດ້ແກ່ປະທານ ຫຼື ຫົວໜ້າຄະນະສານ ຫຼື ຜູ້ພິພາກສາ ຫຼື ຜູ້ທີ່ຖືກມອບໝາຍໃນການໄກ່ເກ່ຍ. ກ່ອນຈະນຳເອົາຄະດີອອກມາພິຈາລະນານັ້ນຄະນະສານການຄ້າຕ້ອງຄົ້ນຄວ້າ ແລະ ຊອກຫາວິທີທາງເພື່ອທຳການໄກ່ເກ່ຍໃຫ້ຄູ່ຄວາມຕົກລົງແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ.

ການໄກ່ເກ່ຍຄະດີໃນທີ່ປະຊຸມສານ ສາມາດເຮັດຂຶ້ນໄດ້ນັບແຕ່ຂັ້ນຕອນຂອງການໄຕສວນຄະດີຈົນຮອດຂັ້ນຕອນກ່ອນພະນັກງານໄອຍະການປະຊາຊົນຖະແຫຼງ ຫຼື ກ່ອນທີ່ປະທານຄະນະສານຈະປິດປະຊຸມສານໄວ້ຊົ່ວຄາວເພື່ອນຳເອົາຄະດີໄປພິຈາລະນາ ແລະ ຮ່າງຄຳຕັດສິນຢູ່ໃນຫ້ອງປະຊຸມລັບເທົ່ານັ້ນ ຖ້າປະທານຄະນະສານໄດ້ປິດປະຊຸມສານໄວ້ຊົ່ວຄາວ ເພື່ອນຳເອົາຄະດີໄປພິຈາລະນາ ແລະ ຮ່າງຄຳຕັດສິນຢູ່ໃນຫ້ອງປະຊຸມລັບແລ້ວ ກໍ່ຈະບໍ່ອະນຸຍາດໃຫ້ຄູ່ຄວາມໄກ່ເກ່ຍຢູ່ໃນສານຂັ້ນຂອງຕົນອີກ, ແຕ່ໂຈດ, ຈຳເລີຍ, ບຸກຄົນທີສາມ ຫຼື ຜູ້ທີ່ກ່ຽວຂ້ອງໃນຄະດີດັ່ງກ່າວກໍ່ຍັງສາມາດຕົກລົງດ້ວຍຮູບການໄກ່ເກ່ຍກັນໄດ້ໃນການດຳເນີນຄະດີຂອງສານຂັ້ນເທິງ ລ້ວມທັງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ຫຼັກການຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ, ຄະນະສານ ຕ້ອງນຳເອົາຄຳຮ້ອງຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍຂອງໂຈດ, ຈຳເລີຍ ຫຼື ບຸກຄົນທີສາມມາພິຈາລະນາ. ບັນຫາໃດທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມບໍ່ໄດ້ຮ້ອງຟ້ອງ, ຟ້ອງແຍ່ງ ຫຼື ຮ້ອງຂໍນັ້ນ ຄະນະສານ ຈະນຳມາພິຈາລະນາຕັດສິນໃຫ້ບໍ່ໄດ້ ເວັ້ນເສຍແຕ່ຄະດີທີ່ພົວພັນກັບຜົນປະໂຫຍດຂອງລັດ, ສັງຄົມ ແລະ ເດັກ.[27]

ບັນດາຫຼັກການທີ່ກ່າວມາຂ້າງເທິງນັ້ນ ມີຄວາມສຳຄັນ ແລະ ຈຳເປັນຫຼາຍໃນການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ ທັງນີ້ກໍເພື່ອເປັນການຮັບປະ

---

[25] ຄະນະຄົ້ນຄວ້າກົດໝາຍດຳເນີນຄະດີແພ່ງ, ປຶ້ມຄູ່ມືການດຳເນີນຄະດີແພ່ງເປັນຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ, ປີ 2014 , ໜ້າ 22.

[26] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 173.

[27] ຫາກໍອ້າງ, ມາດຕາ 20.

ກັບການດຳເນີນຄະດີແພ່ງໃຫ້ຖືກຕ້ອງ, ຄົບໂວນ, ຮອບດ້ານ ແລະ ພາວະວິໄສ ລວມທັງຮັບປະກັນໄດ້ຄວາມຍຸຕິທຳ ກໍຄືຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## 2. ສານປະຊາຊົນພາກກາງ ແລະ ການພິຈາລະນາການຂໍລົບລ້າງຄະດີແພ່ງ

### 2.1 ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນພາກກາງ

ສານປະຊາຊົນພາກກາງ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 5 ກໍລະກົດ 2005[28] ປັດຈຸບັນປະກອບດ້ວຍຄະນະສານອາຍາ, ຄະນະສານແພ່ງ, ຄະນະສານເດັກ, ຄະນະສານແຮງງານ, ຄະນະສານຄອບຄົວ, ຄະນະສານການຄ້າ ແລະ ຫ້ອງການ ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາຄັ້ງທີ VI ໃຫ້ປະກົດຜົນເປັນຈິງ ແລະ ສະຫຼຸບປະເມີນຜົນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ແລະ ເພື່ອປັບປຸງກົງຈັກການຈັດຕັ້ງ ໃຫ້ສອດຄ່ອງກັບການປັບປຸງກົງຈັກບໍລິຫານລັດຂັ້ນເມືອງ ທີ່ລັດຖະບານພວມຈັດຕັ້ງປະຕິບັດ, ສານປະຊາຊົນສູງສຸດໄດ້ກຳນົດທິດທາງໃນການປັບປຸງ ແລະ ພັດທະນາລະບົບສານປະຊາຊົນ ໂດຍໄດ້ນຳສະເໜີຕໍ່ຄະນະປະຈຳສະ ພາແຫ່ງຊາດ ກ່ຽວກັບການປັບປຸງລະບົບການຈັດຕັ້ງຂອງສານປະຊາຊົນ ຊຶ່ງຄະນະປະຈຳສະພາແຫ່ງຊາດ ກໍໄດ້ອອກມະຕິຕົກລົງ ສະບັບເລກທີ 179/ຄປຈ ລົງວັນທີ 5 ຕຸລາ 2009 ວ່າດ້ວຍການປ່ຽນຊື່ສານອຸທອນມາເປັນສານປະຊາຊົນພາກ ແລະ ເພີ່ມສິດອຳນາດໃຫ້ສານປະຊາຊົນພາກ ໃນການພິພາກສາຄະດີເປັນຂັ້ນລົບລ້າງ ແລະ ທັນງົບປະມານຂຶ້ນຕາມສາຍຕັ້ງ ຖືເປັນຂີດໝາຍສຳຄັນໃນການປັບປຸງ ແລະ ພັດທະນາລະບົບສານປະຊາຊົນ ໂດຍສະເພາະແມ່ນສານປະຊາຊົນພາກຕ່າງໆ ໃຫ້ມີຄວາມຄ່ອງຕົວ ແລະ ມີປະສິດທິພາບຂຶ້ນເທື່ອລະກ້າວ ໃນການພິຈາລະນາຄະດີ.[29]

ສານປະຊາຊົນພາກ ແມ່ນສານປະຊາຊົນທ້ອງຖິ່ນ ຊຶ່ງມີພາລະບົດບາດດຳເນີນ ການພິພາກສາຄະດີ ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນແຂວງ, ນະຄອນຫຼວງ, ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ. ພ້ອມດຽວກັນນັ້ນ, ສານປະຊາຊົນພາກ ຍັງພິພາກສາຄະດີ ເປັນຂັ້ນລົບລ້າງ ໃນຄະດີທີ່ສານປະຊາຊົນແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ. ສານປະຊາຊົນພາກ ສ້າງຕັ້ງຂຶ້ນຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ. ສານປະຊາຊົນພາກກາງ ພິພາກສາເປັນຂັ້ນອຸທອນໃນບັນດາຄະດີທີ່ສານປະຊາຊົນແຂວງ

---

[28] ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສ້າງຕັ້ງສານອຸທອນພາກກາງ, ສະບັບເລກທີ 32/ສພຊ, ລົງວັນທີ 5 ກໍລະກົດ 2005.

[29] ຄະນະປະຈຳສະພາແຫ່ງຊາດ, ມະຕິຕົກລົງວ່າດ້ວຍການປ່ຽນຊື່ສານອຸທອນມາເປັນສານປະຊາຊົນພາກ, ສະບັບເລກທີ 179/ຄປຈ, ລົງວັນທີ 5 ຕຸລາ 2009.

ຊຽງຂວາງ, ໄຊສົມບູນ, ວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ ແລະ ຄຳມ່ວນ ໄດ້ຕັດສິນເປັນຂັ້ນຕົ້ນ ແລະ ພິພາກສາເປັນຂັ້ນລົບລ້າງໃນຄະດີທີ່ສານປະຊາຊົນເຂດຕ່າງໆ ຂອງບັນດາແຂວງທີ່ໄດ້ກ່າວມານັ້ນຕັດສິນເປັນຂັ້ນຕົ້ນ ແລະ ສານປະຊາຊົນແຂວງ, ນະຄອນຫຼວງພິພາກສາເປັນຂັ້ນອຸທອນ.

ສານປະຊາຊົນພາກ ມີສິດ ແລະ ໜ້າທີ່ ໃນການ:

1) ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີ ທີ່ສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ,

2). ພິຈາລະນາເປັນຂັ້ນລົບລ້າງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ,

3). ທວງເອົາຄະດີຈາກ ສານປະຊາຊົນແຂວງ, ນະຄອນຫຼວງ ມາດຳເນີນ ແລະ ພິຈາລະນາເປັນຂັ້ນອຸທອນດ້ວຍຕົນເອງ ຖ້າເຫັນວ່າຄະດີນັ້ນມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ ຕາມລະບຽບການ ດ້ວຍການເຫັນດີຂອງຄະນະປະທານ,

4). ເຜີຍແຜ່ຂະຫຍາຍຄຳແນະນຳທາງດ້ານກົດໝາຍ ແລະ ປະເພນີສານ ຂອງສານປະຊາຊົນສູງສຸດ ໃຫ້ສານປະຊາຊົນແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ເປັນເອກະພາບໃນການປະຕິບັດກົດ ໝາຍ,

5). ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ, ກວດກາທາງດ້ານວິຊາສະເພາະຂອງສານປະຊາຊົນຂັ້ນລຸ່ມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ,

6). ຄົ້ນຄວ້າສັງລວມການຈັດຕັ້ງປະຕິບັດໜ້າທີ່ ແລະ ເກັບກຳສະຖິຕິຄະດີຂອງສານ,

7). ສົ່ງຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນພາກ ເພື່ອກວດກາ,

8). ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍຕາມການມອບໝາຍຂອງຂັ້ນເທິງ,

9). ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ແລະການປະຕິບັດໜ້າທີ່ຂອງຕົນ ຕໍ່ສານປະຊາຊົນສູງສຸດ ຢ່າງເປັນປົກກະຕິ,

10). ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.[30]

ສານປະຊາຊົນພາກ ປະກອບດ້ວຍປະທານ, ຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ວິຊາການກົດໝາຍ ແລະ ກົງຈັກຊ່ວຍວຽກຈຳນວນໜຶ່ງ ຊຶ່ງໃນການດຳ

[30] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2009, ມາດຕາ 23.

ເນີນຄະດີນັ້ນປະທານສານປະຊາຊົນພາກ ມີສິດ ແລະ ໜ້າທີ່ ໃນການນັ່ງເປັນປະທານໃນທຸກຄະນະສານຕັດສິນ ຢູ່ສານປະຊາຊົນຂັ້ນຂອງຕົນ, ຊີ້ນໍາ ນໍາພາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນຂັ້ນຂອງຕົນ,ໄດ້ຮັບການບໍາລຸງ, ຍົກລະດັບກ່ຽວກັບວຽກງານບໍລິຫານ ແລະ ວິຊາສະເພາະ, ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນຂັ້ນ ຂອງຕົນ ຕໍ່ ກອງປະຊຸມໃຫຍ່ຜູ້ພິພາກສາ, ສານປະຊາຊົນສູງສຸດ ແລະ ສານປະຊາ ຊົນ ຂັ້ນເທິງຖັດຕົນ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ. ສ່ວນຮອງປະທານສານປະຊາຊົນພາກ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນ ຂອງສານປະຊາຊົນຂັ້ນຂອງຕົນ. ຮອງປະທານສານປະຊາຊົນພາກ ມີໜ້າທີ່ຊ່ວຍປະທານສານປະຊາຊົນຂັ້ນຂອງຕົນ ໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານປະຊາຊົນຂັ້ນຂອງຕົນ. ໃນກໍລະນີທີ່ປະທານສານປະຊາຊົນພາກ ແມ່ນຮອງປະທານສານປະຊາຊົນ ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ວ່າການແທນ.[31]

ໃນການດໍາເນີນຄະດີຢູ່ສານປະຊາຊົນພາກ ກົດໝາຍກໍໄດ້ກໍານົດສິດ ແລະ ໜ້າທີ່ຂອງຜູ້ພິພາກສາໃນການ ຄົ້ນຄວ້າສໍານວນຄະດີທີ່ໄດ້ຮັບມອບໝາຍ, ເອົາຄໍາໃຫ້ການຂອງໂຈດ, ຈໍາເລີຍ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດໍາເນີນຄະດີ, ເກັບກໍາຂໍ້ມູນຫຼັກຖານກ່ຽວກັບຄະດີ, ໄກ່ເກ່ຍຄູ່ຄວາມໃນຄະດີ, ນັ່ງເປັນຄະນະສານຕັດສິນຄະດີ, ໄດ້ຮັບການບໍາລຸງ, ຍົກລະດັບກ່ຽວກັບວຽກງານຜູ້ພິພາກສາ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ. ສ່ວນຜູ້ຊ່ວຍຜູ້ພິພາກສາ ມີສິດ ແລະ ໜ້າທີ່ ໃນການຊ່ວຍຜູ້ພິພາກສາໃນການຄົ້ນຄວ້າສໍານວນຄະດີ, ຊ່ວຍຜູ້ພິພາກສາໃນການເອົາຄໍາໃຫ້ການຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີ, ເຂົ້າຮ່ວມໃນການໄກ່ເກ່ຍຄູ່ຄວາມໃນຄະດີ, ສະຫຼຸບລາຍງານ ຄະດີທີ່ຕົນຮັບຜິດຊອບຄົ້ນຄວ້າ ຕໍ່ຜູ້ພິພາກສາ, ຊ່ວຍຜູ້ພິພາກສາ ໃນການຂຽນຄໍາຕັດສິນ ແລະ ຄໍາພິພາກສາຂອງສານ, ໄດ້ຮັບການບໍາລຸງ, ຍົກລະດັບກ່ຽວກັບວຽກງານຜູ້ຊ່ວຍຜູ້ພິພາກສາ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.[32]

ພ້ອມດຽວກັນນັ້ນ, ຈ່າສານ ມີສິດ ແລະ ໜ້າທີ່ ໃນການຮັບຄໍາຮ້ອງຟ້ອງ, ຄໍາແກ້ຟ້ອງ, ຄໍາຟ້ອງແຍ່ງ, ຄໍາຮ້ອງຂໍອຸທອນ, ຄໍາຮ້ອງຂໍລົບລ້າງ, ປະກອບສໍານວນ, ຂຶ້ນຟ້ອງ, ເຮັດບັນຊີຄະດີ, ຈັດລຽງເອກະສານ ໃນສໍານວນຄະດີ, ອອກໝາຍຮຽກ, ໝາຍເຊີນ ຕາມການແນະນໍາຂອງຜູ້ພິພາກສາ, ເຂົ້າຮ່ວມບັນທຶກໃນການເອົາຄໍາໃຫ້ການ ແລະ ໃນການໄກ່ເກ່ຍ, ກະກຽມ, ແຈ້ງລະບຽບການ ແລະ ບັນທຶກປື້ມປະຊຸມສານໃນທີ່ປະຊຸມສານ, ອະທິບາຍຊີ້ແຈງເຫດຜົນ ໃຫ້ຄູ່ຄວາມໃນຄະດີເຂົ້າໃຈກ່ຽວກັບການຕັດສິນ ຫຼື ພິພາກສາຄະດີຂອງສານ

---

[31] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2009, ມາດຕາ 41.

[32] ທາກໍອ້າງ, ມາດຕາ 43.

ພ້ອມທັງແຈ້ງສິດ ໃນການຂໍອຸທອນ ຫຼື ຂໍລົບລ້າງ, ເຊັ່ນຢັ້ງຢືນຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມລະບຽບກົດໝາຍ, ເຮັດບັນຊີ, ເກັບມ້ຽນຂອງກາງຄະດີ ແລະ ຄຸ້ມຄອງເງິນຄ່າທຳນຽມສານຕາມລະບຽບກົດໝາຍ, ສະຫລຸບສະຖິຕິຄະດີ, ສົ່ງຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ສານປະຊາຊົນຂັ້ນເທິງ ແລະ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ເພື່ອກວດກາ, ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານຈ່າສານ, ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ. ກົດໝາຍວ່າດ້ວຍສານປະຊາຊົນ ຍັງໄດ້ບັນຍັດກ່ຽວກັບການປົກປ້ອງຜູ້ພິພາກສາ ຊຶ່ງມີເນື້ອໃນວ່າ: ຜູ້ພິພາກສາ ຈະຖືກຈັບຕົວ ຫຼື ດຳເນີນຄະດີໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາແຫ່ງຊາດ ເສັຍກ່ອນ. ໃນກໍລະນີທີ່ໄດ້ຈັບຕົວຜູ້ພິພາກສາ ໃນການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນທັນທີ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ. ນອກຈາກນີ້ ການຈັບຕົວຜູ້ພິພາກສາຂອງສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດນັ້ນ ຕ້ອງລາຍງານໃຫ້ປະທານສານປະຊາຊົນສູງສຸດຊາບນຳ. ເຖິງວ່າກົດໝາຍຈະໄດ້ບັນຍັດກ່ຽວກັບການປົກປ້ອງຜູ້ພິພາກສາໄວ້ກໍຕາມ, ແຕ່ໃນຂະນະດຽວກັນ ກົດໝາຍກໍໄດ້ບັນຍັດບັນດາຂໍ້ຫ້າມພະນັກງານຂອງສານປະຊາຊົນ ລວມເຖິງຜູ້ພິພາກສາໃນການສວຍໃຊ້ໜ້າທີ່, ຕຳແໜ່ງ, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ, ບັງຄັບ ນາບຂູ່, ປະຕິບັດສິດ, ໜ້າທີ່ເກີນຂອບເຂດ ຫຼື ລະເມີດລະບຽບກ່ຽວກັບການດຳເນີນຄະດີ, ລຳອຽງ ຫຼື ເຂົ້າຂ້າງອອກຂາ ທີ່ພາໃຫ້ມີການຕັດສິນຄະດີຜິດພາດ, ກັກສຳນວນຄະດີ, ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ, ເປີດເຜີຍຄວາມລັບ ກ່ອນການຕັດສິນຄະດີ ເພື່ອແລກກັບຜົນປະໂຫຍດໃດໜຶ່ງ, ທວງ, ຮຽກ, ຮັບເອົາສິນບົນຈາກຄູ່ຄວາມ, ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມເພື່ອຫາຜົນປະໂຫຍດຈາກຄະດີ, ປົດບັງ, ຊຸກເຊື່ອງເອກະສານ, ຫລັກຖານ ທີ່ມີຢູ່ໃນສຳນວນຄະດີ, ມີການກະທຳອື່ນ ທີ່ ຜິດຕໍ່ຈັນຍາທຳ ແລະ ລະເມີດກົດໝາຍ[33] ທັງນີ້ກໍເພື່ອຮັບປະກັນໃຫ້ການດຳເນີນຄະດີດຳເນີນໄປດ້ວຍບໍລິສຸດ, ຍຸຕິທຳ ແລະ ຮັບປະກັນໄດ້ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ເອີ້ນວ່າ ລັດຖະກອນຕຸລາການ.[34]

---

[33] ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2008, ມາດຕາ 56.

[34] ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍລະບຽບລັດຖະກອນຕຸລາການ, ສະບັບເລກທີ 0132/ຄປຈ, ລົງວັນທີ 4 ທັນວາ 2013, ມາດຕາ 2.

### 2.2 ການພິຈາລະນາການຂໍລົບລ້າງຄະດີແພ່ງຢູ່ສານປະຊາຊົນພາກກາງ

ໃນການດຳເນີນຄະດີແພ່ງເປັນຂັ້ນລົບລ້າງນັ້ນ ສານປະຊາຊົນພາກ ມີສິດ ແລະ ໜ້າທີ່ ພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິ ພາກສາຂອງສານປະຊາຊົນແຂວງ, ນະຄອນຫຼວງ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນຂັ້ນອຸທອນ ຂອງແຂວງ, ນະຄອນຫຼວງ ຫຼື ພາກ, ພິຈາລະນາອອກຄຳສັ່ງ, ຄຳຊີ້ຂາດ ທີ່ພົວພັນກັບການດຳເນີນຄະດີ, ສົ່ງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດ ພ້ອມດ້ວຍສຳນວນຄະດີ ໃຫ້ສານປະຊາຊົນແຂວງ, ນະຄອນຫຼວງ ເພື່ອສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສົ່ງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂັ້ນລົບລ້າງ ໃຫ້ສານປະຊາຊົນເຂດ ເພື່ອອ່ານໃຫ້ຄູ່ຄວາມຊາບ ກ່ອນສົ່ງສຳນວນຄະດີ ແລະ ຄຳພິພາກສາ ໃຫ້ປະຕິບັດພາງ ໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສົ່ງຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາໃຫ້ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນພາກ ເພື່ອກວດກາ ແລະ ສົ່ງໃຫ້ອົງການທີ່ກ່ຽວຂ້ອງ ເພື່ອຮັບຮູ້ ແລະ ປະຕິບັດ.[35]

ການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກ ແມ່ນການປະຕິບັດໜ້າທີ່ຂອງຄະນະສານແພ່ງ, ຄະນະສານແຮງງານ ແລະ ຄະນະສານຄອບຄົວ. ໃນການດຳເນີນຄະດີແພ່ງເປັນຂັ້ນລົບລ້າງນັ້ນ ຄະນະສານແພ່ງ ສານປະຊາຊົນພາກ ມີສິດອຳນາດພິຈາລະນາຕັດສິນຄະດີຂໍ້ຂັດແຍ່ງ ກ່ຽວກັບກຳມະສິດ ແລະ ມູນມໍຣະດົກ, ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງແພ່ງ, ຂໍ້ຂັດແຍ່ງ ກ່ຽວກັບການທວງເອົາການໃຊ້ແທນຄ່າເສັຍຫາຍ, ຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ ຊຶ່ງຄະດີ ກ່ຽວກັບສາຍພົວພັນທາງດ້ານບໍລິຫານ ທີ່ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຊຶ່ງສານຈະພິຈາລະນາຕັດສິນ ມີຄື: ຄະດີ ກ່ຽວກັບຄວາມຜິດພາດ ໃນການຂຶ້ນບັນຊີຜູ້ມີສິດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້, ຄະດີກ່ຽວກັບການກະທຳຂອງພະນັກງານອົງການບໍລິຫານກ່ຽວກັບການປັບໃໝ, ການເກັບອາກອນລາຍໄດ້ ທີ່ບໍ່ຖືກຕ້ອງ ແລະ ອື່ນໆ, ຄະດີກ່ຽວກັບການຮິບຊັບສິ່ງຂອງ ໂດຍບໍ່ຖືກຕ້ອງ, ຄະດີ ກ່ຽວກັບຄວາມຜິດພາດອື່ນ ໃນຂົງເຂດບໍລິຫານ. ພ້ອມດຽວກັນນັ້ນ, ຄະນະສານແພ່ງ ມີສິດອຳນາດ ພິຈາລະນາຕັດສິນກ່ຽວກັບການຮ້ອງຂໍໃຫ້ສານພິຈາລະນາແຕ່ງຕັ້ງ ເປັນຜູ້ຄຸ້ມຄອງຊັບ ຫຼື ມູນມໍຣະດົກ, ການຮ້ອງຂໍໃຫ້ສານພິຈາລະນາຕັດສິນ ຢັ້ງຢືນໃບຕາດິນເສັຍຫາຍ, ການຮ້ອງຂໍ ໃຫ້ຮິບຊັບ ເຊັ່ນ ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ, ການເກັບຊັບສິ່ງຂອງທີ່ຕົກເຮ່ຍ, ການພົບພໍ້ວັດຖຸທີ່ມີຄ່າ ຫຼື ວັດຖຸບູຮານ, ການຮ້ອງຂໍໃຫ້ສານ

[35] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 23.

ພິຈາລະນາ ຮັບຮູ້ຄຳຕັດສິນຂອງສານ ຫຼື ຂອງກຳມະການຕັດສິນຕ່າງປະເທດ ກ່ຽວກັບຄະດີແພ່ງ, ການຮ້ອງຂໍອື່ນ ກ່ຽວກັບຄະດີແພ່ງ.[36]

ໄປພ້ອມກັບການປະຕິບັດສິດໃນການພິຈາລະນາເປັນຂັ້ນລົບລ້າງຂອງຄະນະສານການແພ່ງສານປະຊາຊົນພາກ ກໍຍັງມີຄະນະສານແຮງງານ ຊຶ່ງຄະນະສານດັ່ງກ່າວມີສິດອຳນາດໃນການພິຈາລະນາຄະດີ ກ່ຽວກັບແຮງງານ ຊຶ່ງສານຈະພິຈາລະນາຕັດສິນໄດ້ນັ້ນ ກໍຕໍ່ເມື່ອອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບແຮງງານຫາກບໍ່ສາມາດແກ້ໄຂໄດ້ ເຊັ່ນ: ຂໍ້ຂັດແຍ່ງ ກ່ຽວກັບສັນຍາແຮງງານ, ຂໍ້ຂັດແຍ່ງ ກ່ຽວກັບເງິນອຸດໜູນ ເນື່ອງມາຈາກການຍົກເລີກສັນຍາແຮງງານ ໂດຍບໍ່ຖືກຕ້ອງ, ຂໍ້ຂັດແຍ່ງ ກ່ຽວກັບການຮ້ອງຂໍຄ່າເສັຍຫາຍ ຈາກອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ຂໍ້ຂັດແຍ່ງກ່ຽວກັບເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ, ຂໍ້ຂັດແຍ່ງອື່ນ ກ່ຽວກັບແຮງງານ. ຂໍ້ຂັດແຍ່ງທາງດ້ານລະບຽບກົດໝາຍ ຫຼື ທາງດ້ານຜົນປະໂຫຍດລະຫວ່າງ ຜູ້ອອກແຮງງານກັບຜູ້ໃຊ້ແຮງງານ ຕ້ອງພິຈາລະນາແກ້ໄຂໃຫ້ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ແຮງງານ, ກົດໝາຍວ່າດ້ວຍກຳມະບານລາວ, ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ ແລະ ລະບຽບການອອກແຮງງານ ດ້ວຍການເຂົ້າຮ່ວມຂອງທັງສອງຝ່າຍ ຫຼື ຜູ້ຕາງໜ້າ. ໃນກໍລະນີທີ່ສອງຝ່າຍ ຫາກສາມາດຕົກລົງກັນໄດ້ທັງໝົດ ຫຼື ບາງສ່ວນນັ້ນແລ້ວ ກໍໃຫ້ເຮັດບົດບັນທຶກໂດຍແຕ່ລະຝ່າຍພ້ອມດ້ວຍພະຍານ ເຊັນຢັ້ງຢືນຮັບຮູ້ ແລ້ວສົ່ງບົດບັນທຶກດັ່ງກ່າວ ໃຫ້ການຈັດຕັ້ງກຳມະບານ, ອົງການຄຸ້ມຄອງແຮງງານ ຂັ້ນຂອງຕົນ ພາຍໃນກຳນົດ ຫ້າວັນ ນັບແຕ່ວັນ ໄດ້ເຊັນ ບົດບັນທຶກດັ່ງກ່າວເປັນຕົ້ນໄປ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ທີ່ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຫາກບໍ່ປະຕິບັດຕາມບົດບັນທຶກນັ້ນ ກໍມີສິດຮ້ອງຂໍໃຫ້ອົງການຄຸ້ມຄອງແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ເພື່ອພິຈາລະນາແກ້ໄຂ. ໃນກໍລະນີ ທີ່ອົງການຄຸ້ມຄອງແຮງງານ ຫາກບໍ່ສາມາດແກ້ໄຂໄດ້ ຫຼື ແກ້ໄຂໄດ້ບາງສ່ວນພາຍໃນກຳນົດ ສິບຫ້າວັນ ແລ້ວຄູ່ກໍລະນີທີ່ບໍ່ພໍໃຈ ກໍມີສິດຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນ. ສານປະຊາຊົນ ຕ້ອງນຳເອົາຂໍ້ຂັດແຍ່ງ ກ່ຽວກັບແຮງງານມາຄົ້ນຄວ້າ, ໄກ່ເກັ່ຍ ແລະ ຕັດສິນ ຕາມຂັ້ນຕອນຂອງກົດໝາຍ[37] ໂດຍສະເພາະກໍລະນີຂໍ້ຂັດແຍ່ງແຮງງານ ທີ່ຄູ່ຄວາມໄດ້ຮ້ອງຟ້ອງຕໍ່ສານແຮງງານ.[38]

ນອກຈາກຄະນະສານແພ່ງ, ຄະນະສານແຮງງານແລ້ວ ສານປະຊາຊົນພາກ ຍັງມີຄະນະສານຄອບຄົວ ທີ່ມີສິດອຳນາດພິຈາລະນາເປັນຂັ້ນລົບລ້າງຄະດີກ່ຽວກັບສາຍຜົວເມັຍເຊັ່ນ ການຢ່າຮ້າງ, ການແບ່ງປັນສິນສົມສ້າງ, ໜີ້ສິນຂອງຄູ່ຜົວເມັຍ, ການຮ້ອງຟ້ອງ ທວງ

---

[36] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 33.

[37] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 36.

[38] ກົດໝາຍວ່າດ້ວຍແຮງງານ, (ສະບັບປັບປຸງ), ປີ 2013, ມາດຕາ 152.

ເອົາຄ່າລ້ຽງດູລູກ, ການຮ້ອງຟ້ອງ ທວງເອົາຄ່າລ້ຽງດູ ຜົວ ຫຼື ເມັຍ, ພໍ່ແມ່ ແລະ ລູກ ທີ່ພົ້ນກະສຽນອາຍຸ ແຕ່ຂາດຄວາມສາມາດໃນການອອກແຮງງານ ຫຼື ເປັນບ້າເສັຍຈິດ, ສາຍພົວພັນຄອບຄົວ ເປັນຕົ້ນ ການຮັບຮູ້ການເປັນສາຍຍາດ, ການຮ້ອງຟ້ອງ ເອົາລູກມາຢູ່ໃນການຄຸ້ມຄອງ, ການປົດສິດ ໃນການເປັນພໍ່, ແມ່ ແລະ ລູກ, ການເປັນລູກລ້ຽງ, ການຮັບຮູ້ເດັກເປັນລູກ ຫຼື ຮັບຮູ້ການເປັນພໍ່, ຜົນປະໂຫຍດຂອງເດັກ ເຊັ່ນ ການໃສ່ຊື່, ນາມສະກຸນ ແລະ ສັນຊາດ ຂອງເດັກ,[39] ຄວາມເສັຍຫາຍ ທີ່ເນື່ອງມາຈາກ ການບໍ່ປະຕິບັດຕາມການໝັ້ນໝາຍ, ການສູ່ຂໍ, ການຮ່ວມປະເວນີກັນກ່ອນການເປັນຜົວເມັຍ ແລະ ອື່ນໆ. ຄະນະສານຄອບຄົວ ຍັງມີສິດອຳນາດ ພິຈາລະນາເປັນຂັ້ນລົບລ້າງ ກ່ຽວກັບການຮ້ອງຂໍ ໃຫ້ລົບລ້າງການແຕ່ງດອງເປັນໂມຄະ ຫຼື ຍົກເລີກການແຕ່ງດອງທີ່ບໍ່ສອດຄ່ອງກັບກົດໝາຍ, ການຮ້ອງຂໍໃຫ້ສານຮັບຮູ້ການຢ່າຮ້າງ ດ້ວຍຄວາມສະໝັກໃຈ, ການຮ້ອງຂໍ ໃຫ້ຮັບຮູ້ການແບ່ງປັນສິນສົມສ້າງ ພາຍຫຼັງການຢ່າຮ້າງດ້ວຍຄວາມສະໝັກໃຈ, ການຮ້ອງຂໍ ໃຫ້ສານພິຈາລະນາການປ່ຽນແປງສິດໃນການຄຸ້ມຄອງລູກ ພາຍຫຼັງການຢ່າຮ້າງ, ການຮ້ອງຂໍ ໃຫ້ສານອອກມາດຕະການຈຳກັດສິດຂອງພໍ່ ຫຼື ແມ່ ຕໍ່ເດັກ, ການຮ້ອງຂໍ ໃຫ້ສານອອກມາດຕະການ ຕໍ່ພໍ່ ຫຼື ແມ່ ໃນການເບິ່ງແຍງລ້ຽງດູເດັກພາຍຫຼັງການຢ່າຮ້າງ, ການຮ້ອງຂໍ ບັນຫາອື່ນ ກ່ຽວກັບຄະດີຄອບຄົວ ຊຶ່ງໃນການພິຈາລະນາເປັນຂັ້ນລົບລ້າງຄະດີກ່ຽວກັບຄອບຄົວນັ້ນ, ຄະນະສານຄອບຄົວຂອງສານປະຊາຊົນພາກ ຕ້ອງອີງໃສ່ກົດໝາຍວ່າດ້ວຍຄອບຄົວໄປຄຽງຄູ່ກັນ ເຊັ່ນການແບ່ງປັນຊັບສົມບັດຂອງຄູ່ຜົວເມັຍ, ຊັບເດີມຂອງຝ່າຍໃດ ກໍໃຫ້ເປັນກຳມະສິດຂອງຝ່າຍນັ້ນ, ສິນສົມສ້າງຂອງຄູ່ຜົວເມັຍ ໃຫ້ແບ່ງປັນກັນຄົນລະເຄິ່ງ ເວັ້ນເສັຍແຕ່ ຜົວ ຫຼື ເມັຍ ຫາກເປັນຜູ້ກະທຳຜິດໃນສະຖານທຳມິດສະຈານ, ສໍ້ໂກງ ຫຼື ຍັກຍອກສິນສົມສ້າງ ໂດຍມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ, ຝ່າຍທີ່ຜິດນັ້ນ ກໍຈະໄດ້ຮັບພຽງແຕ່ໜຶ່ງ ສ່ວນສາມ ຂອງສິນສົມສ້າງເທົ່ານັ້ນ. ໃນກໍລະນີ ທີ່ລູກຍັງບໍ່ທັນຮອດກະສຽນອາຍຸ ຫາກໄດ້ຢູ່ນຳຜູ້ໃດ ຜູ້ນັ້ນ ກໍຈະໄດ້ຮັບສ່ວນ ແບ່ງໜຶ່ງສ່ວນສາມ ຂອງສິນສົມສ້າງນັ້ນ ເພື່ອເປັນການລ້ຽງດູລູກ, ສ່ວນທີ່ເຫຼືອນັ້ນໃຫ້ຜົວເມັຍແບ່ງ ປັນກັນຄົນລະເຄິ່ງ. ໃນກໍລະນີທີ່ສິນສົມສ້າງ ຫາກບໍ່ພຽງພໍກັບການລ້ຽງດູລູກ ກໍໃຫ້ສືບຕໍ່ປະຕິບັດ ຈົນກວ່າເດັກຈະຮອດກະສຽນອາຍຸ ສິບແປດປີ. ສິນສົມສ້າງ ຈະໄດ້ແບ່ງປັນກັນພາຍຫລັງທີ່ຜົວເມັຍນັ້ນໄດ້ຢ່າຮ້າງກັນ. ໃນກໍລະນີທີ່ຜົວເມັຍ ຫາກໄດ້ແຍກກັນຢູ່ ຫຼື ຜົວ ເມັຍ ຫາກໄດ້ລັກເອົາສິນສົມສ້າງ ໄປນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫຼື ບໍ່ມີຄວາມບໍລິສຸດໃຈຕໍ່ສິນສົມສ້າງນັ້ນສິນສົມສ້າງ ອາດຈະຖືກແບ່ງປັນ ຕາມການສະເໜີຂອງ ຝ່າຍໃດຝ່າຍໜຶ່ງກໍໄດ້[40] ຫຼື ໃນກໍລະນີທີ່ຜົວ ຫຼື ເມຍ ຫາກໄດ້ເສຍຊີວິດໄປ ໂດຍປະເມຍ ຫຼື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມໍຣະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດ ສາມສ່ວນສີ່

[39] ກົດໝາຍວ່າດ້ວຍທະບຽນຄອບຄົວ, (ສະບັບປັບປຸງ), ປີ 2009, ມາດຕາ 26.

[40] ກົດໝາຍວ່າດ້ວຍຄອບຄົວ, (ສະບັບປັບປຸງ), ປີ 2008, ມາດຕາ 28.

ແລະ ອີກໜຶ່ງສ່ວນສີ່ ແມ່ນເມຍ ຫຼື ຜົວ ທີ່ຍັງມີຊີວິດຢູ່ເປັນຜູ້ຮັບ. ສ່ວນສິນສົມສ້າງນັ້ນໃຫ້ແບ່ງປັນເຄິ່ງ ຄື ເຄິ່ງໜຶ່ງໃຫ້ເມຍ ຫຼື ຜົວ ທີ່ຍັງເມຍຊີວິດຢູ່ ແລະ ອີກເຄິ່ງໜຶ່ງແບ່ງປັນໃຫ້ລູກເປັນພູດສະເໝີກັນ, ເມຍ ຫຼື ຜົວ ທີ່ຍັງມີຊີວິດຢູ່ນັ້ນ ມີສິດຄຸ້ມຄອງຊັບທີ່ຕົກເປັນຂອງລູກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ.[41]

ໃນການພິຈາລະນາເປັນຂັ້ນລົບລ້າງຄະດີແພ່ງ, ຄະດີແຮງງານ, ຄະດີຄອບຄົວ (ຍົກເວັ້ນຄະດີການຄ້າ ເພາະວ່າຄະດີດັ່ງກ່າວສານປະຊາຊົນພາກພິຈາລະນາເປັນຂັ້ນອຸທອນ ສ່ວນຂັ້ນລົບລ້າງແມ່ນສານປະຊາຊົນສູງສຸດ) ນັ້ນ ສານປະຊາຊົນພາກມີສິດພິພາກສາຄະດີເປັນຂັ້ນລົບລ້າງ ແລະ ເປັນຂັ້ນສຸດທ້າຍທາງ ດ້ານກົດໝາຍ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ[42] ໝາຍຄວາມວ່າໂຈດ, ຈໍາເລີຍ ຫຼື ບຸກຄົນທີສາມ ຊຶ່ງເປັນຄູ່ຄວາມໃນຄະດີ ຫຼື ຫົວໜ້າອົງການໄອຍະການ ປະຊາຊົນ ມີສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານຄໍາສັ່ງ, ຄໍາຊີ້ຂາດ ແລະຄໍາພິພາກສາຂອງສານ. ບຸກຄົນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດຄ້ານນັ້ນ ຕ້ອງອະທິບາຍເຫດຜົນ ກ່ຽວກັບການຂໍລົບລ້າງ ຫຼື ການສະເໜີຄັດຄ້ານຂອງຕົນຕໍ່ສານ. ຄໍາຕັດສິນຂອງສານຂັ້ນຕົ້ນ ທີ່ບໍ່ຖືກຂໍອຸທອນ ຫຼື ບໍ່ຖືກສະເໜີຄັດຄ້ານນັ້ນ ຈະຂໍລົບລ້າງບໍ່ໄດ້.

ການຂໍລົບລ້າງ ອາດຈະເຮັດດ້ວຍການຈອງຂໍລົບລ້າງ ຫຼື ຍື່ນຄໍາຮ້ອງຂໍລົບລ້າງຕໍ່ສານ ທີ່ໄດ້ພິພາກສາຄະດີນັ້ນ ເປັນຂັ້ນອຸທອນ. ຄູ່ຄວາມ ສາມາດຂໍລົບລ້າງ ສະເພາະ ແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ, ສ່ວນບັນຫາເນື້ອຄະດີ ທີ່ຄູ່ຄວາມຂໍລົບລ້າງຂຶ້ນມານັ້ນ ສານຂັ້ນລົບລ້າງ ຈະພິຈາລະນາໃຫ້ບໍ່ໄດ້.

ການຂໍລົບລ້າງ ອາດຈະເຮັດດ້ວຍການຈອງຂໍລົບລ້າງ ຫຼື ຍື່ນຄໍາຮ້ອງຂໍລົບລ້າງຕໍ່ສານ ທີ່ໄດ້ພິພາກສາຄະດີນັ້ນ ເປັນຂັ້ນອຸທອນ. ຄູ່ຄວາມ ສາມາດຂໍລົບລ້າງ ສະເພາະ ແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ, ສ່ວນບັນຫາເນື້ອຄະດີ ທີ່ຄູ່ຄວາມຂໍລົບລ້າງຂຶ້ນມານັ້ນ ສານຂັ້ນລົບລ້າງ ຈະພິຈາລະນາໃຫ້ບໍ່ໄດ້. ຄໍາຮ້ອງຂໍລົບລ້າງ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍຄື: ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ຂອງຜູ້ຂໍລົບລ້າງ, ເລກທີຄໍາພິພາກສາ ທີ່ຂໍລົບລ້າງ, ປະເດັນທີ່ຂໍລົບລ້າງ ພ້ອມດ້ວຍເຫດຜົນທາງດ້ານກົດໝາຍ, ວັນ, ເດືອນ, ປີ ຍື່ນຄໍາຮ້ອງຂໍລົບລ້າງ ແລະ ລາຍເຊັນ. ຄູ່ຄວາມ ມີສິດຂໍລົບລ້າງ ແລະ ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດ ຄ້ານຄໍາພິພາກສາຂອງສານຂັ້ນອຸທອນໄດ້ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນລົງຄໍາພິພາກສາ ສໍາລັບຜູ້ຖືກສານຕັດສິນຊ້ອງໜ້າ ຫຼື ຖືວ່າຊ້ອງໜ້າ ຫຼື ນັບແຕ່ວັນຮັບຊາບຄໍາພິພາກສາ ເປັນຕົ້ນ ໄປ ສໍາລັບຜູ້ຖືກສານ

[41] ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ, (ສະບັບປັບປຸງ), ປີ 2008, ມາດຕາ 12.

[42] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 287.

ຕັດສິນລັບຫຼັງ. ການຂໍລົບລ້າງ ຫຼື ການສະເໜີຄັດຄ້ານ ຄຳສັ່ງ ຫຼື ຄຳຊີ້ຂາດ ຂອງສານຂັ້ນອຸທອນ ໃຫ້ດຳເນີນພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ. ໃນກໍລະນີຄູ່ຄວາມໄດ້ຈອງຂໍລົບລ້າງ ແຕ່ບໍ່ສາມາດຍື່ນຄຳຮ້ອງໃຫ້ສານຂັ້ນອຸທອນ ທັນກຳນົດເວລາ ກໍສາມາດຍື່ນຄຳຮ້ອງດັ່ງກ່າວ ຕໍ່ສານຂັ້ນລົບລ້າງ ກ່ອນການພິພາກສາຄະດີດັ່ງກ່າວ. ໃນກໍລະນີ ທີ່ມີການຂໍລົບລ້າງ ຫຼື ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຂັ້ນອຸທອນ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງຍື່ນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານຂອງຕົນ ຕໍ່ສານຂັ້ນລົບລ້າງ ໂດຍຜ່ານສານທີ່ໄດ້ພິພາກສາຄະດີເປັນຂັ້ນອຸທອນ. ໃນກໍລະນີ ທີ່ສານຂັ້ນອຸທອນ ຫາກບໍ່ຮັບ ຫຼື ແກ່ຍາວການຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານຄຳພິພາກສາຂອງສານ, ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຍື່ນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ໂດຍກົງຕໍ່ສານຂັ້ນລົບລ້າງ. ຫຼັງຈາກ ກຳນົດຂໍລົບລ້າງໄດ້ສິ້ນສຸດແລ້ວ ຖ້າສານຂັ້ນອຸທອນທີ່ໄດ້ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ຫາກແກ່ຍາວເກີນກຳນົດເວລາ ໃນການສົ່ງສຳນວນຄະດີ ຂຶ້ນສານຂັ້ນລົບລ້າງ, ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຕໍ່ສານຂັ້ນລົບລ້າງ ເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.[43]

ຄູ່ຄວາມທີ່ຂໍລົບລ້າງນັ້ນ ໃຫ້ນຳເງິນມາວາງສານ ແລະ ເສຍຄ່າຂໍລົບລ້າງ ຕາມລະບຽບກົດໝາຍ. ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານນັ້ນ ຕ້ອງຍື່ນຕໍ່ສານປະຊາຊົນພາກ ຫຼື ສານປະຊາຊົນສູງສຸດ ໂດຍຜ່ານສານທີ່ໄດ້ພິພາກສາຄະດີດັ່ງກ່າວ ເປັນຂັ້ນອຸທອນ. ສານຂັ້ນອຸທອນນັ້ນ ຕ້ອງ ແນະນຳໃຫ້ຜູ້ຂໍລົບລ້າງ ກ່ຽວກັບກຳນົດການຂໍລົບລ້າງ, ການຂຽນຄຳຮ້ອງຂໍລົບລ້າງ, ຄ່າຂໍລົບລ້າງ ແລະ ສິດຕ່າງໆຂອງຜູ້ກ່ຽວ. ສານຂັ້ນອຸທອນ ຕ້ອງຮັບຄຳຮ້ອງຂໍລົບລ້າງ ເຖິງວ່າຈະກາຍກຳນົດຂໍລົບລ້າງແລ້ວ ກໍຕາມ. ພາຍຫຼັງ ທີ່ໄດ້ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານແລ້ວ ສານຂັ້ນອຸທອນ ຕ້ອງແຈ້ງໃຫ້ຄູ່ຄວາມອີກຝ່າຍໜຶ່ງພາຍໃນກຳນົດເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ຫຼື ຄຳສະເໜີນັ້ນເປັນຕົ້ນໄປ. ຖ້າວ່າກຳນົດເວລາຂໍລົບລ້າງ ຫຼື ສະເໜີຄັດຄ້ານຫາກໝົດແລ້ວ ສານຂັ້ນອຸທອນ ຕ້ອງສົ່ງຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ພ້ອມທັງສຳນວນຄະດີໄປຍັງ ສານຂັ້ນລົບລ້າງ ພາຍໃນສາມວັນ.

ຄູ່ຄວາມທີ່ຍື່ນຄຳຮ້ອງຂໍລົບລ້າງຕໍ່ສານແລ້ວ ມີສິດຖອນຄຳຮ້ອງຂອງຕົນໄດ້. ການຂໍຖອນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂັ້ນອຸທອນ ຕ້ອງເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ສານປະຊາຊົນທີ່ກ່ຽວຂ້ອງ. ຄະນະສານຂອງສານຂັ້ນລົບລ້າງ ຕ້ອງນຳເອົາຄຳຮ້ອງຂໍຖອນການຂໍລົບລ້າງ ຫຼື ການສະເໜີຄັດຄ້ານນັ້ນ

[43] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012,  ປີ 2012, ມາດຕາ 291.

ມາພິຈາລະນາ ເມື່ອເຫັນວ່າການຂໍຖອນດັ່ງກ່າວ ບໍ່ຂັດກັບກົດໝາຍ ຫຼື ຜົນປະໂຫຍດ ຂອງລັດ ຫຼື ສັງຄົມ ແລ້ວຄະນະສານຕ້ອງອອກຄຳຊີ້ຂາດ ໃຫ້ຖອນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານດັ່ງກ່າວ ແລ້ວສົ່ງສຳນວນຄະດີ ໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເວັ້ນເສຍແຕ່ຍັງມີການຂໍລົບລ້າງຂອງບຸກຄົນອື່ນ. ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ທີ່ໄດ້ຍື່ນເຖິງສານຂັ້ນລົບລ້າງນັ້ນ ເປັນສາເຫດທີ່ພາ ໃຫ້ໂຈະການປະຕິບັດຄຳພິພາກສາຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ຫຼື ຖືກສະເໜີຄັດຄ້ານ ເວັ້ນເສັຍແຕ່ມີຄຳພິພາກສາໃຫ້ປະຕິບັດພາງ ໝາຍຄວາມວ່າເປັນການປະຕິບັດຄຳຕັດສິນຂອງສານສ່ວນໃດສ່ວນໜຶ່ງ ກ່ອນຄຳ ຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດ ເພື່ອຊ່ວຍບັນເທົາຄວາມເສັຍຫາຍ, ຄວາມຈຳເປັນຮີບດ່ວນຂອງຄູ່ຄວາມ. ຄຳຕັດສິນຂອງສານ ໃນກໍລະນີຮີບດ່ວນ ຫຼື ຈຳເລີຍຮັບຮູ້ການຮ້ອງຟ້ອງຂອງໂຈດ ຫຼື ໂຈດ ຮັບຮູ້ການຟ້ອງແຍ່ງຂອງຈຳເລີຍ ຊຶ່ງບອກໃຫ້ປະຕິບັດພາງສ່ວນໃດສ່ວນໜຶ່ງກ່ອນນັ້ນ ຕ້ອງສົ່ງໄປ ຍັງຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນຂອງສານ ບ່ອນກ່ຽວຂ້ອງໃນທັນໃດ ເພື່ອຈັດຕັ້ງປະຕິບັດ ເຖິງວ່າຈະມີການຂໍອຸທອນກໍຕາມ.[44]

ສະຫຼຸບລວມແລ້ວ, ສານປະຊາຊົນພາກກາງດຳເນີນຄະດີແພ່ງເປັນຂັ້ນລົບລ້າງ ໃນຄະດີທີ່ສານປະຊາຊົນເຂດຕ່າງໆຂອງແຂວງ ຊຽງຂວາງ, ໄຊສົມບູນ, ວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ ແລະ ຄຳມ່ວນ ໄດ້ພິຈາລະນາ ຫຼື ຕັດສິນເປັນຂັ້ນຕົ້ນ ແລະ ສານແຂວງຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ຫຼື ສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຄະດີດັ່ງກ່າວໄດ້ຖືກສະເໜີຄັດຄ້ານໂດຍຄູ່ຄວາມ ຫຼື ໄອຍະການປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### 2.3 ຂອບເຂດການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ

ຂອບເຂດການພິຈາລະນາຄະດີແພ່ງຂອງສານຂັ້ນລົບລ້າງ ແມ່ນການປະຕິບັດກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ການຕີຄວາມໝາຍຂອງເຫດການ, ການນຳໃຊ້ມາດຕາກົດໝາຍ ຕໍ່ເນື້ອໃນ ເຊັ່ນ ກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ຕໍ່ເຫດການຂອງຄະດີ, ສ່ວນເຫດການຕ່າງໆທາງດ້ານຂໍ້ມູນຫຼັກຖານ ແລະ ໃນເນື້ອຄະດີ ຊຶ່ງສານຂັ້ນອຸທອນໄດ້ພິພາກສາລົງໄປນັ້ນ ໃຫ້ຖືວ່າເປັນທີ່ສິ້ນສຸດແລ້ວ. ສ່ວນສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ. ໃນກໍລະນີທີ່ຈຳເປັນ ສານຂັ້ນ

---

[44] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 251.

ລົບລ້າງ ຈະຮຽກຄູ່ຄວາມເຂົ້າມາຮ່ວມໃນການດຳເນີນຄະດີຢູ່ສານຂັ້ນລົບລ້າງ ຫຼື ລົງກວດກາເຫດການຕົວຈິງຂອງຄະດີ ກໍໄດ້.ລະບຽບການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ ໃຫ້ປະຕິບັດຄືພາຍຫຼັງທີ່ປະທານຄະນະສານ ໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະ ຄະນະສານ ຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານ ສະເໜີໃຫ້ຜູ້ຂໍອຸທອນ ຫຼື ພະນັກງານໄອຍະ ການປະຊາຊົນ ທີ່ເຂົ້າຮ່ວມປະຊຸມສານນັ້ນ ໃຫ້ເຫດຜົນກ່ຽວກັບການຂໍອຸທອນ ຫຼື ການສະເໜີຄັດຄ້ານຂອງຕົນຕໍ່ທີ່ປະຊຸມສານ. ການໄຕ່ສວນໃນທີ່ປະຊຸມສານຕ້ອງເນັ້ນໃສ່ສະເພາະບັນຫາທີ່ມີການຂໍອຸທອນ ຫຼື ສະເໜີຄັດຄ້ານ. ໃນກໍລະນີ ທີ່ມີການສະເໜີຫຼັກຖານເພີ່ມເຕີມນັ້ນ ຄະນະສານ ຕ້ອງແຈ້ງໃຫ້ພະນັກງານໄອຍະການປະຊາຊົນ ແລະ ບັນດາຜູ້ເຂົ້າຮ່ວມໃນທີ່ປະຊຸມສານຮັບຮູ້ ແລະໃຫ້ຄູ່ຄວາມອະທິບາຍ, ຊີ້ແຈງ ກ່ຽວກັບຫຼັກຖານດັ່ງກ່າວ. ພາຍຫຼັງທີ່ໄດ້ປິດການໂຕ້ຖຽງ ແລະ ໄດ້ຟັງຄຳຖະແຫຼງຂອງພະນັກງານໄອຍະການປະຊາຊົນແລ້ວ ປະທານຄະນະສານ ກໍປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ. ລະບຽບການພິຈາລະນາໃນຫ້ອງປະຊຸມລັບ, ການຮ່າງ ແລະ ລົງຄຳເຫັນໃນຄຳພິພາກສາ, ການເລື່ອນ ແລະ ການປະກາດຄຳພິພາກສາໃນທີ່ປະຊຸມສານ ກໍໃຫ້ປະຕິບັດດັ່ງດຽວກັນກັບລະບຽບການ ຢູ່ສານຂັ້ນຕົ້ນ.

ຄະນະສານ ຂອງສານຂັ້ນລົບລ້າງພິພາກສາຄະດີ ໃນນາມ ສປປ ລາວ. ຄຳພິພາກສາຂອງສານຂັ້ນລົບລ້າງ ປະກອບດ້ວຍ ພາກສະເໜີ, ພາກເນື້ອຄະດີ, ພາກຮູບຄະດີ, ພາກວິນິດໄສ ແລະ ພາກຕັດສິນ. ເນື້ອໃນຂອງພາກສະເໜີ, ພາກເນື້ອຄະດີ ແລະ ພາກວິນິດໄສນັ້ນ ແມ່ນຄ້າຍຄືກັນກັບ ເນື້ອໃນຂອງຄຳຕັດສິນຂັ້ນຕົ້ນ. ສຳລັບພາກຮູບຄະດີ ໃຫ້ກຳນົດຂັ້ນຕອນຂອງການດຳເນີນຄະດີຜ່ານມາ ເປັນຕົ້ນ ການຕັດສິນ, ການຂໍອຸທອນ. ສ່ວນພາກຕັດສິນ ໃຫ້ກຳນົດຮູບຄະດີ, ເນື້ອຄະດີ, ຜົນຂອງການລົງຄຳພິພາກສາທາງດ້ານກົດໝາຍ, ອາກອນຂອງລັດ ຫຼື ຄ່າທຳນຽມສານອື່ນ[45] ແລະ ຜົນບັງຄັບປະຕິບັດຄຳພິພາກສາ. ຄຳພິພາກສາ ຕ້ອງເຮັດເປັນສອງສະບັບຄື ສະບັບໜຶ່ງໄວ້ໃນສຳເນົາ, ສ່ວນອີກສະບັບໜຶ່ງ ໄວ້ໃນສຳນວນຄະດີ. ຄຳພິພາກສາທີ່ຄູ່ຄວາມ ຫຼື ພາກສ່ວນອື່ນ ຕ້ອງການນັ້ນ ໃຫ້ອັດສຳເນົາໂດຍແມ່ນ ຈ່າສານເປັນຜູ້ຢັ້ງຢືນ.

ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ ມີ 5 ປະເພດ ດັ່ງນີ້:

1). ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍລົບລ້າງ,

2). ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄຳພິພາກສາຂອງສານຂັ້ນອຸທອນທັງໝົດ,

---

[45] ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008, ມາດຕາ 49.

3). ປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນ ບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ,

4). ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາ ຄືນໃໝ່ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາ ຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນດຽວກັນ,

5). ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີ ໃຫ້ສານໃດສານໜຶ່ງ ພິຈາລະນາຄືນໃໝ່.[46]

ສານຂັ້ນລົບລ້າງ ສາມາດພິພາກສາລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ໂດຍບໍ່ສົ່ງ ໃຫ້ສານໃດພິຈາລະນາຄືນ ຕາມກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ ໝາຍຄວາມວ່າ ສານຂັ້ນລົບລ້າງ ຈະພິພາກສາລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ໂດຍບໍ່ສົ່ງໃຫ້ສານໃດພິຈາລະນາຄືນໄດ້ ເມື່ອເຫັນວ່າ: ຄູ່ຄວາມຝ່າຍໃດຝ່າຍໜຶ່ງໃນຄະດີ ເສຍຊີວິດໂດຍບໍ່ມີຜູ້ສືບຕໍ່ແທນຕົວ ໃນການດຳເນີນຄະດີ, ນິຕິບຸກຄົນ ທີ່ເປັນຄູ່ຄວາມໃນຄະດີ ຫາກຖືກຍຸບເລີກ ຫຼື ຖືກສານຕັດສິນໃຫ້ລົ້ມລະລາຍ ໂດຍບໍ່ມີຜູ້ສືບຕໍ່ແທນຕົວ ໃນການດຳເນີນຄະດີ, ຄະດີ ທີ່ໂຈດບໍ່ມີສິດຮ້ອງຟ້ອງ, ຄະດີ ທີ່ໄດ້ຖືກຕັດສິນໄປກ່ອນແລ້ວ ແລະ ຄະດີທີ່ໝົດອາຍຸຄວາມໃນການຮ້ອງຟ້ອງ.

ສານຂັ້ນລົບລ້າງ ສາມາດພິພາກສາລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ແລ້ວສົ່ງສຳນວນຄະດີຄືນໃຫ້ສານຂັ້ນອຸທອນພິຈາລະນາຄືນໃໝ່ ໃນກໍລະນີທີ່ການກຳນົດເຫດການຄະດີຂອງສານຂັ້ນອຸທອນ ບໍ່ຖືກຕ້ອງ, ສານຂັ້ນອຸທອນ ບໍ່ນຳເອົາບັນຫາໃດໜຶ່ງ ທີ່ຂໍອຸທອນມາພິຈາລະນາ, ສານຂັ້ນຕົ້ນ ໄດ້ລະເມີດລະບຽບການດຳເນີນຄະດີແຕ່ສານຂັ້ນອຸທອນໄດ້ພິພາກສາຢັ້ງຢືນ, ສານຂັ້ນອຸທອນ ນຳໃຊ້ກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງໃນຄະດີບໍ່ຖືກຕ້ອງ, ບັນຫາອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ສານຂັ້ນອຸທອນ ຕ້ອງນຳເອົາຄະດີ ທີ່ສານຂັ້ນລົບລ້າງສົ່ງຄືນມານັ້ນອອກພິຈາລະນາ ແລະ ລົງຄຳພິພາກສາໃໝ່ ບົນພື້ນຖານຂໍ້ມູນຫຼັກຖານ ແລະ ກົດໝາຍ. ສານຂັ້ນອຸທອນ ຈະພິຈາລະນາພິພາກສາ ຕາມການວິນິດໄສ ຂອງສານຂັ້ນລົບລ້າງ ເມື່ອເຫັນວ່າ ມີຂໍ້ມູນຫຼັກຖານຕົວຈິງ ແລະ ຖືກຕ້ອງຕາມກົດໝາຍ. ໃນກໍລະນີ ຄຳພິພາກສາຂອງສານຂັ້ນອຸທອນຄະນະໃໝ່ ຫາກໄດ້ລົງຄຳພິພາກສາບໍ່ກົງກັບ ຄຳພິພາກສາຂອງສານຂັ້ນລົບລ້າງນັ້ນ ເມື່ອຄູ່ຄວາມຫາກບໍ່ໄດ້ຂໍລົບລ້າງແລ້ວ ກໍໃຫ້ຫົວໜ້າອົງການໄອ ຍະການປະຊາຊົນທີ່ກ່ຽວຂ້ອງ ສະເໜີຄັດຄ້ານຂຶ້ນສານຂັ້ນລົບລ້າງໂດຍໜ້າທີ່. ໃນການພິຈາລະນາຄະດີຄືນໃໝ່ນັ້ນ ຖ້າຫາກສານຂັ້ນລົບລ້າງ ໄດ້ພິພາກສາ

---

[46] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 302.

ຄືເກົ່າ ແລະ ສົ່ງຄະດີຄືນໃຫ້ສານຂັ້ນອຸທອນເປັນເທື່ອທີສອງແລ້ວ ສານຂັ້ນອຸທອນຄະນະໃໝ່ຕ້ອງໄດ້ປະຕິບັດ ຕາມຄຳພິພາກສາຂອງສານຂັ້ນລົບລ້າງນັ້ນຢ່າງເດັດຂາດ.[47]

ຈາກການເກັບກຳຂໍ້ມູນເບື້ອງຕົ້ນ, ໃນປີ 2011 ມີການຂໍລົບລ້າງຈຳນວນ 15 ຄະດີ, ປີ 2012 ມີ 17 ຄະດີ, ປີ 2013 ມີ 17 ຄະດີ, ປີ 2014 ມີ 19 ຄະດີ, ປີ 2015 ມີ 18 ຄະດີ ແລະ ປີ 2016 ມີຈຳນວນ 21 ຄະດີ ຊຶ່ງຈຳນວນຄະດີແພ່ງທີ່ກວມເອົາຈຳນວນຫຼາຍກວ່າໝູ່ແມ່ນຄະດີກ່ຽວກັບທີ່ດິນ ເຊັ່ນ ຂໍ້ຂັດແຍ່ງກ່ຽວກັບກຳມະສິດ, ຂໍ້ຂັດແຍ່ງກ່ຽວກັບການຄ້ຳປະກັນ ແລະ ການຊື້ຂາຍສິດນຳໃຊ້ທີ່ດິນ, ສ່ວນຂໍ້ຂັດແຍ່ງຄອບຄົວ ທີ່ພົ້ນເດັ່ນ ແມ່ນຄະດີຢ່າຮ້າງ ແລະ ການແບ່ງປັນສິນສົມສ້າງ ທີ່ກວມເອົາຈຳນວນຫຼາຍ.[48]

### 2.4 ຂັ້ນຕອນການພິຈາລະນາການຂໍລົບລ້າງຄະດີແພ່ງຢູ່ສານປະຊາຊົນພາກກາງ

ຂັ້ນຕອນການພິຈາລະນາເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ປະຕິບັດຕາມຂັ້ນຕອນຄື: ການຮັບຄະດີມາພິຈາລະນາ, ການຄົ້ນຄວ້າຄະດີຂອງສານປະຊາຊົນພາກກາງ ແລະ ການສົ່ງສຳນວນຄະດີໃຫ້ພະນັກງານໄອຍະການ ຊຶ່ງມີເນື້ອໃນລະອຽດຄື:

- ການຮັບເອົາຄະດີ ມາພິຈາລະນາເປັນຂັ້ນລົບລ້າງ ເມື່ອສານຂັ້ນລົບລ້າງ ໄດ້ຮັບສຳນວນຄະດີແລ້ວ ປະທານຄະນະສານ ຈະມອບໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງຄົ້ນຄວ້າ ເພື່ອກະກຽມນຳອອກພິພາກສາ. ຖ້າເຫັນວ່າ ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານຫາກກາຍກຳນົດຂອງການຂໍລົບລ້າງ ຄະນະສານຂັ້ນລົບລ້າງ ຕ້ອງລົງຄຳພິພາກສາ ບໍ່ຮັບເອົາຄະດີດັ່ງກ່າວມາພິຈາລະນາ ແລ້ວສົ່ງສຳນວນ ຄະດີນັ້ນ ໃຫ້ສານທີ່ຕັດສິນເປັນຂັ້ນຕົ້ນ ເພື່ອສົ່ງໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

- ການຄົ້ນຄວ້າຄະດີຂອງສານຂັ້ນລົບລ້າງ, ເມື່ອຄຳຮ້ອງຂໍລົບລ້າງ ປະຕິບັດຖືກຕ້ອງຕາມກຳນົດເວລາ ສານຂັ້ນລົບລ້າງ ຕ້ອງນຳເອົາຄຳຮ້ອງຂໍລົບລ້າງດັ່ງກ່າວ ມາຄົ້ນຄວ້າພິຈາລະນາ ວ່າເປັນການຂໍລົບລ້າງ ທາງດ້ານກົດໝາຍ ຫຼື ບໍ່ ຖ້າຫາກເປັນການຂໍລົບລ້າງທາງດ້ານກົດໝາຍ ສານຂັ້ນລົບລ້າງ ຕ້ອງກວດກາການດຳເນີນຄະດີຂອງ ສານຂັ້ນລຸ່ມ ກ່ຽວກັບການກຳນົດເຫດການຂອງຄະດີ, ການນຳໃຊ້ກົດໝາຍ ຫຼື ລະບຽບການດຳເນີນ ຄະດີ. ຖ້າຫາກບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ສານຂັ້ນລົບລ້າງຈະພິຈາລະນາໃຫ້ບໍ່ໄດ້. ເມື່ອໄດ້ຮັບສຳນວນຄະດີແລ້ວ ຜູ້ພິພາກສາ ຕ້ອງຄົ້ນຄວ້າໃຫ້ສຳເລັດ ພາຍໃນກຳນົດເວລາສາມເດືອນ ຖ້າຫາກບໍ່ສຳເລັດພາຍໃນກຳນົດເວລາດັ່ງກ່າວ ຜູ້ພິພາກສາ ຕ້ອງສະເໜີຂໍຕໍ່ກຳນົດເວລາ ສາມເດືອນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

---

[47] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012 , ມາດຕາ 306.

[48] ຄະນະສານແພ່ງ, ສານປະຊາຊົນພາກກາງ, ສັງລວມຄະດີແພ່ງຂັ້ນລົບລ້າງ ແຕ່ປີ 2011-2016, ປີ 2017, ໜ້າ 1.

- ການສົ່ງສຳນວນຄະດີໃຫ້ພະນັກງານໄອຍະການປະຊາຊົນ, ພາຍຫຼັງ ສານຂັ້ນລົບລ້າງ ໄດ້ຄົ້ນຄວ້າສຳນວນຄະດີ ຢ່າງລະອຽດຄົບຖ້ວນແລ້ວ ຕ້ອງ ເຮັດບົດສະຫຼຸບເຫດການຂອງຄະດີ ແລ້ວສົ່ງສຳນວນຄະດີ ພ້ອມທັງບົດສະຫຼຸບດັ່ງກ່າວ ໃຫ້ອົງການໄອ ຍະການປະຊາຊົນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ຕາມພາລະບົດບາດ. ພະນັກງານໄອຍະການປະຊາຊົນ ຕ້ອງຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງ ພິຈາລະນາໃນທີ່ປະຊຸມສານ.[49]

## 3. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ເນື່ອງຈາກວ່າ ການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ຍັງບໍ່ທັນມີບົດຄົ້ນຄວ້າວິທະຍາສາດ ຫຼື ວິທະຍານິພົນລະດັບປະລິນຍາໂທໃດ ທີ່ດຳເນີນການສຶກສາມາກ່ອນ. ດ້ວຍເຫດນັ້ນ, ວິທະຍານິພົນນີ້ ຈຶ່ງຍົກເອົາບົດທີ່ໃກ້ຄຽງມາດຳເນີນການສຶກສາ ໄດ້ແດ່ບົດຂອງ ບົວລະວັນ ເທບພະວົງ ທີ່ສຶກສາກ່ຽວກັບ ການດຳເນີນຄະດີອາຍາຢູ່ສານປະຊາຊົນພາກເໜືອ, ຜົນການສຶກສາພົບວ່າ ການໃຊ້ສິດຂອງສານປະຊາຊົນພາກເໜືອ ໃນການພິຈາລະນາເປັນຂັ້ນອຸທອນຄຳສັ່ງຄຳຊີ້ຂາດ ແລະ ຄະດີ ທີ່ສານປະຊາຊົນແຂວງ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ ຊຶ່ງມີຈຳນວນ 50.72% ໃຫ້ທັດສະນະວ່າ ສາມາດປະຕິບັດໄດ້ໃນລະດັບຫຼາຍ, ການພິຈາລະນາເປັນຂັ້ນລົບລ້າງຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີທີ່ສານປະຊາຊົນແຂວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ ໂດຍສ່ວນຫຼາຍ 51.45% ໃຫ້ທັດສະນະວ່າປະຕິບັດໄດ້ຫຼາຍທີ່ສຸດ. ການທວງເອົາຄະດີຈາກສານປະຊາຊົນແຂວງມາດຳເນີນ ແລະ ພິຈາລະນາເປັນຂັ້ນອຸທອນດ້ວຍຕົນເອງ ຖ້າເຫັນວ່າຄະດີນັ້ນມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດຕາມລະບຽບການດ້ວຍການເຫັນດີຂອງຄະນະປະທານ, ໂດຍສ່ວນຫຼາຍ 57.97% ເຫັນວ່າຍັງປະຕິບັດໄດ້ໃນລະດັບປານກາງ.[50]

[49] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012, ມາດຕາ 297.

[50] ບົວລະວັນ ເທບພະວົງ, ບັນຫາການດຳເນີນຄະດີຢູ່ສານປະຊາຊົນພາກເໜືອ, ວິທະຍານິພົນປະລິນຍາໂທ, ຫຼັກສູດປະລິນຍາໂທນິຕິສາດ, ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015, ໜ້າ 55.

# ພາກທີ III
# ວິທີການສຶກສາ

## 1. ວິທີການສຶກສາ

ການສຶກສາຄົ້ນຄວ້າໃນ ວິທະຍານິພົນສະບັບນີ້ ແມ່ນການຄົ້ນຄວ້າແບບສຳຫຼວດ ທີ່ມີການເກັບກຳຂໍ້ມູນທັງທາງດ້ານຄຸນນະພາບ ແລະ ປະລິມານ. ການສຶກສາແບບຄຸນນະພາບ ໄດ້ຂໍ້ມູນມາຈາກ ການວິເຄາະເອກະສານ, ໂດຍການອາໃສຂໍ້ມູນຈາກກົດໝາຍປື້ມຄູ່ມື ແລະ ເອກະສານທີ່ເປັນພາສາລາວ ແລະ ການສຳພາດພະນັກງານທີ່ກ່ຽວຂ້ອງ. ສ່ວນການສຶກສາທາງດ້ານປະລິມານ ໄດ້ຂໍ້ມູນມາຈາກການຕອບແບບສອບຖາມທີ່ມີໂຄງສ້າງຂອງກຸ່ມຕົວຢ່າງ.

## 2. ຂອບເຂດດ້ານສະຖານທີ່ ແລະ ເວລາ

ຂອບເຂດທາງດານສະຖານທຂອງການສຶກສາວິທະຍານິພົນນີ້ ແມນດຳເນີນການຢູ ສານປະຊາຊົນພາກກາງ ໂດຍສະເພາະແມ່ນຄະນະສານແພ່ງ ແລະ ຄະນະສານຄອບຄົວ ຂອງສານປະຊາຊົນພາກກາງ.

ຂອບເຂດທາງດານເນອໃນຂອງການສຶກສາຄງນ ແມນເນັ້ນໃສ່ສຶກສາທິດສະດີ ແລະ ແນວທາງປະຕິບັດ ກ່ຽວກັບການພິຈາລະນາຄະດີການຂໍລົບລ້າງຄະດີແພ່ງ ແລະ ຄະດີຄອບຄົວ ຂອງສານປະຊາຊົນພາກກາງ ໂດຍການນຳໃຊ້ສະຖິຕິຍ້ອນຫຼັງ 5 ປີ ຄືປີ 2011-2016.

## 3. ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ທນຳໃຊເພອຄັດເລືອກກຸມຕົວຢາງໃນການສຶກສາຄງນ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາຄະນະສານແພ່ງ , ຈ່າສານ ແລະ ນັກວິຊາການກົດໝາຍ ຂອງສານປະຊາຊົນພາກກາງ ທັງໝົດ 67 ຄົນ. ການສຸ່ມຕົວຢ່າງສຳລັບການສຶກສາຄົ້ນຄ້ວາດັ່ງກ່າວນີ້ ຜູ້ສຶກສາຄົ້ນຄ້ວາໄດ້ນຳໃຊ້ວິທີການຄຳນວນຂະໜາດກຸ່ມຕົວຢ່າງ ໂດຍຍຶດຫຼັກຄວາມໜ້າເຊື່ອຖື 95% ຊຶ່ງມີຄ່າຄວາມຜິດດ່ຽງ 5% ຫຼື 0.05 ໄດ້ກຸ່ມຕົວຢ່າງທັງໝົດ 57 ຄົນ ທຄັດເລືອກມາຈາກຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ນັກວິຊາການກົດໝາຍ ທັງໝົດໃນສານປະຊາຊົນພາກກາງ ໂດຍຄິດໄລຕາມສູດທາງສະຖິຕິຂອງ Taro YAMANE ດັ່ງນີ້:

$$n = \frac{N}{1 + N(e)^2}$$

n = ຂະໜາດຂອງກຸ່ມຕົວຢ່າງ

N = ຂະໜາດຂອງປະຊາກອນທີ່ໃຊ້ໃນການຄົ້ນຄວ້າ

e = ຄ່າສ່ວນຮ້ອຍຄວາມຜິດດ່ຽງຈາກການສຸ່ມຕົວຢ່າງ

ເມື່ອແທນຕົວເລກໃສ່ສູດ= $67/1+67(0.05)^2$ = 57

n= 57 ຄົນ.

ນອກຈາກຕົວຢາງທໃຊໃນການຕອບແບບສອບຖາມແລວ, ການສຶກສານ ຍັງຈະມີການສຳພາດ ເຈາະເລິກກັບບັນດາປະທານ ແລະ ຮອງປະທານຄະນະສານແພ່ງ ແລະ ປະທານ ແລະ ຮອງປະທານຄະນະສານຄອບຄົວ ລວມເຖິງຜູ້ພິພາກສາ ຈຳນວນ 10 ທານ ແລະ ຜູ້ຂໍລົບລ້າງຄະດີແພ່ງອີກ ຈຳນວນ 1 ຄົນ. ການສຳພາດ ແມ່ນເພື່ອໃຫ້ໄດ້ຂໍ້ມູນ ໃນທາງເລິກກວ່າ ແລະ ນຳມາເອົາຜົນຂອງການສຳພາດມາປຽບທຽບກັບຜົນຂອງການຕອບແບບສອບຖາມ ແລວຈຶງນຳເອົາຜົນຂອງຂມູນທັງສອງ ມາວິເຄາະໃສກັບທິດສະດີ.

## 4. ເຄື່ອງມືເກັບກຳຂໍ້ມູນ

ເຄື່ອງມືເກັບກຳຂໍ້ມູນແມ່ນແບບສອບຖາມ ແລະ ຄຳຖາມສຳພາດ. ການສ້າງແບບສອບຖາມ ແລະ ແບບສຳພາດ ຊຶ່ງຫຼັກການຂອງການສ້າງແບບສອບຖາມ ແລະ ຄຳຖາມສຳພາດ ແມ່ນໄດ້ຄຳນຶງເຖິງວັດຖຸປະສົງ, ຂອບເຂດຂອງການສຶກສາ, ການທົບທວນທິດສະດີຫຼັກການ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງເພື່ອນຳມາເປັນພື້ນຖານທາງດ້ານທິດສະດີໃນການຕັ້ງຂໍ້ຄຳຖາມ, ການໃຊ້ຄວາມຮູ້ ແລະ ປະສົບການຂອງຜູ້ສຶກສາ ລວມເຖິງການຂໍຄຳປຶກສາ, ຄຳແນະນຳ ແລະຄວາມຮ່ວມມືຈາກຜູ້ມີຄວາມຊຳນານ ແລະປະສົບການກ່ຽວຂ້ອງ ແລະ ອາຈານທີ່ປຶກສາວິທະຍານິພົນ.

ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນແມ່ນຈະໄດນຳໃຊແບບສອບຖາມ ທໄດຜານການສາງ ແລະ ປັບປຸງຕາມຫຼັກວິຊາການ, ຄຳຖາມສຳພາດ ທມີໂຄງສາງ, ການຈົດກ່າຍໃນເວລາສຳພາດ, ການນຳໃຊ້ USB ເພອບັນບັນທຶກຂໍ້ມູນ, ນຳໃຊ້ຄອມພິວເຕີ້, ນຳໃຊ້ໂທລະສານຕ່າງໆ ແລະ ຜູ້ສຶກສາໄດ້ລົງເກັບກຳຂໍ້ມູນດ້ວຍຕົນເອງ.

## 5. ວິທີວິເຄາະຂໍ້ມູນ ແລະແປຜົນ

ການວິເຄາະຂມູນແບບປະລິມານທໄດຈາກແບບສອບຖາມ ແບງອອກເປັນ 2 ສວນຄື: ສວນທເປັນຄຸນລັກສະນະທວໄປຂອງຜູຕອບແບບສອບຖາມ ແມນຄິດໄລດວຍການຊອກ

ຫາຈຳນວນ ແລະສວນຮອຍ ຕຄຳຖາມ, ສວນທເປັນທັດສະນະຕການດຳເນີນຄະດີແພ່ງເປັນຂັ້ນລົບລ້າງ ແມນຄິດໄລດວຍການຊອກຈຳນວນ ແລະ ສ່ວນຮ້ອຍ.

ການວິເຄາະຂມູນທາງດານຄຸນນະພາບ ທໄດຈາກການສຳພາດ ແມນໄດສັງລວມເປັນໝວດຄຳເຫັນ ແລະ ວິເຄາະດວຍການອານຜົນຕາມກຸ່ມຄຳເຫັນ.

ສຸດທາຍ, ຈຶ່ງເອົາຜົນຂອງການສຶກສາ ທໄດຈາກທັງປະລິມານ ແລະ ຄຸນນະພາບມາອະທິບາຍໃສ່ກັບຫຼັກການ ແລະ ທິດສະດີ ທີ່ໄດ້ທົບທວນໄວ້ໃນພາກທີສອງ ກ່ອນທີ່ຈະຫາຂໍ້ສະຫຼຸບ ແລະ ຂໍ້ສະເໜີຕໍ່ໄປ.

# ພາກທີ IV
# ຜົນການສຶກສາ

## 1. ຜົນການສຶກສາ

### 1.1 ຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ

ຕາຕະລາງ 1 ເພດ

| ເພດ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຊາຍ | 21 | 36.84 |
| ຍິງ | 36 | 63.16 |
| ລວມ | 57 | 100 |

ຈາກຕາຕະລາງ 1, ຜູ້ຕອບແບບສອບຖາມ ຈຳນວນ 63.16% ເປັນເພດຊາຍ, ຈຳນວນ 36.84% ເປັນເພດຍິງ.

ຕາຕະລາງ 2 ອາຍຸ

| ອາຍຸລະຫວ່າ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| 25 -35 ປີ | 30 | 52.63 |
| 36 -45 ປີ | 13 | 22.8 |
| 46 – 55 ປີ | 11 | 19.29 |
| ຫຼາຍກວ່າ 56 ປີ | 3 | 5.29 |
| ລວມ | 57 | 100 |

ຈາກຕາຕະລາງ 2, ຜູ້ຕອບແບບສອບຖາມ 52.63% ມີອາຍຸລະຫວ່າງ 25-35 ປີ, ຈຳນວນ 22.8% ມີອາຍຸລະຫວ່າງ 36-45 ປີ, ຈຳນວນ 19.29% ມີອາຍຸລະຫວ່າງ 46-55 ປີ ແລະ ຈຳນວນ 5.29% ມີອາຍຸຫຼາຍກວ່າ 56 ປີ.

ຕາຕະລາງ 3 ລະດັບວິຊາສະເພາະ

| ອາຍຸລະຫວ່າ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ປະລິນຍາຕີ | 50 | 87.71 |
| ປະລິນຍາໂທ | 7 | 12.29 |
| ລວມ | 57 | 100 |

ຈາກຕາຕະລາງ 3, ຜູ້ຕອບແບບສອບຖາມ ຈຳນວນ 87.71% ຈົບລະດັບວິຊາສະເພາະລະດັບປະລິນຍາຕີ ແລະ ຈຳນວນ 12.29% ຈົບປະລິນຍາໂທ.

ຕາຕະລາງ 4 ວິຊາສະເພາະທີ່ຮຽນມາ

| ອາຍຸລະຫວ່າ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ນິຕິສາດ | 45 | 78.94 |
| ລັດຖະສາດ | 8 | 14.03 |
| ອື່ນໆ | 4 | 7.01 |
| ລວມ | 57 | 100 |

ຈາກຕາຕະລາງ 4, ຜູ້ຕອບແບບສອບຖາມ ຈຳນວນ 78.94% ຕອບວ່າ ວິຊາສະເພາະທີ່ຮຽນມາແມ່ນນິຕິສາດ, ຈຳນວນ 14.03% ຈົບລັດຖະສາດ ແລະ ຈຳນວນ 7.01% ຈົບສາຂາອື່ນ ເຊັ່ນ ການເງິນ.

ຕາຕະລາງ 5 ປະສົບການເຮັດວຽກ

| ອາຍຸລະຫວ່າ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| 2-10 ປີ | 30 | 52.63 |
| 11 - 15 ປີ | 10 | 17.54 |
| 16 - 20 ປີ | 8 | 14.03 |
| 21 - 25 ປີ | 7 | 12.28 |
| ຫຼາຍກວ່າ 26 ປີ | 2 | 3.5 |
| ລວມ | 57 | 100 |

ຈາກຕາຕະລາງ 5, ຜູ້ຕອບແບບສອບຖາມ ຈຳນວນ 52.63% ມີປະສົບການເຮັດວຽກ 2-10 ປີ, ຈຳນວນ 17.54% ມີປະສົບການ 11-15 ປີ, ຈຳນວນ 14.03% ມີປະສົບການ 16-20 ປີ, ຈຳນວນ 12.28% ມີປະສົບການ 21-25 ປີ ແລະ ຈຳນວນ 3.5% ມີປະສົບການ ຫຼາຍກວ່າ 26 ປີ.

ຕາຕະລາງ 6 ຜູ້ຕອບແບບສອບຖາມແມ່ນ

| ອາຍຸລະຫວ່າ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຜູ້ພິພາກສາ | 16 | 28.07 |
| ຜູ້ຊ່ວຍຜູ້ພິພາກສາ | 22 | 38.59 |
| ພະນັກງານວິຊາການ | 19 | 33.33 |
| ລວມ | 57 | 100 |

ຈາກຕາຕະລາງ 6, ຜູ້ຕອບແບບສອບຖາມ ຈຳນວນ 38.59% ແມ່ນຜູ້ຊ່ວຍຜູ້ພິພາກສາ, ຈຳນວນ 33.33% ແມ່ນພະນັກງານວິຊາການ ແລະ ຈຳນວນ 28.07% ແມ່ນຜູ້ພິພາກສາ.

ຈາກຕາຕະລາງ 1-6, ສາມາດສະຫຼຸບຄຸນລັກສະນະທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ຄື: ຈຳນວນ 63.16% ເປັນເພດຊາຍ, ຈຳນວນ 52.63% ມີອາຍຸລະຫວ່າງ 25-35 ປີ, ຈຳນວນ 87.71% ຈົບລະດັບວິຊາສະເພາະລະດັບປະລິນຍາຕີ, ຈຳນວນ 78.94% ຕອບວ່າ ວິຊາສະເພາະທີ່ຮຽນມາແມ່ນນິຕິສາດ, ຈຳນວນ 52.63% ມີປະສົບການເຮັດວຽກ 2-10 ປີ, ຈຳນວນ 38.59% ແມ່ນຜູ້ຊ່ວຍຜູ້ພິພາກສາ.

**1.2 ທັດສະນະຜູ້ຕອບແບບສອບຖາມ ກ່ຽວກັບການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ**

**1.2.1 ຂັ້ນຕອນ, ສາເຫດ ແລະ ຂອບເຂດຂອງການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ**

ຕາຕະລາງທີ 7 ການຮັບເອົາຄະດີ ມາພິຈາລະນາເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກກາງ ມີຈຳນວນຫຼາຍປານໃດ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 10 | 17.54 |
| ຫຼາຍ | 13 | 22.81 |
| ປານກາງ | 19 | 33.33 |
| ໜ້ອຍ | 8 | 14.04 |
| ໜ້ອຍທີ່ສຸດ | 7 | 12.28 |
| ລວມ | 57 | 100 |

ຈາກຕາຕະລາງທີ 7, ຜູ້ຕອບແບບສອບຖາມຈຳນວນ 33.33% ເຫັນວ່າ ການຮັບເອົາຄະດີ ມາພິຈາລະນາເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກກາງ ມີປານກາງ, ຈຳນວນ 22.81% ເຫັນວ່າມີຫຼາຍ, ຈຳນວນ 17.54% ເຫັນວ່າມີຫຼາຍທີ່ສຸດ, ຈຳນວນ 14.04% ເຫັນວ່າມີໜ້ອຍ ແລະ ຈຳນວນ 12.28% ເຫັນວ່າ ມີໜ້ອຍທີ່ສຸດ.

ຕາຕະລາງທີ 8 ການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງ ເພື່ອໃຫ້ພິຈາລະນາທາງດ້ານກົດໝາຍ ຫຼື ທາງດ້ານອື່ນ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ທາງດ້ານກົດໝາຍ | 26 | 45.61 |
| ທາງດ້ານອື່ນ | 31 | 54.39 |
| ລວມ | 57 | 100 |

ຈາກຕາຕະລາງທີ 8, ຜູ້ຕອບແບບສອບຖາມ ຈຳນວນ 54.39% ເຫັນວ່າ ການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງ ເພື່ອໃຫ້ພິຈາລະນາບັນຫາທາງດ້ານອື່ນ, ຈຳນວນ 45.61% ເຫັນວ່າ ເພື່ອໃຫ້ພິຈາລະນາທາງດ້ານກົດໝາຍ.

ຕາຕະລາງທີ 9 ຜ່ານມາ ສານປະຊາຊົນພາກກາງ ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ ຖືກຕ້ອງຕາມລະບຽບການຂໍລົບລ້າງ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 8 | 14.04 |
| ຫຼາຍ | 11 | 19.30 |
| ປານກາງ | 18 | 31.58 |
| ໜ້ອຍ | 13 | 22.81 |
| ໜ້ອຍທີ່ສຸດ | 7 | 12.28 |
| ລວມ | 57 | 100 |

ຈາກຕາຕະລາງທີ 9, ຜູ້ຕອບແບບສອບຖາມ ຈຳນວນ 31.58% ເຫັນວ່າ ຜ່ານມາ ສານປະຊາຊົນພາກກາງ ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ ຖືກຕ້ອງຕາມລະບຽບການຂໍລົບລ້າງ ມີປານກາງ, ຈຳນວນ 22.81% ເຫັນວ່າມີໜ້ອຍ, ຈຳນວນ 19.3% ເຫັນວ່າມີຫຼາຍ, ຈຳນວນ 14.04% ເຫັນວ່າມີຫຼາຍທີ່ສຸດ ແລະ ຈຳນວນ 12.28% ເຫັນວ່າມີໜ້ອຍທີ່ສຸດ.

ຕາຕະລາງທີ 10 ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 6 | 10.53 |
| ຫຼາຍ | 8 | 14.04 |
| ປານກາງ | 11 | 19.30 |
| ໜ້ອຍ | 20 | 35.09 |
| ໜ້ອຍທີ່ສຸດ | 12 | 21.05 |
| ລວມ | 57 | 100 |

ຈາກຕາຕະລາງທີ 10, ຜູ້ຕອບແບບສອບຖາມ ຈຳນວນ 35.09% ເຫັນວ່າ ຜ່ານມາ ການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນ ມີຈຳນວນໜ້ອຍຄະດີ, ຈຳນວນ 21.05% ເຫັນວ່າມີໜ້ອຍທີ່ສຸດ, ຈຳນວນ 19.3% ເຫັນວ່າມີ

ປານກາງ, ຈຳນວນ 14.04% ເຫັນວ່າມີຫຼາຍ ແລະ ຈຳນວນ 10.53% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 11 ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມນຳໃຊ້ກົດໝາຍບໍ່ຊັດເຈນ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 8 | 14.04 |
| ຫຼາຍ | 7 | 12.28 |
| ປານກາງ | 10 | 17.54 |
| ໜ້ອຍ | 17 | 29.82 |
| ໜ້ອຍທີ່ສຸດ | 15 | 26.32 |
| ລວມ | 57 | 100 |

ຈາກຕາຕະລາງທີ 11, ຜູ້ຕອບແບບສອບຖາມ ຈຳນວນ 29.82% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມນຳໃຊ້ກົດໝາຍບໍ່ຊັດເຈນ ມີໜ້ອຍ, ຈຳນວນ 26.32% ເຫັນວ່າມີໜ້ອຍທີ່ສຸດ, ຈຳນວນ 17.54% ເຫັນວ່າມີປານກາງ, ຈຳນວນ 12.28% ເຫັນວ່າມີຫຼາຍ ແລະ ຈຳນວນ 14.04% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 12 ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 7 | 12.28 |
| ຫຼາຍ | 9 | 15.79 |
| ປານກາງ | 8 | 14.04 |
| ໜ້ອຍ | 21 | 36.84 |
| ໜ້ອຍທີ່ສຸດ | 12 | 21.05 |
| ລວມ | 57 | 100 |

ຈາກຕາຕະລາງທີ 12, ຜູ້ຕອບແບບສອບຖາມ ຈຳນວນ 36.84% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີ

ໜ້ອຍ, ຈຳນວນ 21.05% ເຫັນວ່າມີໜ້ອຍສຸດ, ຈຳນວນ 15.79% ເຫັນວ່າມີຫຼາຍ, ຈຳນວນ 14.04% ເຫັນວ່າມີປານກາງ ແລະ ຈຳນວນ 12.28% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 13 ຜ່ານມາ ມີຫຼາຍຄະດີປານໃດ ທີ່ບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ແລະ ສານຂັ້ນລົບລ້າງຈະພິຈາລະນາ ໃຫ້ບໍ່ໄດ້

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 13 | 22.81 |
| ຫຼາຍ | 16 | 28.07 |
| ປານກາງ | 11 | 19.30 |
| ໜ້ອຍ | 8 | 14.04 |
| ໜ້ອຍທີ່ສຸດ | 9 | 15.79 |
| ລວມ | 57 | 100 |

ຈາກຕາຕະລາງທີ 13, ຜູ້ຕອບແບບສອບຖາມ ຈຳນວນ 28.07% ເຫັນວ່າ ຜ່ານມາມີຫຼາຍຄະດີທີ່ບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ແລະ ສານຂັ້ນລົບລ້າງຈະພິຈາລະນາໃຫ້ບໍ່ໄດ້, ຈຳນວນ 22.81% ເຫັນວ່າມີຫຼາຍທີ່ສຸດ, ຈຳນວນ 19.3% ເຫັນວ່າມີປານກາງ, ຈຳນວນ 15.79% ເຫັນວ່າມີໜ້ອຍທີ່ສຸດ ແລະ ຈຳນວນ 14.04% ເຫັນວ່າມີໜ້ອຍ.

ຕາຕະລາງທີ 14 ຜ່ານມາການຄົ້ນຄວ້າຄະດີສຳເລັດ ພາຍໃນກຳນົດເວລາ ສາມເດືອນ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 8 | 14.04 |
| ຫຼາຍ | 15 | 26.32 |
| ປານກາງ | 22 | 38.60 |
| ໜ້ອຍ | 6 | 10.53 |
| ໜ້ອຍທີ່ສຸດ | 6 | 10.53 |
| ລວມ | 57 | 100 |

ຈາກຕາຕະລາງທີ 14, ຜູ້ຕອບແບບສອບຖາມ ຈຳນວນ 38.6% ເຫັນວ່າ ຜ່ານມາການຄົ້ນຄວ້າຄະດີສຳເລັດ ພາຍໃນກຳນົດເວລາ ສາມເດືອນ ມີລະດັບການປາງ, ຈຳນວນ 26.32% ເຫັນວ່າສາມາດສຳເລັດໃນລະດັບຫຼາຍ, ຈຳນວນ 14.04% ເຫັນວ່າ ສາມາດສຳ

ເລັດໃນລະດັບຫຼາຍ ແລະ ຈຳນວນ 10.53% ເຫັນວ່າສາມາດສຳເລັດໃນລະດັບໜ້ອຍ ແລະ ໜ້ອຍທີ່ສຸດ.

ຕາຕະລາງທີ 15 ຜ່ານມາມີບໍ່ການຄົ້ນຄວ້າຄະດີບໍ່ສຳເລັດພາຍໃນ ສາມເດືອນ ແລະ ມີການຕໍ່ກຳນົດເວລາ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 9 | 15.79 |
| ຫຼາຍ | 13 | 22.81 |
| ປານກາງ | 24 | 42.11 |
| ໜ້ອຍ | 6 | 10.53 |
| ໜ້ອຍທີ່ສຸດ | 5 | 8.77 |
| ລວມ | 57 | 100 |

ຈາກຕາຕະລາງທີ 15, ຜູ້ຕອບແບບສອບຖາມ ຈຳນວນ 42.11% ເຫັນວ່າ ຜ່ານມາມີການຄົ້ນຄວ້າຄະດີບໍ່ສຳເລັດພາຍໃນ ສາມເດືອນ ແລະ ມີການຕໍ່ກຳນົດເວລາລະດັບປານກາງ, ຈຳນວນ 22.81% ເຫັນວ່າ ມີຫຼາຍ, ຈຳນວນ 15.79% ເຫັນວ່າມີຫຼາຍທີ່ສຸດ, ຈຳນວນ 10.53% ເຫັນວ່າມີໜ້ອຍ ແລະ ຈຳນວນ 8.77% ເຫັນວ່າມີໜ້ອຍທີ່ສຸດ.

ຕາຕະລາງທີ 16 ຜ່ານມາມີຫຼາຍຄະດີປານໃດ ທີ່ພະນັກງານໄອຍະການປະຊາຊົນບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ໃນທີ່ປະຊຸມສານ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 4 | 7.02 |
| ຫຼາຍ | 5 | 8.77 |
| ປານກາງ | 13 | 22.81 |
| ໜ້ອຍ | 21 | 36.84 |
| ໜ້ອຍທີ່ສຸດ | 14 | 24.56 |
| ລວມ | 57 | 100 |

ຈາກຕາຕະລາງທີ 16, ຜູ້ຕອບແບບສອບຖາມ ຈຳນວນ 36.84% ເຫັນວ່າ ຜ່ານມາການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ໃນທີ່ປະຊຸມສານ ມີໜ້ອຍ, ຈຳນວນ 24.56% ເຫັນວ່າມີໜ້ອຍທີ່ສຸດຈຳນວນ 22.81% ເຫັນວ່າມີປານກາງ, ຈຳນວນ 8.77% ເຫັນວ່າ ມີຫຼາຍ ແລະ ຈຳນວນ 7.02% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 17 ຜ່ານມາມີຫຼາຍຄະດີປານໃດ ທີ່ຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 16 | 28.07 |
| ຫຼາຍ | 23 | 40.35 |
| ປານກາງ | 10 | 17.54 |
| ໜ້ອຍ | 4 | 7.02 |
| ໜ້ອຍທີ່ສຸດ | 4 | 7.02 |
| ລວມ | 57 | 100 |

ຈາກຕາຕະລາງທີ 17, ຜູ້ຕອບແບບສອບຖາມ ຈຳນວນ 40.35% ເຫັນວ່າ ຜ່ານມາການທີ່ຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນມີຫຼາຍ, ຈຳນວນ 28.07% ເຫັນວ່າມີຫຼາຍທີ່ສຸດ, ຈຳນວນ 17.54% ເຫັນວ່າມີປານກາງ ແລະ ຈຳນວນ 7.02% ເຫັນວ່າມີໜ້ອຍ ແລະ ໜ້ອຍທີ່ສຸດ.

ຕາຕະລາງທີ 18 ຜ່ານມາມີຫຼາຍຄະດີປານໃດ ທີ່ການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ໄດ້ຮ້ອງຂໍໃຫ້ມີການພິຈາລະນາກ່ຽວກັບການນຳໃຊ້ມາດຕາ ກົດໝາຍຕໍ່ເນື້ອໃນ, ເຫດການຂອງຄະດີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 14 | 24.56 |
| ຫຼາຍ | 22 | 38.60 |
| ປານກາງ | 12 | 21.05 |
| ໜ້ອຍ | 6 | 10.53 |
| ໜ້ອຍທີ່ສຸດ | 3 | 5.26 |
| ລວມ | 57 | 100 |

ຈາກຕາຕະລາງທີ 18, ຜູ້ຕອບແບບສອບຖາມ ຈຳນວນ 38.6% ເຫັນວ່າ ຜ່ານມາການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ໄດ້ຮ້ອງຂໍໃຫ້ມີການພິຈາລະນາກ່ຽວກັບການນຳໃຊ້ມາດຕາ ກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ ມີຫຼາຍ, ຈຳນວນ 24.56% ເຫັນວ່າ ມີຫຼາຍທີ່ສຸດ, ຈຳນວນ 21.05% ເຫັນວ່າມີປານກາງ, ຈຳນວນ 10.53% ເຫັນວ່າມີໜ້ອຍ ແລະ ຈຳນວນ 5.26% ເຫັນວ່າມີໜ້ອຍທີ່ສຸດ.

ຕາຕະລາງທີ 19 ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 12 | 21.05 |
| ຫຼາຍ | 12 | 21.05 |
| ປານກາງ | 25 | 43.86 |
| ໜ້ອຍ | 4 | 7.02 |
| ໜ້ອຍທີ່ສຸດ | 4 | 7.02 |
| ລວມ | 57 | 100 |

ຈາກຕາຕະລາງທີ 19, ຜູ້ຕອບແບບສອບຖາມ ຈຳນວນ 43.86% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ ມີປານກາງ, ຈຳນວນ 21.05% ເຫັນວ່າມີຫຼາຍ ແລະ ຫຼາຍທີ່ສຸດ ແລະ ຈຳນວນ 7.02% ເຫັນວ່າມີໜ້ອຍ ແລະ ໜ້ອຍທີ່ສຸດ.

ຕາຕະລາງທີ 20 ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 11 | 19.30 |
| ຫຼາຍ | 14 | 24.56 |
| ປານກາງ | 18 | 31.58 |
| ໜ້ອຍ | 6 | 10.53 |
| ໜ້ອຍທີ່ສຸດ | 8 | 14.04 |
| ລວມ | 57 | 100 |

ຈາກຕາຕະລາງທີ 20, ຜູ້ຕອບແບບສອບຖາມ ຈຳນວນ 31.58% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ ມີປານກາງ, ຈຳນວນ 24.56% ເຫັນວ່າ ມີຫຼາຍ, ຈຳນວນ 19.3% ເຫັນວ່າມີຫຼາຍທີ່ສຸດ, ຈຳນວນ 14.04% ເຫັນວ່າມີໜ້ອຍທີ່ສຸດ ແລະ ຈຳນວນ 10.53% ເຫັນວ່າມີໜ້ອຍ.

ຕາຕະລາງທີ 21 ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາ ຄືນໃໝ່ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 6 | 10.53 |
| ຫຼາຍ | 9 | 15.79 |
| ປານກາງ | 11 | 19.30 |
| ໜ້ອຍ | 18 | 31.58 |
| ໜ້ອຍທີ່ສຸດ | 13 | 22.81 |
| ລວມ | 57 | 100 |

ຈາກຕາຕະລາງທີ 21, ຜູ້ຕອບແບບສອບຖາມ ຈຳນວນ 31.58% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາ ຄືນໃໝ່ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ ມີໜ້ອຍ, ຈຳນວນ 22.81% ເຫັນວ່າມີໜ້ອຍທີ່ສຸດ, ຈຳນວນ 19.3% ເຫັນວ່າມີປານກາງ, ຈຳນວນ 15.79% ເຫັນວ່າມີຫຼາຍ ແລະ ຈຳນວນ 10.53% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 22 ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີ ໃຫ້ສານໃດສານໜຶ່ງ ພິຈາລະນາຄືນໃໝ່ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 8 | 14.04 |
| ຫຼາຍ | 7 | 12.28 |
| ປານກາງ | 10 | 17.54 |
| ໜ້ອຍ | 15 | 26.32 |
| ໜ້ອຍທີ່ສຸດ | 17 | 29.82 |
| ລວມ | 57 | 100 |

ຈາກຕາຕະລາງທີ 22, ຜູ້ຕອບແບບສອບຖາມ ຈຳນວນ 29.82% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີ ໃຫ້ສານໃດສານໜຶ່ງ ພິຈາລະນາຄືນໃໝ່ ມີໜ້ອຍທີ່ສຸດ, ຈຳນວນ 26.32% ເຫັນວ່າມີໜ້ອຍ, ຈຳນວນ 17.54% ເຫັນວ່າມີປານກາງ, ຈຳນວນ 12.28% ເຫັນວ່າມີຫຼາຍ ແລະ ຈຳນວນ 14.04% ເຫັນວ່າມີຫຼາຍທີ່ສຸດ.

ຕາຕະລາງທີ 23 ທ່ານຄິດວ່າ ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ມີ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 5 | 8.77 |
| ຫຼາຍ | 6 | 10.53 |
| ປານກາງ | 13 | 22.81 |
| ໜ້ອຍ | 18 | 31.58 |
| ໜ້ອຍທີ່ສຸດ | 15 | 26.32 |
| ລວມ | 57 | 100 |

ຈາກຕາຕະລາງທີ 23, ຜູ້ຕອບແບບສອບຖາມ ຈຳນວນ 31.58% ເຫັນວ່າ ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ມີໜ້ອຍ, ຈຳນວນ 26.32% ເຫັນວ່າມີໜ້ອຍທີ່ສຸດ, ຈຳນວນ 22.81% ເຫັນວ່າມີປານກາງ, ຈຳນວນ 10.53% ເຫັນວ່າມີຫຼາຍ ແລະ ຈຳນວນ 8.77% ເຫັນວ່າມີຫຼາຍທີ່ສຸດ.

ຈາກຕາຕະລາງ 7-23 ສາມາດ ສະຫຼຸບຂັ້ນຕອນ, ສາເຫດ ແລະ ຂອບເຂດຂອງການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ ໄດ້ຄື: ຜູ້ຕອບແບບສອບຖາມ ຈຳນວນ 54.39% ເຫັນວ່າ ການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງເພື່ອໃຫ້ພິຈາລະນາບັນຫາທາງດ້ານອື່ນ, ຈຳນວນ 43.86% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ ມີປານກາງ, ຈຳນວນ 42.11% ເຫັນວ່າ ຜ່ານມາການຄົ້ນຄວ້າຄະດີບໍ່ສຳເລັດພາຍໃນ ສາມເດືອນ ແລະ ມີການຕໍ່ກຳນົດເວລາ ມີຢູ່ໃນລະດັບປານກາງ, ຈຳນວນ 40.35% ເຫັນວ່າ ຜ່ານມາການຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນ ມີຫຼາຍ, ຈຳນວນ 38.6% ເຫັນວ່າ ຜ່ານມາການຄົ້ນຄວ້າຄະດີສຳເລັດ ພາຍໃນກຳນົດເວລາ ສາມເດືອນ ມີລະດັບການປາງ, ຈຳນວນ 38.6% ເຫັນວ່າ ຜ່ານມາ ການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ໄດ້ຮ້ອງຂໍໃຫ້ມີການພິຈາລະນາກ່ຽວກັບການນຳໃຊ້ມາດຕາກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ ມີຫຼາຍ.

ຜູ້ຕອບແບບສອບຖາມຈຳນວນ 36.84% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີໜ້ອຍ, ຈຳນວນ 36.84% ເຫັນວ່າ ຜ່ານມາການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ໃນທີ່ປະຊຸມສານ ມີໜ້ອຍ, ຈຳນວນ 35.09% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນ ມີຈຳນວນໜ້ອຍຄະດີ, ຈຳນວນ 33.33% ເຫັນວ່າ ການຮັບເອົາຄະດີ ມາພິຈາລະນາເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກກາງ ມີປານກາງ, ຈຳນວນ 31.58% ເຫັນວ່າ ຜ່ານມາ ສານປະຊາຊົນພາກກາງ ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ ຖືກຕ້ອງຕາມລະບຽບການຂໍລົບລ້າງ ມີປານກາງ, ຈຳນວນ 31.58% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ ມີປານກາງ, ຈຳນວນ 31.58% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາ ຄືນໃໝ່ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ ມີໜ້ອຍ, ຈຳນວນ 31.58% ເຫັນວ່າ ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບ

ສວນ ແລະ ໄຕ່ສວນຕື່ມອີກ ມີໜ້ອຍ, ຈຳນວນ 29.82% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມນຳໃຊ້ກົດໝາຍບໍ່ຊັດເຈນ ມີໜ້ອຍ, ຈຳນວນ 29.82% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີ ໃຫ້ສານໃດສານໜຶ່ງ ພິຈາລະນາຄືນໃໝ່ ມີໜ້ອຍທີ່ສຸດ, ຈຳນວນ 28.07% ເຫັນວ່າ ຜ່ານມາ ມີຄະດີ ທີ່ບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ແລະ ສານຂັ້ນລົບລ້າງຈະພິຈາລະນາ ໃຫ້ບໍ່ໄດ້ມີຫຼາຍ.

**1.2.2 ບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ**

ຕາຕະລາງທີ 24 ທ່ານຄິດວ່າ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງ ຢູ່ໃນລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 20 | 35.09 |
| ຫຼາຍ | 16 | 28.07 |
| ປານກາງ | 11 | 19.30 |
| ໜ້ອຍ | 5 | 8.77 |
| ໜ້ອຍທີ່ສຸດ | 5 | 8.77 |
| ລວມ | 57 | 100 |

ຈາກຕາຕະລາງທີ 24, ຜູ້ຕອບແບບສອບຖາມ ຈຳນວນ 35.09% ເຫັນວ່າການທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງ ຢູ່ໃນລະດັບຫຼາຍທີ່ສຸດ, ຈຳນວນ 28.07% ເຫັນວ່າ ພາໃຫ້ມີບັນຫາໃນລະດັບຫຼາຍ, ຈຳນວນ 19.3% ເຫັນວ່າ ພາໃຫ້ມີບັນຫາລະດັບປານກາງ, ຈຳນວນ 8.77% ເຫັນວ່າພາໃຫ້ມີບັນຫາໜ້ອຍ ແລະ ໜ້ອຍທີ່ສຸດ.

ຕາຕະລາງທີ 25 ທ່ານຄິດວ່າຫາກຄູ່ຄວາມມີການຂໍລົບລ້າງເນື້ອຄະດີ ຕໍ່ສານປະຊາຊົນພາກ ກາງ ຈະພາໃຫ້ມີບັນຫາລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 17 | 29.82 |
| ຫຼາຍ | 24 | 42.11 |
| ປານກາງ | 8 | 14.04 |
| ໜ້ອຍ | 4 | 7.02 |
| ໜ້ອຍທີ່ສຸດ | 4 | 7.02 |
| ລວມ | 57 | 100 |

ຈາກຕາຕະລາງທີ 25, ຜູ້ຕອບແບບສອບຖາມ ຈຳນວນ 42.11% ເຫັນວ່າຫາກຄູ່ຄວາມມີການຂໍລົບລ້າງເນື້ອຄະດີ ຕໍ່ສານປະຊາຊົນພາກກາງ ຈະພາໃຫ້ມີບັນຫາລະດັບຫຼາຍ, ຈຳນວນ 29.82% ເຫັນວ່າ ຈະພາໃຫ້ມີບັນຫາຫຼາຍທີ່ສຸດ, ຈຳນວນ 14.04% ເຫັນວ່າ ຈະພາໃຫ້ມີບັນຫາປານກາງ, ຈຳນວນ 7.02% ເຫັນວ່າ ຈະພາໃຫ້ມີບັນຫາໜ້ອຍ ແລະ ໜ້ອຍທີ່ສຸດ.

ຕາຕະລາງທີ 26 ຜ່ານມາບັນຫາການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 25 | 43.86 |
| ຫຼາຍ | 14 | 24.56 |
| ປານກາງ | 10 | 17.54 |
| ໜ້ອຍ | 6 | 10.53 |
| ໜ້ອຍທີ່ສຸດ | 2 | 3.51 |
| ລວມ | 57 | 100 |

ຈາກຕາຕະລາງທີ 26, ຜູ້ຕອບແບບສອບຖາມ ຈຳນວນ 43.86% ເຫັນວ່າ ຜ່ານມາບັນຫາການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບຫຼາຍທີ່ສຸດ, ຈຳນວນ 24.56% ເຫັນວ່າ ມີບັນຫາຫຼາຍ, ຈຳນວນ 17.54% ເຫັນວ່າມີບັນຫາປານກາງ, ຈຳນວນ 10.53% ເຫັນວ່າມີບັນຫາໜ້ອຍ ແລະ ຈຳນວນ 3.51% ເຫັນວ່າມີບັນຫາໜ້ອຍທີ່ສຸດ.

ຕາຕະລາງທີ 27 ການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ເປັນບັນຫາໃນລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 16 | 28.07 |
| ຫຼາຍ | 19 | 33.33 |
| ປານກາງ | 11 | 19.30 |
| ໜ້ອຍ | 7 | 12.28 |
| ໜ້ອຍທີ່ສຸດ | 4 | 7.02 |
| ລວມ | 57 | 100 |

ຈາກຕາຕະລາງທີ 27, ຜູ້ຕອບແບບສອບຖາມ ຈຳນວນ 33.33% ເຫັນວ່າ ການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ເປັນບັນຫາໃນລະດັບຫຼາຍ, ຈຳນວນ 28.07% ເຫັນວ່າ ເປັນບັນຫາຫຼາຍທີ່ສຸດ, ຈຳນວນ 19.3% ເຫັນວ່າເປັນບັນຫາປານກາງ, ຈຳນວນ 12.28% ເຫັນວ່າເປັນບັນຫາໜ້ອຍ ແລະ ຈຳນວນ 7.02% ເຫັນວ່າເປັນບັນຫາໜ້ອຍທີ່ສຸດ.

ຕາຕະລາງທີ 28 ທ່ານຄິດວ່າ ການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບໃດຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 15 | 26.32 |
| ຫຼາຍ | 26 | 45.61 |
| ປານກາງ | 8 | 14.04 |
| ໜ້ອຍ | 5 | 8.77 |
| ໜ້ອຍທີ່ສຸດ | 3 | 5.26 |
| ລວມ | 57 | 100 |

ຈາກຕາຕະລາງທີ 28, ຜູ້ຕອບແບບສອບຖາມ ຈຳນວນ 45.61% ເຫັນວ່າການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບໃດຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາຫຼາຍ, ຈຳນວນ 26.32% ເຫັນວ່າ

ເປັນບັນຫາຫຼາຍທີ່ສຸດ, ຈຳນວນ 14.04% ເຫັນວ່າເປັນບັນຫາປານກາງ, ຈຳນວນ 8.07% ເຫັນວ່າເປັນບັນຫາໜ້ອຍ ແລະ ຈຳນວນ 5.26% ເຫັນວ່າເປັນບັນຫາໜ້ອຍທີ່ສຸດ.

ຕາຕະລາງທີ 29 ທ່ານຄິດວ່າ ການທີ່ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ຫາກບໍ່ຈຳເປັນ ຈະເປັນບັນຫາຕໍ່ການດຳເນີນຄະດີລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 11 | 19.30 |
| ຫຼາຍ | 11 | 19.30 |
| ປານກາງ | 18 | 31.58 |
| ໜ້ອຍ | 12 | 21.05 |
| ໜ້ອຍທີ່ສຸດ | 5 | 8.77 |
| ລວມ | 57 | 100 |

ຈາກຕາຕະລາງທີ 29, ຜູ້ຕອບແບບສອບຖາມ ຈຳນວນ 31.58% ເຫັນວ່າ ການທີ່ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ຫາກບໍ່ຈຳເປັນ ຈະເປັນບັນຫາຕໍ່ການດຳເນີນຄະດີລະດັບປານກາງ, ຈຳນວນ 21.05% ເຫັນວ່າມີບັນຫາໜ້ອຍ, ຈຳນວນ 19.3% ເຫັນວ່າມີບັນຫາຫຼາຍ ແລະ ຫຼາຍທີ່ສຸດ ແລະ ຈຳນວນ 8.77% ເຫັນວ່າເປັນບັນຫາໜ້ອຍທີ່ສຸດ.

ຕາຕະລາງທີ 30 ໃນເວລາພິຈາລະນາຄະດີເປັນຂັ້ນລົບລ້າງ ຫາກຄູ່ຄວາມຝ່າຍໃດໜຶ່ງບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ແຕ່ໃນເວລາຂອງການດຳເນີນຄະດີ ພັດໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບ

| ລະດັບຄວາມຄິດເຫັນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ຫຼາຍທີ່ສຸດ | 13 | 22.81 |
| ຫຼາຍ | 13 | 22.81 |
| ປານກາງ | 19 | 33.33 |
| ໜ້ອຍ | 10 | 17.54 |
| ໜ້ອຍທີ່ສຸດ | 2 | 3.51 |
| ລວມ | 57 | 100 |

ຈາກຕາຕະລາງທີ 30, ຜູ້ຕອບແບບສອບຖາມ ຈຳນວນ 33.33% ເຫັນວ່າ ໃນເວລາພິຈາລະນາຄະດີເປັນຂັ້ນລົບລ້າງ ຫາກຄູ່ຄວາມຝ່າຍໃດໜຶ່ງບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ແຕ່ໃນເວລາຂອງການດຳເນີນຄະດີ ພັດໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບປານກາງ, ຈຳນວນ 22.81% ເຫັນວ່າເປັນບັນຫາລະດັບຫຼາຍ ແລະ ຫຼາຍທີ່ສຸດ, ຈຳນວນ 17.54% ເຫັນວ່າເປັນບັນຫາໜ້ອຍ ແລະ ຈຳນວນ 3.51% ເຫັນວ່າເປັນບັນຫາໜ້ອຍທີ່ສຸດ.

ຈາກຕາຕະລາງ 24-30, ສາມາດສະຫຼຸບບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ໄດ້ຄື: ຜູ້ຕອບແບບສອບຖາມ ຈຳນວນ 45.61% ເຫັນວ່າການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາຫຼາຍ ຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາ, ຈຳນວນ 43.86% ເຫັນວ່າ ຜ່ານມາບັນຫາການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບຫຼາຍທີ່ສຸດ, ຈຳນວນ 42.11% ເຫັນວ່າຫາກຄູ່ຄວາມມີການຂໍລົບລ້າງເນື້ອຄະດີ ຕໍ່ສານປະຊາຊົນພາກກາງ ຈະພາໃຫ້ມີບັນຫາລະດັບຫຼາຍ, ຈຳນວນ 35.09% ເຫັນວ່າການທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດ ຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງ ຢູ່ໃນລະດັບຫຼາຍທີ່ສຸດ, ຈຳນວນ 33.33% ເຫັນວ່າ ການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ເປັນບັນຫາໃນລະດັບຫຼາຍ, ຈຳນວນ 33.33% ເຫັນວ່າ ໃນເວລາພິຈາລະນາຄະດີເປັນຂັ້ນລົບລ້າງ ຫາກຄູ່ຄວາມຝ່າຍໃດໜຶ່ງບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ແຕ່ໃນເວລາຂອງການດຳເນີນຄະດີ ພັດໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບປານກາງ, ຈຳນວນ 31.58% ເຫັນວ່າ ການທີ່ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ຫາກບໍ່ຈຳເປັນ ຈະເປັນບັນຫາຕໍ່ການດຳເນີນຄະດີລະດັບປານກາງ.

### 1.3 ຜົນການສຳພາດ

ການສຶກສາວິທະຍານິພົນນີ້ ນອກຈາກໄດ້ເກັບກຳຂໍ້ມູນດ້ວຍແບບສອບຖາມທີ່ເປັນຄຳຖາມໃນລັກສະນະປາຍປິດແລ້ວ, ຜູ້ສຶກສາຍັງໄດ້ເກັບກຳຂໍ້ມູນດ້ວຍຄຳຖາມສຳພາດ ທີ່ເປັນຄຳຖາມລັກສະນະປາຍເປີດ ເພື່ອໃຫ້ຜູ້ໃຫ້ຂໍ້ມູນໄດ້ສະແດງທັດສະນະຂອງຕົນເອງ ຕໍ່ກັບການ

ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກກາງ ຊຶ່ງບັນດາຄຳຕອບທີ່ໄດ້ຈາກການສຳພາດ ສາມາດສັງລວມເປັນໝວດຄຳເຫັນໄດ້ຄື:

ທ່ານ ອິກ ເພັງສະໝຸດ ຜູ້ພິພາກສາຄະນະສານແພ່ງ ສານປະຊາຊົນພາກກາງ ໃຫ້ສຳພາດຄັ້ງວັນທີ 12 ມິຖຸນາ 2017 ໂດຍມີທັດສະນະວ່າຂັ້ນຕອນການຮັບເອົາຄະດີມາພິຈາລະນາເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ປະກອບດ້ວຍ ສາມຂັ້ນຕອນ, ອັນໄດ້ແກ່ຂັ້ນຕອນການຮັບເອົາຄະດີມາພິຈາລະນາ, ຂັ້ນຕອນການຄົ້ນຄວ້າຄະດີ ແລະ ຂັ້ນຕອນການສົ່ງສຳນວນຄະດີໄປໃຫ້ອົງການໄອຍະການປະຊາຊົນ ດຳເນີນການກວດກາ. ໃນນັ້ນຂັ້ນຕອນຂອງການຮັບເອົາຄະດີມາພິຈາລະນານັ້ນ ຕ້ອງເນັ້ນໃສ່ກວດກາໄລຍະເວລາຂອງການຂໍລົບລ້າງ ເປັນຕົ້ນວ່າ ການຂໍລົບລ້າງດັ່ງກ່າວ ຢູ່ໃນໄລຍະ ສາມສິບວັນ ຕາມທີ່ກົດໝາຍກຳນົດ ຫຼື ບໍ່ ຫຼື ກວດເບິ່ງວ່າ ການຂໍລົບລ້າງດັ່ງກ່າວ ຕົກຢູ່ໃນເງື່ອນໄຂໃດໜຶ່ງຂອງການບໍ່ອະນຸຍາດໃຫ້ລົບລ້າງ ຫຼື ບໍ່ ຊຶ່ງເງື່ອນໄຂຂອງການບໍ່ອະນຸຍາດໃຫ້ລົບລ້າງ ປະກອບດ້ວຍຄຳພິພາກສາ ຂັ້ນອຸທອນ ທີ່ຢັ້ງຢືນເອົາຕາມຄຳຕັດສິນ ຂອງສານຂັ້ນຕົ້ນ ໃນກໍ ລະນີທີ່ຈຳເລີຍຮັບຮູ້ ຕາມການຮ້ອງຟ້ອງຂອງໂຈດ, ຄະດີ ກ່ຽວກັບກຳມະສິດສັດ, ຄະດີ ກ່ຽວກັບການຂໍອະນຸຍາດໃຫ້ມີທາງຜ່ານ, ຄະດີ ທີ່ມີມູນຄ່າບໍ່ເກີນ 20.000.000 ກີບ, ຄຳພິພາກສາຂັ້ນອຸທອນ ທີ່ສົ່ງໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່, ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ຈອງຂໍອຸທອນ ແຕ່ບໍ່ຍື່ນຄຳຮ້ອງຂໍອຸທອນ, ຄຳພິພາກສາຂອງສານຂັ້ນອຸທອນ ທີ່ຢັ້ງຢືນຕາມສານຂັ້ນຕົ້ນ ທີ່ຄູ່ຄວາມຂໍອຸທອນ ກາຍກຳນົດເວລາ ແລະ ບັນຫາທີ່ບໍ່ໄດ້ສະເໜີໃຫ້ສານຂັ້ນຕົ້ນ ແລະ ຂັ້ນອຸທອນ ພິຈາລະນາມາກ່ອນ.

ທ່ານ ນາງ ສົມພອນ ບຸດດີ ຜູ້ພິພາກສາຄະນະສານແພ່ງສານປະຊາຊົນພາກກາງໃຫ້ສຳພາດຄັ້ງວັນທີ 12 ມິຖຸນາ 2017 ໂດຍມີທັດສະນະວ່າ, ການຄົ້ນຄວ້າສຳນວນຄະດີ ສ່ວນຫຼາຍແລ້ວແມ່ນ ດຳເນີນການພາຍໃນຂອບເຂດໄລຍະເວລາທີ່ກົດໝາຍກຳນົດ ຄື ສາມເດືອນ ສ່ວນການຂໍຕໍ່ເວລາ ແມ່ນຍັງກວມເອົາຈຳນວນບໍ່ຫຼາຍຄະດີປານໃດ. ພາຍຫຼັງທີ່ ຜູ້ພິພາກສາຂອງສານປະຊາຊົນພາກ ໄດ້ທຳການຄົ້ນຄວ້າສຳນວນຄະດີແລ້ວ ກໍຈະສົ່ງສຳນວນຄະດີພ້ອມທັງບົດສະຫຼຸບດັ່ງກ່າວ ໃຫ້ອົງການໄອຍະການປະຊາຊົນພາກ ເພື່ອຕິດຕາມກວດກາຕາມພາລະບົດບາດ.

ທ່ານ ນາງ ບຸນມີ ຍັງໄພບູນ ໃຫ້ສຳພາດຄັ້ງວັນທີ 14 ມິຖຸນາ 2017 ໃນຖານະເປັນຜູ້ຮ້ອງຂໍລົບລ້າງຄະດີແພ່ງ ມີທັດສະນະວ່າ ສາເຫດຂອງການຂໍລົບລ້າງຄະດີແພ່ງ ຍັງປາກົດມີຫຼາຍສາເຫດ ແຕ່ສາເຫດຕົ້ນຕໍແມ່ນການປະຕິບັດກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ເປັນຕົ້ນ ຂາດການເຂົ້າຮ່ວມຂອງບຸກຄົນທີ່ກ່ຽວຂ້ອງກັບຄະດີ, ການຕີຄວາມໝາຍຂອງເຫດການຂອງຄະດີ ຍັງບໍ່ທັນລະອຽດ ແລະ ຊັດເຈນ ອັນເປັນສາເຫດເຮັດໃຫ້ການນຳໃຊ້ມາດຕາ, ກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ ບໍ່ຖືກຕ້ອງ ແລະ ສອດຄ່ອງ ຈຶ່ງ

ເຮັດໃຫ້ຄູ່ຄວາມໃນຄະດີ ມີການຂໍລົບລ້າງ ເພື່ອຮ້ອງຂໍໃຫ້ສານປະຊາຊົນພາກມີການກຳນົດເຫດການຂອງຄະດີໃຫ້ມີຄວາມລະອຽດ ແລະ ຊັດເຈນ ລວມເຖິງການນຳໃຊ້ກົດໝາຍ ຫຼື ມາດຕາຂອງກົດໝາຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເຫດການຕົວຈິງຂອງຄະດີ.

ທ່ານ ນາງ ສຸວັນນີ ແກ້ວຄຳມ່ວນ ຜູ້ພິພາກສາຄະນະສານຄອບຄົວ ສານປະຊາຊົນພາກກາງ ໃຫ້ສຳພາດຄັ້ງວັນທີ 12 ມິຖຸນາ 2017 ໂດຍມີທັດສະນະວ່າ ຂອບເຂດຂອງການພິຈາລະນາການຂໍລົບລ້າງຄະດີແພ່ງ ເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກ ແມ່ນມີກົດໝາຍ ແລະ ລະບຽບການກຳນົດໄວ້ຢ່າງຊັດເຈນ ໝາຍຄວາມວ່າ ຄະດີແພ່ງ ແລະ ຄະດີຄອບຄົວທີ່ສານປະຊາຊົນເຂດຕ່າງໆໄດ້ຕັດສິນເປັນຂັ້ນຕົ້ນ ແລະ ສານປະຊາຊົນ ແຂວງ ຊຽງຂວາງ, ແຂວງ ວຽງຈັນ, ແຂວງ ບໍລິຄຳໄຊ, ແຂວງ ຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ໄດ້ພິພາກສາເປັນຂັ້ນອຸທອນ ສານປະຊາຊົນພາກກາງ ຈຶ່ງສາມາດນຳມາພິຈາລະນາເປັນຂັ້ນລົບລ້າງໄດ້. ຜູ້ໃຫ້ສຳພາດເຫັນວ່າ ຄະດີແພ່ງຂັ້ນລົບລ້າງ ສ່ວນຫຼາຍແມ່ນສັນຍາກູ້ຢືມ, ຄະດີຄອບຄົວ ແມ່ນຄະດີຢ່າຮ້າງ ແລະ ຄະດີແຮງງານ ແມ່ນການທວງເອົາເງິນອຸດໜູນ.

ທ່ານ ນາງ ສຸພາມາດ ແສນອາມາດມົນຕີ ຮອງປະທານຄະນະສານແພ່ງສານ ປະຊາຊົນພາກກາງ ໃຫ້ສຳພາດຄັ້ງວັນທີ 12 ມິຖຸນາ 2017 ໂດຍມີທັດສະນະວ່າ ບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ຍັງມີຫຼາຍພໍສົມຄວນ ເປັນຕົ້ນວ່າ ການຂໍລົບລ້າງໂດຍຄູ່ຄວາມ ສ່ວນຫຼາຍຍັງແມ່ນບັນຫາທີ່ກ່ຽວຂ້ອງກັບເນື້ອຫາຂອງຄະດີ ຫຼື ຍັງບໍ່ແມ່ນບັນຫາທາງດ້ານກົດໝາຍ. ການຂໍລົບລ້າງບາງຄັ້ງກໍບໍ່ໄດ້ມີການຂໍໃຫ້ສານຂັ້ນລົບລ້າງ ພິຈາລະນາບັນຫາໃໝ່ ພຽງແຕ່ເປັນການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ແກ່ຍາວເວລາໃນການໃຊ້ແທນໜີ້ສິນ, ບໍ່ຢາກອອກຈາກທີ່ດິນ ຫຼື ບັນຫາອື່ນໆ. ພ້ອມດຽວກັນນັ້ນ, ການຂໍລົບລ້າງ ກໍຍັງແມ່ນບັນຫາເດີມ ທີ່ຄູ່ຄວາມໃນຄະດີກ່າວອ້າງໃນຂັ້ນຕອນຂອງການຂໍອຸທອນ ໝາຍຄວາມວ່າ ບໍ່ໄດ້ນຳເອົາບັນຫາທາງດ້ານກົດໝາຍອັນໃໝ່ ມາຂໍໃຫ້ສານຂັ້ນລົບລ້າງພິຈາລະນາແຕ່ປະການໃດ. ນອກຈາກນັ້ນ, ສາເຫດຂອງການຂໍລົບລ້າງ ຍັງມາຈາກການທີ່ຄູ່ຄວາມ ຫຼື ຜູ້ກ່ຽວຂ້ອງໃນຄະດີ ບໍ່ພໍໃຈຕໍ່ຄຳຕັດສິນຂອງສານຂັ້ນອຸທອນ ເພາະວ່າສານປະຊາຊົນຂັ້ນອຸທອນ ບໍ່ວິນິດໄສ ຫຼື ກ່າວເຖິງຂໍ້ອ້າງທີ່ພວກກ່ຽວນຳມາໃຫ້ສານປະຊາຊົນພິຈາລະນາ ອາດເປັນເພາະວ່າບໍ່ແມ່ນປະເດັນ ຫຼື ບໍ່ສາມາດເປັນພະຍານ ແລະ ຫຼັກຖານໄດ້ ຈຶ່ງຄິດວ່າສານຂັ້ນລົບລ້າງຄົງພິຈາລະນາບັນຫາດັ່ງກ່າວໃຫ້ຕົນ ແລະ ໄດ້ຂໍຈອງລົບລ້າງເອົາໄວ້. ໃນບາງຄະດີ ໂຈດ ຫຼື ຈຳເລີຍ ມີການຈອງຂໍລົບລ້າງຄະດີ ແຕ່ບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ມາຍື່ນຕໍ່ສານປະຊາຊົນພາກກາງ ຕາມໄລຍະເວລາທີ່ກົດໝາຍ ກຳນົດໄວ້ ໝາຍຄວາມວ່າ ໃບຈອງລົບລ້າງຄະດີແມ່ນດຳເນີນການຖືກຕ້ອງຕາມກົດໝາຍ ແຕ່ວ່າ ບໍ່ຂຽນຄຳຮ້ອງມາຍື່ນ ເພື່ອສະແດງໃຫ້ສານເຫັນວ່າ ຕ້ອງການໃຫ້ສານຂັ້ນລົບລ້າງ ພິຈາລະນາບັນຫາຫຍັງໃຫ້ຕົນເອງ. ນອກຈາກນັ້ນ,

ບາງຄັ້ງ ຄູ່ຄວາມຝ່າຍໃດໜຶ່ງ ມີການຮ້ອງຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ແຕ່ຄູ່ຄວາມຝ່າຍທີ່ບໍ່ໄດ້ຂຽນຄໍາຮ້ອງຂໍລົບລ້າງ ຊໍ້າພັດມີການຮ້ອງຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນ ໃນເວລາດໍາເນີນຄະດີ ຊຶ່ງບັນຫາດັ່ງກ່າວ ກໍຍັງປະກົດໃຫ້ເຫັນ ແລະ ເມື່ອສານບໍ່ສາມາດພິຈາລະນາຕາມການຮ້ອງຂໍໄດ້ ກໍມີການຕໍ່ວ່າຕໍ່ຂານ ຫຼື ວິພາກວິຈານໄປຕ່າງໆນາໆ. ພ້ອມດຽວກັນນັ້ນ, ບາງຄະດີ ຄູ່ຄວາມ ທີ່ຖືກເຊີນມາໃຫ້ການ ຍັງມີການຕໍ່ວ່າຕໍ່ຂານ ຫຼື ໃຊ້ທ່າທາງ ແລະຄໍາເວົ້າອັນບໍ່ສຸພາບຕໍ່ຜູ້ພິພາກສາ ຊຶ່ງສະແດງອອກດ້ວຍການໃຊ້ວາຈາທີ່ວ່າ ບໍ່ເຄົາລົບກົດໝາຍ ເພາະກົດໝາຍກໍານົດວ່າ ຢູ່ໃນຂັ້ນຕອນຂອງການພິຈາລະນາເປັນຂັ້ນລົບລ້າງ ແມ່ນມີແຕ່ຄົ້ນຄວ້າຕາມສໍານວນຄະດີເທົ່ານັ້ນ ບໍ່ໃຫ້ທໍາການໄຕ່ສວນຄູ່ຄວາມໃນຄະດີອີກ ຊຶ່ງເຫັນວ່າເປັນການເຂົ້າໃຈກົດໝາຍ ທີ່ກ່ຽວຂ້ອງບໍ່ທັນລະອຽດ ແລະ ເລິກເຊິ່ງ. ທີ່ສໍາຄັນການເພີ່ມຂຶ້ນຂອງຄະດີແພ່ງຂັ້ນລົບລ້າງ ກໍແມ່ນໜຶ່ງໃນສາເຫດ ແລະ ກາຍເປັນບັນຫາ ແລະສິ່ງທ້າທາຍບໍ່ໜ້ອຍຕໍ່ການພິຈາລະນາຄະດີເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ເພາະວ່າຈໍານວນຄະດີມີລັກສະນະເພີ່ມຂຶ້ນ ແຕ່ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ພະນັກງານວິຊາການກົດໝາຍຂອງສານ ຍັງເທົ່າເດີມ ການຄົ້ນຄວ້າສໍານວນຄະດີ ກໍອາດຈະບໍ່ລະອຽດ, ຖີ່ຖ້ວນ ຫຼື ເຮັດໄດ້ດີເທົ່າທີ່ຄວນ ເພາະວ່າສານປະຊາຊົນພາກກາງ ນອກຈາກພິຈາລະນາເປັນຂັ້ນລົບລ້າງແລ້ວ ຍັງພິຈາລະນາຄະດີເປັນຂັ້ນອຸທອນອີກດ້ວຍ ແລະ ສໍາຄັນທີ່ສຸດ ຄໍາພິພາກສາຂັ້ນລົບລ້າງ ແມ່ນຂັ້ນສຸດທ້າຍທາງດ້ານກົດໝາຍ ຈຶ່ງຖືວ່າເປັນບັນທັດຖານ ຫຼື ປະເພນີສານ ທີ່ສານຂັ້ນລຸ່ມຈະຕ້ອງປະຕິບັດຕາມ. ດ້ວຍເຫດນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ສານປະຊາຊົນພາກ ເພີ່ມຄວາມຮັບຜິດຊອບ ໜ້າທີ່ການເມືອງຂອງຕົນເອງໃຫ້ສູງຂຶ້ນ, ພິຈາລະນາຄະດີໃຫ້ວ່ອງໄວ ແຕ່ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງ ແລະ ຍຸຕິທໍາ ເພື່ອຮັບປະກັນໄດ້ຄວາມສະຫງົບສຸກຂອງສັງຄົມ.

ທ່ານ ທະນົງສັກ ລາດສະພົນ ຜູ້ພິພາກສາ ຮອງປະທານສານປະຊາຊົນພາກກາງໃຫ້ສໍາພາດຄັ້ງວັນທີ 15 ມິຖຸນາ 2017 ໂດຍມີທັດສະນະວ່າ ວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການດໍາເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກ ທີ່ມີປະສິດທິພາບ ມີຫຼາຍຢ່າງ ເປັນຕົ້ນວ່າ ສານຂັ້ນອຸທອນ ຕ້ອງແນະນໍາຢ່າງລະອຽດໃນກໍລະນີທີ່ມີການຈອງລົບລ້າງ ໝາຍຄວາວ່າ ຖ້າຈອງແລ້ວລົບລ້າງແລ້ວ ກໍຕ້ອງມີການຂຽນຄໍາຮ້ອງຂໍລົບລ້າງພາຍໃນກໍານົດເວລາທີ່ກົດໝາຍວາງອອກ. ພ້ອມດຽວກັນນັ້ນ, ການຂໍລົບລ້າງ ຕ້ອງນໍາເອົາບັນຫາໃໝ່ ທີ່ສານຂັ້ນຕົ້ນ ຫຼື ຂັ້ນອຸທອນ ບໍ່ທັນໄດ້ພິຈາລະນາ ມາໃຫ້ສານປະຊາຊົນຂັ້ນລົບລ້າງພິຈາລະນາ. ການຂໍລົບລ້າງ ແຕ່ບໍ່ໄດ້ນໍາບັນຫາໃໝ່ ມາໃຫ້ສານຂັ້ນລົບລ້າງພິຈາລະນາ ຈະຖືວ່າເປັນການກະທໍາຜິດທາງອາຍາ ຫຼື ບໍ່ ເພາະວ່າຜູ້ຂໍລົບລ້າງຮູ້ດີວ່າ ບໍ່ມີເຫດການໃໝ່ໃນຄະດີ ຫຼື ບັນຫາທາງດ້ານກົດໝາຍ ເພື່ອໃຫ້ສານຂັ້ນລົບລ້າງພິຈາລະນາແຕ່ປະການໃດແຕ່ການຂໍລົບລ້າງ ເປັນພຽງການຍືດເວລາ ເພື່ອບໍ່ໃຫ້ມີການຈັດຕັ້ງປະຕິບັດຄໍາຕັດສິນຂອງ

ສານ ຊຶ່ງຈະຖືວ່າເປັນການບໍ່ປະຕິບັດຕາມຄຳຕັດສິນຂອງສານ ຫຼື ບໍ່. ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ພະນັກງານວິຊາການກົດໝາຍຂອງສານປະຊາຊົນພາກກາງ ຄວນເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງຕົນໃຫ້ສູງຂຶ້ນກວ່າເດີມ ເພາະວ່າເປັນສານພາກທີ່ມີຈຳນວນຄະດີຂໍລົບລ້າງນັບມື້ຫຼາຍຂຶ້ນ. ນອກຈາກນັ້ນ, ຜູ້ຂໍລົບລ້າງ ຕ້ອງສຶກສາຄຳຕັດສິນຂອງສານປະຊາຊົນຂັ້ນອຸທອນຢ່າງລະອຽດ ແລະ ຖີ່ຖ້ວນ ເພື່ອໃຫ້ແນ່ໃຈວ່າຄະດີທີ່ຂໍລົບລ້າງນັ້ນ ມີບັນຫາໃໝ່ ທີ່ພຽບພ້ອມດ້ວຍພະຍານ, ຫຼັກຖານ ແລະ ປະເດັນທາງກົດໝາຍຢ່າງພຽງພໍ.

## 2. ວິເຄາະຜົນການສຶກສາ

ຈາກຜົນຂອງການສຶກສາ ສາມາດວິເຄາະໃສ່ກັບບັນດາທິດສະດີ, ຫຼັກການ ແລະ ການໃຫ້ສຳພາດຂອງຜູ້ພິພາກສາອາວຸໂສ ໄດ້ດັ່ງນີ້: ຜູ້ຕອບແບບສອບຖາມ ຈຳນວນ 54.39% ເຫັນວ່າ ການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງ ເພື່ອໃຫ້ພິຈາລະນາບັນຫາທາງດ້ານອື່ນ ຊຶ່ງເມື່ອພິຈາລະນາໃສ່ບັນດາຄຳຕັດສິນຂອງສານຂັ້ນລົບລ້າງແລ້ວ ຈະເຫັນວ່າ ການຮ້ອງຂໍລົບລ້າງສ່ວນຫຼາຍ ບໍ່ແມ່ນບັນຫາໃໝ່ ແຕ່ເປັນບັນຫາເດີມທີ່ບໍ່ໄດ້ຮັບການພິຈາລະນາຈາກສານປະຊາຊົນຂັ້ນອຸທອນ ເຊັ່ນ ຄຳຕັດສິນທີ່ບໍ່ສາມາດພິຈາລະນາການຮ້ອງຂໍຂອງທ້າວ ວິລະ (ນາມສົມມຸດ) ທີ່ຂໍໃຫ້ພິສູດລາຍເຊັນຂອງບຸກຄົນທີສາມ ຊຶ່ງບັນຫາດັ່ງກ່າວສານປະຊາຊົນເຂດ 1 ແລະ ສານປະຊາຊົນ ນະຄອນຫຼວງວຽງຈັນ ກໍໄດ້ວິດໄສຢ່າງລະອຽດແລ້ວ ແລະ ການນຳໃຊ້ກົດໝາຍຕໍ່ເຫດການຂອງຄະດີກໍມີຄວາມລະອຽດ ແລະ ຖືກຕ້ອງກັບເຫດການແລ້ວ.[51] ຈຳນວນ 43.86% ເຫັນວ່າ ຄຳພິພາກສາຂອງສານປະຊາຊົນພາກກາງທີ່ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ ມີປານກາງ ຊຶ່ງໃນບົດລາຍງານຂອງປະທານສານປະຊາຊົນພາກກາງ ຕໍ່ກອງປະຊຸມປະຈຳປີ 2016 ແລະ ທິດທາງແຜນການ 2017 ຊີ້ໃຫ້ເຫັນວ່າ ຜ່ານມາການສານປະຊາຊົນພາກກາງ ໄດ້ພິຈາລະນາຢັ້ງຢືນເອົາຕາມຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນ ຈຳນວນ 44.14%.[52]

ຜູ້ຕອບແບບສອບຖາມຈຳນວນ 42.11% ເຫັນວ່າ ຜ່ານມາມີການຄົ້ນຄວ້າຄະດີບໍ່ສຳເລັດພາຍໃນ ສາມເດືອນ ແລະ ມີການຕໍ່ກຳນົດເວລາ ຊຶ່ງຜູ້ພິພາກສາຄະນະສານແພ່ງໃຫ້ທັດສະນະວ່າ ການຄົ້ນຄວ້າຄະດີບາງຄັ້ງ ກໍບໍ່ສຳເລັດຕາມກຳນົດເວລາທີ່ກົດໝາຍວາງອອກ

---

[51] ຄຳຕັດສິນຂັ້ນລົບລ້າງຂອງຄະນະສານແພ່ງ, ສານປະຊາຊົນພາກກາງ, ສະບັບເລກທີ 70/ລລ.ພ, ລົງວັນທີ 20 ທັນວາ 2016, ໜ້າ 7.

[52] ສານປະຊາຊົນພາກກາງ, ບົດສະຫຼຸບປະຈຳປີ 2016 ແລະ ທິດທາງ 2017, ສະບັບເລກທີ 01/ສປພກ. ລົງວັນທີ 30 ທັນວາ 2016, ໜ້າ 4.

ໝາຍຄວາມວ່າ ມີການຕໍ່ໄລຍະເວລາຂອງການຄົ້ນຄວ້າອອກໄປຕື່ມ ໂດຍສະເພາະແມ່ນຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ໂດຍສະເພາະແມ່ນເລື່ອງຂໍ້ຂັດແຍ່ງທີ່ດິນ ທີ່ຕິດພັນກັບມູນມໍຣະດົກ ຫຼື ສິນສົມສ້າງ ແລະ ອື່ນໆ.[53] ຈຳນວນ 40.35% ເຫັນວ່າ ຜ່ານມາມີຫຼາຍຄະດີປານໃດ ທີ່ຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນ ມີຫຼາຍ ເຊັ່ນວ່າ ການຂໍໃຫ້ສານຂັ້ນລົບລ້າງພິສູດຄວາມສຳພັນລະຫວ່າງເຫດ ແລະ ຜົນຂອງສັນຍາລະຫວ່າງໂຈດ ແລະ ຈຳເລີຍ ຊຶ່ງຜ່ານມາສານປະຊາຊົນຂັ້ນອຸທອນ ກໍໄດ້ພິຈາລະນາຢ່າງລະອຽດ ແລະ ຖືກຕ້ອງແລ້ວ ຈຶ່ງເປັນເຫດໃຫ້ສານປະຊາຊົນຂັ້ນລົບລ້າງບໍ່ສາມາດນຳມາພິຈາລະນາໃຫ້ໄດ້.[54] ຈຳນວນ 38.6% ເຫັນວ່າ ຜ່ານມາມີຫຼາຍຄະດີປານໃດ ທີ່ການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ໄດ້ຮ້ອງຂໍໃຫ້ມີການພິຈາລະນາກ່ຽວກັບການນຳໃຊ້ມາດຕາກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ ມີຫຼາຍ ເພາະຜູ້ຮ້ອງຂໍ ຍັງເຂົ້າໃຈວ່າສານປະຊາຊົນຂັ້ນຕົ້ນ ແລະ ຂັ້ນອຸທອນຍັງບໍ່ທັນໄດ້ພິຈາລະນາການນຳໃຊ້ມາດຕາກົດໝາຍຕໍ່ເນື້ອໃນ ແລະ ເຫດການຂອງຄະດີ ຍັງບໍ່ທັນຖືກຕ້ອງເທົ່າທີ່ຄວນ ຊຶ່ງຈາກການສຳພາດໂຈດທີ່ມາຮ້ອງຂໍຕໍ່ສານຂັ້ນລົບລ້າງ ເພາະວ່າຜູ້ກ່ຽວມີຂໍ້ຂັດແຍ່ງແຕ່ປີ 2016 ແຕ່ສານປະຊາຊົນຂັ້ນອຸທອນ ໄດ້ພິພາກສາໃຫ້ຜູ້ກ່ຽວເສຍຄ່າອາກອນລັດຕາມເວລາທີ່ສານອອກຄຳຕັດສິນ ຈຶ່ງບໍ່ຖືກຕ້ອງ ແລະ ໄດ້ຮ້ອງຂໍຕໍ່ສານຂັ້ນລົບລ້າງ ເພື່ອໃຫ້ຈ່າຍອາກອນລັດ ຕາມເວລາເກີດຂໍ້ຂັດແຍ່ງ ຄືປີ 2016[55] ແຕ່ໃນຄວາມເປັນຈິງແລ້ວການເສຍອາກອນລັດ ຕ້ອງປະຕິບັດໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານຈຶ່ງຖືວ່າຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ.

ຜູ້ຕອບແບບສອບຖາມຈຳນວນ 36.84% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີໜ້ອຍ ຊຶ່ງຜູ້ພິພາກສາຄະນະສານຄອບຄົວໃຫ້ທັດສະນະວ່າ ບາງຄະດີສານປະຊາຊົນຂັ້ນລົບລ້າງ ກໍສົ່ງສຳນວນຄະດີຄືນໄປຍັງສານປະຊາຊົນຂັ້ນອຸທອນ ເນື່ອງຈາກວ່າລະເມີດລະບຽບການດຳເນີນຄະດີເປັນຕົ້ນແມ່ນບໍ່ໄດ້ມີການເຂົ້າຮ່ວມຂອງເດັກ ທີ່ຈະຕ້ອງເລືອກໄປຢູ່ນຳພໍ່ ຫຼື ແມ່ ໃນເວລາໄຕ່ສວນຂັ້ນສຸດທ້າຍ ກ່ອນລົງຄຳຕັດສິນ.[56] ຈຳນວນ 35.09% ເຫັນວ່າ ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນ ມີຈຳນວນໜ້ອຍຄະດີຊຶ່ງສະແດງອອກຢູ່ບ່ອນວ່າ ການຮ້ອງຂໍລົບລ້າງມີປະລິມານໜ້ອຍ ແລະ ມີການນຳຄຳຕັດສິນ

---

[53] ສຳພາດຜູ້ພິພາກສາຄະນະສານແພ່ງ, ສານປະຊາຊົນພາກກາງ, ຄັ້ງວັນທີ 12 ມິຖຸນາ 2017.

[54] ຄຳຕັດສິນຂັ້ນລົບລ້າງຂອງຄະນະສານແພ່ງ, ສານປະຊາຊົນພາກກາງ, ສະບັບເລກທີ 34/ລລ.ພ, ລົງວັນທີ 28 ມິຖຸນາ 2016, ໜ້າ 3.

[55] ສຳພາດໂຈດໃນຄະດີການທວງເອົາເງິນຄືນ, ຄັ້ງວັນທີ 14 ມິຖຸນາ 2017, ທີ່ສານປະຊາຊົນພາກກາງ.

[56] ສຳພາດຜູ້ພິພາກສາຄະນະສານຄອບຄົວ, ສານປະຊາຊົນພາກກາງ, ຄັ້ງວັນທີ 12 ມິຖຸນາ 2017.

ໄປຈັດຕັ້ງປະຕິບັດ ກວມເອົາເຖິງ 81.08%.[57] ຈຳນວນ 31.58% ເຫັນວ່າ ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ມີໜ້ອຍ ຊຶ່ງຜູ້ພິພາກສາ ຮອງປະທານຄະນະສານແພ່ງ ສານປະຊາຊົນພາກກາງ ໃຫ້ທັດສະນະວ່າ ການສອບສວນ ແລະ ໄຕ່ສວນ ບາງຄະດີກໍມີຄວາມຈຳເປັນພາວະວິໄສ ເພື່ອໃຫ້ບັນຫາ ຫຼື ເຫດການຂອງຄະດີມີຄວາມຊັດເຈນ ແລະ ພາໃຫ້ມີການນຳໃຊ້ມາດຕາຂອງກົດໝາຍຢ່າງຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ ເພາະບາງຄັ້ງການນຳໃຊ້ມາດຕາຂອງກົດໝາຍ ກໍອາດຈະມີຄວາມບໍ່ຖືກຕ້ອງ ຫາກບໍ່ສາມາດກຳນົດເຫດການຂອງຄະດີ ໂດຍອາໄສການສອບສວນເປັນຕົ້ນຕໍ.[58]

ຜູ້ຕອບແບບສອບຖາມ ຈຳນວນ 45.61% ເຫັນວ່າການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບຫຼາຍຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາ ຊຶ່ງຮອງປະທານສານປະຊາຊົນພາກກາງໃຫ້ທັດສະນະວ່າ ປັດຈຸບັນການເພີ່ມຂຶ້ນຂອງຄະດີຕ່າງໆໃນຂັ້ນລົບລ້າງ ເປັນບັນຫາ ແລະ ສິ່ງທ້າທາຍຕໍ່ການພິຈາລະນາຄະດີຂອງສານປະຊາຊົນຂັ້ນລົບລ້າງ ເພາະວ່າສານຂັ້ນລົບລ້າງ ແມ່ນສານທີ່ຈະຕ້ອງປະຕິບັດໃຫ້ກາຍເປັນປະເພນີສານ ຫຼື ບັນທັດຖານທາງດ້ານກົດໝາຍ ແຕ່ສານປະຊາຊົນພາກກາງ ຊ້ຳພັດຕັດສີນເປັນທັງຂັ້ນອຸທອນ ແລະ ຂັ້ນລົບລ້າງ. ດ້ວຍເຫດນັ້ນ, ຈຶ່ງຍັງກາຍເປັນສິ່ງທ້າທາຍ ແລະ ບັນຫາບໍ່ໜ້ອຍໃນເງື່ອນໄຂທີ່ຈຳນວນຜູ້ພິພາກສາ ແລະ ຜູ້ຊ່ວຍຜູ້ພິພາກສາ ຍັງບໍ່ສອດຄ່ອງກັບສະພາບເງື່ອນໄຂຂອງໜ້າວຽກຕົວຈິງ.[59]

ຜູ້ຕອບແບບສອບຖາມຈຳນວນ 43.86% ເຫັນວ່າ ຜ່ານມາບັນຫາການຂໍລົບລ້າງເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສີນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບຫຼາຍທີ່ສຸດ ຊຶ່ງປະທານຄະນະສານແພ່ງ, ສານປະຊາຊົນພາກກາງໃຫ້ທັດສະນະວ່າ ການຂໍລົບລ້າງ ບາງຄັ້ງກໍບໍ່ໄດ້ມີການຂໍໃຫ້ສານຂັ້ນລົບລ້າງ ພິຈາລະນາບັນຫາໃໝ່ ພຽງແຕ່ເປັນການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສີນຂອງສານ ຫຼື ແກ່ຍາວເວລາໃນການໃຊ້ແທນໜີ້ສິນ, ບໍ່ຢາກອອກຈາກທີ່ດິນ ຫຼື ບັນຫາອື່ນໆ. ພ້ອມດຽວກັນນັ້ນ, ການຂໍລົບລ້າງ ກໍຍັງແມ່ນບັນຫາເດີມ ທີ່ຄູ່ຄວາມໃນຄະດີກ່າວອ້າງໃນຂັ້ນຕອນຂອງການຂໍອຸທອນ ໝາຍຄວາມວ່າ ບໍ່ໄດ້ນຳເອົາບັນຫາທາງດ້ານກົດໝາຍອັນໃໝ່ ມາຂໍໃຫ້ສານຂັ້ນລົບລ້າງພິຈາລະນາແຕ່ປະການໃດ.[60]ຈຳນວນ 33.33% ເຫັນວ່າ ໃນເວລາພິຈາ

---

[57] ບົດລາຍງານຂອງສານປະຊາຊົນສູງສຸດ ຕໍ່ກອງປະຊຸມໃຫຍ່ຄັ້ງທີ 3 ສະພາແຫ່ງຊາດຊຸດທີ 8 ຄັ້ງວັນທີ 18 ເມສາ ຫາ 22 ພຶດສະພາ 2017, ໜ້າ 2.

[58] ສຳພາດຜູ້ພິພາກສາ, ຮອງປະທານຄະນະສານແພ່ງ, ສານປະຊາຊົນພາກກາງ, ຄັ້ງວັນທີ 12 ມິຖຸນາ 2017.

[59] ສຳພາດຜູ້ພິພາກສາ, ຮອງປະທານສານປະຊາຊົນພາກກາງ, ຄັ້ງວັນທີ 15 ມິຖຸນາ 2017.

[60] ສຳພາດຜູ້ພິພາກສາ, ປະທານຄະນະສານແພ່ງ, ສານປະຊາຊົນພາກກາງ, ຄັ້ງວັນທີ 15 ມິຖຸນາ 2017.

ລະນາຄະດີເປັນຂັ້ນລຶບລ້າງ ຫາກຄູ່ຄວາມຝ່າຍໃດໜຶ່ງບໍ່ໄດ້ຂຽນຄຳຮ້ອງຂໍລຶບລ້າງ ແຕ່ໃນເວລາຂອງການດຳເນີນຄະດີ ພັດໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບປານກາງ ຊຶ່ງໃນບາງຄະດີ ໂຈດ ຫຼື ຈຳເລີຍ ມີການຈອງຂໍລຶບລ້າງຄະດີ ແຕ່ບໍ່ໄດ້ຂຽນຄຳຮ້ອງຂໍລຶບລ້າງ ມາຍື່ນຕໍ່ສານປະຊາຊົນພາກກາງ ຕາມໄລຍະເວລາທີ່ກົດໝາຍ ກຳນົດໄວ້ ໝາຍຄວາມວ່າ ໃບຈອງລຶບລ້າງຄະດີ ແມ່ນດຳເນີນການຖືກຕ້ອງຕາມກົດໝາຍ ແຕ່ວ່າ ບໍ່ຂຽນຄຳຮ້ອງມາຍື່ນ ເພື່ອສະແດງໃຫ້ສານເຫັນວ່າຕ້ອງການໃຫ້ສານຂັ້ນລຶບລ້າງ ພິຈາລະນາບັນຫາຫຍັງໃຫ້ຕົນເອງ. ນອກຈາກນັ້ນ, ບາງຄັ້ງຄູ່ຄວາມຝ່າຍໃດໜຶ່ງ ມີການຮ້ອງຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ແຕ່ຄູ່ຄວາມຝ່າຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍລຶບລ້າງ ຊ້ຳພັດມີການຮ້ອງຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນໃນເວລາດຳເນີນຄະດີ ຊຶ່ງບັນຫາດັ່ງກ່າວ ກໍຍັງປະກົດໃຫ້ເຫັນ ແລະ ເມື່ອສານບໍ່ສາມາດພິຈາລະນາຕາມການຮ້ອງຂໍໄດ້ ກໍມີການຕໍ່ວ່າຕໍ່ຂານ ຫຼື ວິພາກວິຈານໄປຕ່າງໆນາໆ.[61]

ຈາກຜົນຂອງການສຶກສາຂ້າງເທິງ ເຫັນວ່າການສຶກສານີ້ ສອດຄ່ອງກັບການສຶກສາຂອງບົວລະວັນ ເທບພະວົງ ທີ່ວ່າການພິຈາລະນາເປັນຂັ້ນລຶບລ້າງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີທີ່ສານປະຊາຊົນແຂວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລຶບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ ໂດຍສ່ວນຫຼາຍ 51.45% ໃຫ້ທັດສະນະວ່າປະຕິບັດໄດ້ຫຼາຍທີ່ສຸດ[62] ແລະ ຜົນການສຶກສານີ້ ກໍສະແດງໃຫ້ເຫັນເຖິງ 43.86% ຂອງຜູ້ຕອບແບບສອບຖາມທີ່ເຫັນວ່າ ການພິຈາລະນາເປັນຂັ້ນລຶບລ້າງປະຕິບັດໄດ້ລະດັບດີ.

---

[61] ສຳພາດຜູ້ພິພາກສາ, ປະທານຄະນະສານຄອບຄົວ, ສານປະຊາຊົນພາກກາງ, ຄັ້ງວັນທີ 15 ມິຖຸນາ 2017.

[62] ບົວລະວັນ ເທບພະວົງ, ບັນຫາການດຳເນີນຄະດີຢູ່ສານປະຊາຊົນພາກເໜືອ, ວິທະຍານິພົນປະລິນຍາໂທ, ຫຼັກສູດປະລິນຍາໂທນິຕິສາດ, ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015, ໜ້າ 55.

# ພາກທີ V
# ສະຫຼຸບ ແລະ ຂໍ້ສະເໜີ

## 1. ສະຫຼຸບ

ຈາກຜົນຂອງການສຶກສາ ສາມາດສະຫຼຸບຕາມຈຸດປະສົງໄດ້ວ່າຂັ້ນຕອນຂອງການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກ ແມ່ນປະກອບດ້ວຍຂັ້ນຕອນການຮັບສຳນວນຄະດີມາພິຈາລະນາ, ຂັ້ນຕອນການຄົ້ນຄວ້າສຳນວນຄະດີ ແລະ ຂັ້ນຕອນການສົ່ງສຳນວນຄະດີໃຫ້ອົງການໄອຍະການປະຊາຊົນພາກ ດຳເນີນການຄົ້ນຄວ້າ ແລະ ຕິດຕາມກວດກາຕາມພາລະບົດບາດ. ສາເຫດ ຂອງການຂໍລົບລ້າງ ປະກອບມີຫຼາຍສາເຫດ ເຊັ່ນຜ່ານມາມີຫຼາຍຄະດີ ທີ່ຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນ, ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີໜ້ອຍ, ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນ ມີຈຳນວນໜ້ອຍຄະດີ, ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ ມີປານກາງ, ຜ່ານມາ ມີຫຼາຍຄະດີປານໃດ ທີ່ບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ແລະ ສານຂັ້ນລົບລ້າງຈະພິຈາລະນາ ໃຫ້ບໍ່ໄດ້ມີຫຼາຍ.

ຂອບເຂດ ຂອງການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກແມ່ນປະກອບດ້ວຍການພິຈາລະນາຄະດີແພ່ງ, ຄະດີຄອບຄົວ ແລະ ຄະດີແຮງງານ ທີ່ສານປະຊາຊົນເຂດຕ່າງໆໄດ້ຕັດສິນເປັນຂັ້ນຕົ້ນ ແລະ ສານປະຊາຊົນ ແຂວງ ຊຽງຂວາງ, ແຂວງ ວຽງຈັນ, ແຂວງ ບໍລິຄຳໄຊ, ແຂວງ ຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ໄດ້ພິພາກສາເປັນຂັ້ນອຸທອນ ສານປະຊາຊົນພາກກາງ ຈຶ່ງສາມາດນຳມາພິຈາລະນາເປັນຂັ້ນລົບລ້າງໄດ້.

ບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ຍັງມີຢູ່ຫຼາຍບັນຫາ ເຊັ່ນການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບຫຼາຍຕໍ່ການດຳເນີນຄະດີ ໃຫ້ທັນກັບໄລຍະເວລາ, ຜ່ານມາບັນຫາການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບຫຼາຍທີ່ສຸດ, ຫາກຄູ່ຄວາມມີການຂໍລົບລ້າງເນື້ອຄະດີ ຕໍ່ສານປະຊາຊົນພາກກາງ ຈະ

ພາໃຫ້ມີບັນຫາລະດັບຫຼາຍ, ການທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດ ຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງ ຢູ່ໃນລະດັບຫຼາຍທີ່ສຸດ, ການທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ເປັນບັນຫາໃນລະດັບຫຼາຍ, ໃນເວລາພິຈາລະນາຄະດີເປັນຂັ້ນລົບລ້າງ ຫາກຄູ່ຄວາມຝ່າຍໃດໜຶ່ງບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ແຕ່ໃນເວລາຂອງການດຳເນີນຄະດີພັດໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ໃຫ້ຕົນເອງ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບປານກາງ, ເຫັນວ່າ ການທີ່ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ຫາກບໍ່ຈຳເປັນຈະເປັນບັນຫາຕໍ່ການດຳເນີນຄະດີລະດັບປານກາງ.

ນອກຈາກນັ້ນ, ຜູ້ໃຫ້ສຳພາດ ໃຫ້ທັດສະນະວ່າ ການຂໍລົບລ້າງໂດຍຄູ່ຄວາມ ສ່ວນຫຼາຍຍັງແມ່ນບັນຫາທີ່ກ່ຽວຂ້ອງກັບເນື້ອຫາຂອງຄະດີ ຫຼື ຍັງບໍ່ແມ່ນບັນຫາທາງດ້ານກົດໝາຍ. ການຂໍລົບລ້າງ ບາງຄັ້ງກໍບໍ່ໄດ້ມີການຂໍໃຫ້ສານຂັ້ນລົບລ້າງ ພິຈາລະນາບັນຫາໃໝ່ ພຽງແຕ່ເປັນການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ແກ່ຍາວເວລາໃນການໃຊ້ແທນໜີ້ສິນ, ບໍ່ຢາກອອກຈາກທີ່ດິນ ຫຼື ບັນຫາອື່ນໆ. ພ້ອມດຽວກັນນັ້ນການຂໍລົບລ້າງ ກໍຍັງແມ່ນບັນຫາເດີມ ທີ່ຄູ່ຄວາມໃນຄະດີກ່າວອ້າງໃນຂັ້ນຕອນຂອງການຂໍອຸທອນ ໝາຍຄວາມວ່າ ບໍ່ໄດ້ນຳເອົາບັນຫາທາງດ້ານກົດໝາຍອັນໃໝ່ ມາຂໍໃຫ້ສານຂັ້ນລົບລ້າງພິຈາລະນາແຕ່ປະການໃດ.

ຈາກການສະຫຼຸບມາຂ້າງເທິງນັ້ນ, ສາມາດເວົ້າໄດ້ວ່າສົມມຸດຕິຖານທີ່ຕັ້ງເອົາໄວ້ວ່າການພິຈາລະນາຄະດີແພ່ງຂັ້ນລົບລ້າງຂອງສານປະຊາຊົນພາກກາງ ສ່ວນຫຼາຍແມ່ນເນື້ອຄະດີຫຼາຍກວ່າບັນຫາທາງກົດໝາຍ ມີຄວາມເປັນຈິງໃນລະດັບຫຼາຍ ເພາະວ່າຜູ້ຕອບແບບສອບຖາມ ຈຳນວນ 54.39% ເຫັນວ່າ ການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງ ເພື່ອໃຫ້ພິຈາລະນາບັນຫາທາງດ້ານອື່ນ ຊຶ່ງສ່ວນຫຼາຍແມ່ນບັນຫາທາງດ້ານເນື້ອຄະດີ ຫຼື ເຫດການຂອງຄະດີ ແລະ ຈຳນວນ 40.35% ເຫັນວ່າ ຜ່ານມາການຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງ ຕີຄວາມໝາຍຂອງເຫດການໃນຄະດີຄືນ ມີຫຼາຍ.

## 2. ຂໍ້ສະເໜີ

ເພື່ອເຮັດໃຫ້ການພິຈາລະນາຄະດີແພ່ງຂອງສານປະຊາຊົນພາກກາງ ມີປະສິດທິພາບ ຈຶ່ງສະເໜີວ່າ:

- ສານຂັ້ນອຸທອນ ຕ້ອງແນະນຳຢ່າງລະອຽດໃນກໍລະນີທີ່ມີການຈອງລົບລ້າງ ໝາຍຄວາວ່າ ຖ້າຈອງແລ້ວ ກໍຕ້ອງມີການຂຽນຄຳຮ້ອງຂໍລົບລ້າງພາຍໃນກຳນົດເວລາທີ່ກົດໝາຍວາງອອກ,

- ຜູ້ຂໍລົບລ້າງ ຕ້ອງສຶກສາຄຳພິພາກສາຂອງສານຂັ້ນອຸທອນຢ່າງລະອຽດ ເພື່ອໃຫ້ເຫັນປະເດັນທາງດ້ານກົດໝາຍ ໃນການຂໍລົບລ້າງຕໍ່ສານ,

- ການພິຈາລະນາຄະດີເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ ຄວນໃຫ້ສຳເລັດພາຍໃນ ສາມເດືອນ ຕາມການກຳນົດຂອງກົດໝາຍ,

- ຜູ້ຂໍລົບລ້າງຄະດີມາຍັງສານປະຊາຊົນພາກກາງ ຕ້ອງນຳຂໍ້ມູນ ຫຼື ບັນຫາໃໝ່ ມາໃຫ້ສານຂັ້ນລົບລ້າງພິຈາລະນາ ຫາກບໍ່ນຳເອົາຂໍ້ມູນ ຫຼື ບັນຫາໃໝ່ມາໃຫ້ສານ ຄວນຖືວ່າເປັນການກະທຳຜິດທາງອາຍາ ເພາະເປັນການບໍ່ປະຕິບັດຄຳຕັດສິນຂອງສານ,

- ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ພະນັກງານວິຊາການກົດໝາຍຂອງສານປະຊາຊົນພາກກາງ ຄວນເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງຕົນໃຫ້ສູງຂຶ້ນກວ່າເດີມ ເພາະວ່າເປັນສານພາກທີ່ມີຈຳນວນຄະດີຂໍລົບລ້າງນັບມື້ຫຼາຍຂຶ້ນ.

# ເອກະສານອ້າງອີງ

ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ປີ 2016,

ລັດຖະທຳມະນູນແຫ່ງ ສປປ ລາວ (ສະບັບປັບປຸງ), ປີ 2015;

ກົດໝາຍວ່າດ້ວຍສານປະຊາຊົນ, (ສະບັບປັບປຸງ), ປີ 2009;

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, (ສະບັບປັບປຸງ), ປີ 2012;

ກົດໝາຍວ່າດ້ວຍຄອບຄົວ, (ສະບປັບປຸງ), ປີ 2008;

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, (ສະບັບປັບປຸງ), ປີ 2009,

ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ, (ສະບັບປັບປຸງ), ປີ 2008,

ກົດໝາຍວ່າດ້ວຍແຮງງານ, (ສະບັບປັບປຸງ), ປີ 2013,

ກົດໝາຍວ່າດ້ວຍທະບຽນຄອບຄົວ, (ສະບັບປັບປຸງ), ປີ 2009,

ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008,

ຄະນະປະຈຳສະພາແຫ່ງຊາດ, ມະຕິຕົກລົງວ່າດ້ວຍການປ່ຽນຊື່ສານອຸທອນ ມາເປັນສານປະຊາຊົນພາກ, ສະບັບເລກທີ 179/ຄປຈ, ລົງວັນທີ 5 ຕຸລາ 2009;

ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສ້າງຕັ້ງ ສານອຸທອນພາກກາງ, ສະບັບເລກທີ 32/ສພຊ, ລົງວັນທີ 5 ກໍລະກົດ 2005;

ຄະນະປະຈຳສະພາແຫ່ງຊາດ, ມະຕິຕົກລົງວ່າດ້ວຍລະບຽບລັດຖະກອນຕຸລາການ, ສະບັບເລກທີ 0132/ຄປຈ; ລົງວັນທີ 4 ທັນວາ 2013,

ສານປະຊາຊົນສູງສຸດ, ປຶ້ມ 30 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວ ຂອງສານປະຊາຊົນແຫ່ງ ສປປ ລາວ ປີ 1982-2012,

ບົດລາຍງານຂອງສານປະຊາຊົນສູງສຸດ ຕໍ່ກອງປະຊຸມໃຫຍ່ຄັ້ງທີ 3 ສະພາແຫ່ງຊາດຊຸດທີ 8 ຄັ້ງວັນທີ 18 ເມສາ ຫາ 22 ພຶດສະພາ 2017,

ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນຄວາມສະຫງົບ, ແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍ ຂອງ ສປປ ລາວ ແຕ່ນີ້ ຮອດປີ 2020, ປີ 2009,

ສານປະຊາຊົນພາກກາງ, ບົດສະຫຼຸບປະຈຳປີ 2016 ແລະ ທິດທາງ 2017, ສະບັບເລກທີ 01/ສປພກ. ລົງວັນທີ 30 ທັນວາ 2016;

ຄະນະສານແພ່ງ, ສານປະຊາຊົນພາກກາງ, ສັງລວມຄະດີແພ່ງຂັ້ນລົບລ້າງ ແຕ່ປີ 2011-2016, ປີ 2017,

ຄະນະສານແພ່ງຂັ້ນລົບລ້າງ, ສານປະຊາຊົນພາກກາງ, ຄຳຕັດສິນເລກທີ 70/ລລ.ພ, ລົງວັນ

ທີ 20 ທັນວາ 2016, ໜ້າ 8.
ຄະນະສານແພ່ງຂັ້ນລົບລ້າງ, ສານປະຊາຊົນພາກກາງ, ຄໍາຕັດສິນເລກທີ 34/ລລ.ພ, ລົງວັນທີ 28 ມິຖຸນາ 2016, ໜ້າ 3.
ຄະນະຄົ້ນຄວ້າກົດໝາຍດໍາເນີນຄະດີແພ່ງ, ປຶ້ມຄູ່ມືການດໍາເນີນຄະດີແພ່ງເປັນຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ, ປີ 2014,
ບົວລະວັນ ເທບພະວົງ, ບັນຫາການດໍາເນີນຄະດີຢູ່ສານປະຊາຊົນພາກເໜືອ, ວິທະຍານິພົນປະລິນຍາໂທ, ຫຼັກສູດປະລິນຍາໂທນິຕິສາດ ຂອງຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015,
ພາດຜູ້ພິພາກສາຄະນະສານແພ່ງ, ສານປະຊາຊົນພາກກາງ, ຄັ້ງວັນທີ 12 ມິຖຸນາ 2017.
ສໍາພາດໂຈດໃນຄະດີການທວງເອົາເງິນຄືນ, ຄັ້ງວັນທີ 14 ມິຖຸນາ 2017, ທີ່ສານປະຊາຊົນພາກກາງ;
ສໍາພາດຜູ້ພິພາກສາຄະນະສານຄອບຄົວ,ສານປະຊາຊົນພາກກາງ, ວັນທີ 12 ມິຖຸນາ 2017;
ສໍາພາດຜູ້ພິພາກສາ, ຮອງປະທານຄະນະສານແພ່ງ, ສານປະຊາຊົນພາກກາງ, ຄັ້ງວັນທີ 12 ມິຖຸນາ 2017;
ສໍາພາດຜູ້ພິພາກສາ, ຮອງປະທານສານປະຊາຊົນພາກກາງ, ຄັ້ງວັນທີ 15 ມິຖຸນາ 2017;
ສໍາພາດຜູ້ພິພາກສາ, ປະທານຄະນະສານແພ່ງ, ສານປະຊາຊົນພາກກາງ, ວັນທີ 15 ມິຖຸນາ 2017;
ສໍາພາດຜູ້ພິພາກສາ, ປະທານຄະນະສານຄອບຄົວ, ສານປະຊາຊົນພາກກາງ, ຄັ້ງວັນທີ 15 ມິຖຸນາ 2017.

# ເອກະສານຊ້ອນທ້າຍ

ແບບສອບຖາມ

ຄຳຖາມສຳພາດ

# ປະຫວັດຫຍໍ້ຜູ້ສຶກສາ



ຊື່ ແລະ ນາມສະກຸນ: ສິງເພັດ ວໍລະຈິດ

ເພດ: ຊາຍ

ວັນເດືອນປີເກີດ: 03 ມັງກອນ 1979

ທີ່ເກີດ ບ້ານ ທາດຫຼວງ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ

ປັດຈຸບັນຢູ່ບ້ານ ທາດຫຼວງ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ

**ປະຫວັດການເຄື່ອນໄຫວໂດຍຫຍໍ້**

| | |
|---|---|
| ແຕ່ປີ 1987 - ປີ 1992 | ຮຽນປະຖົມຢູ່ບ້ານທາດຫຼວງ ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ |
| ແຕ່ປີ 1992 - ປີ 1995 | ຮຽນມັດທະຍົມຢູ່ໜອງບອນ ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ |
| ແຕ່ປີ 1995 - ປີ 1998 | ຮຽນອຸດົມຢູ່ໂຮງຮຽນອຸດົມ ວຽງຈັນ |
| ແຕ່ ປີ 1998 - ປີ 2003 | ສຶກສາຢູ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ |
| ແຕ່ປີ 2003 - ປີ 2008 | ເຮັດວຽກຢູ່ສານທະຫານຂັ້ນສູງ ກະຊວງປ້ອງກັນປະເທດ |
| ແຕ່ປີ 2008 - ປັດຈຸບັນ | ເຮັດວຽກຢູ່ສານທະຫານພາກກາງ |
| ແຕ່ປີ 2014-2017 | ຮຽນປະລິນຍາໂທຢູ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ |
| ເບີໂທລະສັບ: | 020 56099993 |

# ແບບສອບຖາມ

**ຮຽນ**: ບັນດາທ່ານທີ່ນັບຖື.

**ເລື່ອງ**: ຂໍຂໍ້ມູນປະກອບການຂຽນວິທະຍານິພົນຫົວຂໍ້: **ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ.**

ຂ້າພະເຈົ້າ ທ້າວ ສິງເພັດ ວໍລະຈິດ ສັງກັດຢູ່ສານປະຊາຊົນພາກກາງ ແລະ ກຳລັງສຶກສາປະລິນຍາໂທສາຂານິຕິສາດ ທີ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິ ທະຍາໄລແຫ່ງຊາດ ຮຸ່ນທີ 6 ຊຶ່ງຢູ່ໃນໄລຍະຂອງການຂຽນວິທະຍານິພົນ (ບົດຈົບຊັ້ນ) ຫົວຂໍ້: **ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ.** ຂໍຖືເປັນກຽດຮຽນສະເໜີມາຍັງທ່ານໄດ້ຊ່ວຍປະກອບຄຳຄິດເຫັນໃສ່ຂໍ້ ຄວາມທີ່ທ່ານເຫັນສົມຄວນ ໂດຍການໝາຍ (√) ໃສ່ຊ່ອງຫວ່າງຕາມແບບສອບຖາມນີ້ ເພື່ອຈະໄດ້ນຳເຂົ້າເປັນບ່ອນອີງໃນການຂຽນວິທະຍານິພົນດັ່ງລຸ່ມນີ້:

## I. ຄຸນລັກສະນະທົ່ວໄປຂອງຜູ່ຕອບແບບສອບຖາມ

1. ເພດ ຊາຍ ( ) ຍິງ ( )
2. ອາຍຸ

   25 -35 ປີ ( ) 36 -45 ປີ ( ) 46 – 55 ປີ ( ) ຫຼາຍກວ່າ 56 ປີ ( )
3. ລະດັບວິຊາສະເພາະ

   ຊັ້ນຕົ້ນ ( ) ຊັ້ນກາງ ( ) ຊັ້ນສູງ ( )

   ປະລິນຍາຕີ ( ) ປະລິນຍາໂທ ( ) ປະລິນຍາເອກ ( )
4. ວິຊາສະເພາະທີ່ຮຽນມາ

   ນິຕິສາດ ( ) ລັດຖະສາດ ( ) ( )ອື່ນໆ (ກາລຸນາບອກແຈ້ງ)..............................
5. ປະສົບການເຮັດວຽກ

   2-10 ປີ ( ) 11 - 15 ປີ ( ) 16 - 20 ປີ ( ) 21 - 25 ປີ ( )

   ຫຼາຍກວ່າ 26 ປີ
6. ບ່ອນປະຈຳການຂອງຜູ້ຕອບແບບສອບຖາມ

   1). ຄະນະສານແພ່ງ ( )

   2). ຄະນະສານຄອບຄົວ ( )

   3). ອື່ນໆ ( )
7. ຜູ້ຕອບແບບສອບຖາມແມ່ນ

   1) ຜູ້ພິພາກສາ ( )

   2) ຜູ້ຊ່ວຍຜູ້ພິພາກສາ ( )

   3) ພະນັກງານວິຊາການ ( )

   4) ຜູ່ອື່ນໆ…………………………………. ( )

## II. ທັດສະນະຜູ້ຕອບແບບສອບຖາມ ກ່ຽວກັບການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານ ປະຊາຊົນພາກກາງ

(ຄຳຕອບ ຫ້ອງລະດັບ 5 ແມ່ນເຫັນດີສຸດ, ລະດັບ 4 ເຫັນດ້ຫຼາຍ, ລະດັບ 3 ປານກາງ, ລະດັບ 2 ໜ້ອຍ ແລະ ລະດັບ 1 ໜ້ອຍທີ່ສຸດ)

| ລດ | ເນື້ອໃນຄຳຖາມ | 5 | 4 | 3 | 2 | 1 |
|---|---|---|---|---|---|---|
| **1. ຂັ້ນຕອນ, ສາເຫດ ແລະ ຂອບເຂດຂອງການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຢູ່ສານປະຊາຊົນພາກ** | | | | | | |
| 1 | ທ່ານຄິດວ່າ ການຮັບເອົາຄະດີ ມາພິຈາລະນາເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກກາງ ມີຫຼາຍປານໃດ? | | | | | |
| 2 | ທ່ານຄິດວ່າການຂໍລົບລ້າງ ທີ່ຍື່ນມາສານປະຊາຊົນພາກກາງ ທາງດ້ານກົດໝາຍ ຫຼື ທາງດ້ານອື່ນ ອັນໃດຫຼາຍກວ່າກັນ (ເລືອກໄດ້ 1 ຄຳຕອບ ລະຫວ່າງ 2.1 ຫຼື 2.2) | | | | | |
| 2.1 | ທາງດ້ານກົດໝາຍ | | | | | |
| 2.2 | ບໍ່ແມ່ນທາງດ້ານກົດໝາຍ | | | | | |
| 3 | ທ່ານຄິດວ່າຜ່ານມາ ສານປະຊາຊົນພາກກາງ ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ ຖືກຕ້ອງຕາມລະບຽບການຂໍລົບລ້າງ ມີຫຼາຍປານໃດ? | | | | | |
| 4 | ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມກຳນົດເຫດການຂອງຄະດີ ບໍ່ຊັດເຈນມີຫຼາຍປານໃດ? | | | | | |
| 5 | ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມນຳໃຊ້ກົດໝາຍບໍ່ຊັດເຈນມີຫຼາຍປານໃດ? | | | | | |
| 6 | ຜ່ານມາການຂໍລົບລ້າງທາງດ້ານກົດໝາຍ ຍ້ອນສານຂັ້ນລຸ່ມລະເມີດລະບຽບການດຳເນີນຄະດີ ມີຫຼາຍປານໃດ? | | | | | |
| 7 | ຜ່ານມາ ມີຫຼາຍຄະດີປານໃດ ທີ່ບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ແລະ ສານຂັ້ນລົບລ້າງຈະພິຈາລະນາ ໃຫ້ບໍ່ໄດ້? | | | | | |
| 8 | ຜ່ານມາການຄົ້ນຄວ້າຄະດີສຳເລັດ ພາຍໃນກຳນົດເວລາ ສາມເດືອນ ມີຫຼາຍປານໃດ? | | | | | |
| 9 | ຜ່ານມາມີບໍການຄົ້ນຄວ້າຄະດີບໍ່ສຳເລັດພາຍໃນ ສາມເດືອນ ແລະ ມີການຕໍ່ກຳນົດເວລາ? | | | | | |
| 10 | ຜ່ານມາມີຫຼາຍຄະດີປານໃດ ທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ໃນທີ່ປະຊຸມສານ? | | | | | |
| 11 | ຜ່ານມາມີຫຼາຍຄະດີປານໃດ ທີ່ຮ້ອງຂໍລົບລ້າງໃຫ້ສານປະຊາຊົນພາກກາງຕີຄວາມໝາຍຂອງເຫດການ? | | | | | |
| 12 | ຜ່ານມາມີຫຼາຍຄະດີປານໃດ ທີ່ການຮ້ອງຂໍໃຫ້ພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງ ໄດ້ຮ້ອງຂໍໃຫ້ມີການພິຈາລະນາກ່ຽວກັບການນຳໃຊ້ມາດຕາກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ? | | | | | |

| | | | | | | |
|---|---|---|---|---|---|---|
| 13 | ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມ ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ ມີຫຼາຍປານໃດ? | | | | | |
| 14 | ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ ມີຫຼາຍປານໃດ? | | | | | |
| 15 | ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ແລ້ວສົ່ງຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາ ຄືນໃໝ່ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ ມີຫຼາຍປານໃດ? | | | | | |
| 16 | ຄຳພິພາກສາຂອງສານປະຊາຊົນພາກກາງ ທີ່ລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີ ໃຫ້ສານໃດສານໜຶ່ງ ພິຈາລະນາຄືນໃໝ່ ມີຫຼາຍປານໃດ? | | | | | |
| 17 | ທ່ານຄິດວ່າ ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ ມີຫຼາຍປານໃດ? | | | | | |
| **2** | **ບັນຫາ ແລະ ອຸປະສັກ ທີ່ເກີດຈາກການພິຈາລະນາຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກກາງ** | | | | | |
| 18 | ທ່ານຄິດວ່າ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ທີ່ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແຕ່ບໍ່ອະທິບາຍເຫດຜົນຢ່າງພຽງພໍ ພາໃຫ້ມີບັນຫາໃນການພິຈາລະນາຂອງສານປະຊາຊົນພາກກາງລະດັບໃດ? | | | | | |
| 19 | ທ່ານຄິດວ່າຫາກຄູ່ຄວາມມີການຂໍລົບລ້າງເນື້ອຄະດີ ຕໍ່ສານປະຊາຊົນພາກກາງ ຈະພາໃຫ້ມີບັນຫາລະດັບໃດ? | | | | | |
| 20 | ຜ່ານມາບັນຫາການຂໍລົບລ້າງ ເພື່ອໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍບໍ່ອະທິບາຍເຫດຜົນຊັດເຈນ ພາໃຫ້ມີບັນຫາໃນການພິຈາລະນາລະດັບໃດ? | | | | | |
| 21 | ການ ທີ່ພະນັກງານໄອຍະການປະຊາຊົນ ບໍ່ຄົ້ນ ຄວ້າ, ກວດກາສຳນວນຄະດີໃຫ້ສຳເລັດພາຍ ໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວສົ່ງຄືນໃຫ້ສານຂັ້ນລົບລ້າງພິຈາລະນາ ເປັນບັນຫາໃນລະດັບໃດ? | | | | | |
| 22 | ທ່ານຄິດວ່າ ການເພີ່ມຂຶ້ນຂອງຈຳນວນຄະດີແພ່ງຂອງສານຂັ້ນລົບລ້າງຢູ່ສານປະຊາຊົນພາກກາງ ພາໃຫ້ເກີດບັນຫາ ລະດັບໃດຕໍ່ການດຳເນີນຄະດີໃຫ້ທັນກັບໄລຍະເວລາ? | | | | | |
| 23 | ທ່ານຄິດວ່າ ການທີ່ສານຂັ້ນລົບລ້າງພິພາກສາ ຕາມສຳນວນຄະດີທາງດ້ານກົດ ໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກຫາກບໍ່ຈຳເປັນ ຈະເປັນບັນຫາຕໍ່ການດຳເນີນຄະດີລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| 24 | ໃນເວລາພິຈາລະນາຄະດີເປັນຂັ້ນລົບລ້າງ ຫາກຄູ່ຄວາມບໍ່ໄດ້ຂຽນຄຳຮ້ອງຂໍລົບລ້າງ ແຕ່ໄດ້ຂໍໃຫ້ສານພິຈາລະນາບັນຫາໃໝ່ ເປັນບັນຫາ ແລະ ອຸປະສັກໃນການດຳເນີນຄະດີລະດັບໃດ? | | | | | |

**ທ່ານຍັງມີຂໍ້ຄິດເຫັນຫຍັງຕື່ມ ກ່ຽວກັບການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກ ກາງ**

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

**ຈົບ**

**ຂໍຂອບໃຈຫຼາຍໆທີ່ໃຫ້ຂໍ້ມູນ**

**ຂໍອວຍພອນໄຊໃຫ້ທ່ານຈົ່ງໂຊກດີ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ**

**ຄຳຖາມສຳພາດ**

**ຮຽນ**: ບັນດາທ່ານທີ່ນັບຖື.

**ເລື່ອງ**: ຂໍຂໍ້ມູນປະກອບການຂຽນວິທະຍານິພົນຫົວຂໍ້: **ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ.**

ຂ້າພະເຈົ້າ ທ້າວ ສິງເພັດ ວໍລະຈິດ ສັງກັດຢູ່ສານປະຊາຊົນພາກກາງ ແລະ ກຳລັງສຶກສາປະລິນຍາໂທສາຂານິຕິສາດ ທີ່ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິ ທະຍາໄລແຫ່ງຊາດ ຮຸ່ນທີ 6 ຊຶ່ງຢູ່ໃນໄລຍະຂອງການຂຽນວິທະຍານິພົນ (ບົດຈົບຊັ້ນ) ຫົວຂໍ້: **ການພິຈາລະນາການຂໍລົບລ້າງຄະດີແພ່ງຂອງສານປະຊາຊົນພາກກາງ.** ຂໍຖືເປັນກຽດຮຽນສະເໜີມາຍັງທ່ານໄດ້ຊ່ວຍປະກອບຄຳຄິດເຫັນໃສ່ຂໍ້ ຄວາມທີ່ທ່ານເຫັນສົມຄວນ ໂດຍການຕອບຄຳ ຖາມລຸ່ມນີ້ ເພື່ອຈະໄດ້ນຳເຂົ້າເປັນບ່ອນອີງໃນການຂຽນວິທະຍານິພົນ ດັ່ງລຸ່ມນີ້:

1). ຂັ້ນຕອນ, ສາເຫດ ແລະ ຂອບເຂດຂອງການພິຈາລະນາການຂໍລົບລ້າງຄະດີແພ່ງ ເປັນຂັ້ນລົບລ້າງ ຢູ່ສານປະຊາຊົນພາກ ມີຄືແນວໃດ?

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

2). ບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານປະຊາຊົນພາກ ກາງ ມີສາເຫດມາຈາກໃສ?

..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................

3). ວິທີການແກ້ໄຂບັນຫາ ແລະ ອຸປະສັກ ທີ່ເກີດຈາກການດຳເນີນຄະດີແພ່ງເປັນຂັ້ນລົບລ້າງຂອງສານ ປະຊາຊົນພາກ ທີ່ມີປະສິດທິພາບ ຈະດຳເນີນໄປຄືແນວໃດ?

..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................
..............................................................................................................................

**ຈົບ**

**ຂໍຂອບໃຈຫຼາຍໆທີ່ໃຫ້ຂໍ້ມູນ**

**ຂໍອວຍພອນໄຊໃຫ້ທ່ານຈົ່ງໂຊກດີ**